# ຄຳນຳ

ປື້ມເຫຼັ້ມນີ້ປະກອບຄຳຖາມຢູ່ດ້ວຍກັນເຖິງ 73 ຄຳຖາມ ຊຶ່ງລ້ວນ
ແຕ່ເປັນຄຳຖາມທີ່ທຸກຄົນມີຄວາມສົນໃຈ ໃນເຣື່ອງຂອງພຣະເຈົ້າ
ຄວາມເຊື່ອຖື ແລະການຊ່ອຍໃຫ້ລອດພົ້ນຂອງພຣະເຢຊູຄຣິສ
ເພື່ອທຸກຄົນທີ່ຕ້ອງການຈະຮັບເອົາພຣະເຢຊູຄຣິດ ເປັນພຣະຜູ້
ຊ່ອຍໃຫ້ລອດພົ້ນນັ້ນສົມຄວນທີ່ຈະຮຽນຮູ້ ແລະເຂົ້າໃຈ ກ່ອນທີ່
ຈະມີການຕັດສິນໃຈຈະຮັບເອົາພຣະອົງ. ເປັນຄຳຖາມທີ່ໃຫ້ຄຳ
ຕອບໂດຍອີງໃສ່ພຣະທັມຄຳສອນຂອງ
ພຣະຜູ້ເປັນເຈົ້າ. ເປັນປະໂຫຍດສຳຣັບການສິດສອນຜູ້ທີ່ເຊື່ອໃໝ່
ແລະເປັນການຟື້ນຟູຄວາມຮັບຮູ້ໃນຄວາມເຊື່ອຂອງຄຣິສຕຽນ
ທຸກຄົນ.  ສຳຣັບຄຳຕອບ ທ່ານອາດສາມາດພົບໄດ້ໃນຫລາຍໆ
ຫົວຂໍ້ພຣະຄຳພີ  ແຕ່ຂ້າພະເຈົ້າໄດ້ນຳເອົາບາງຂໍ້ເພື່ອທ່ານຈະ
ສາມາດນຳໄປສຶກສາ ແລະຄົ້ນຄວ້າຕື່ມ.  ຫາກທ່ານມີຄວາມສົນ
ໃຈກ່ຽວກັບເລື້ອງຂອງພຣະເຈົ້າຢ່າງແທ້ຈິງ ຂ້າພະເຈົ້າ ຂໍ
ແນະນຳທ່ານໃຫ້ສຶກສານຳຄຣິສຕະຈັກທີ່ຢູ່ໃກ້ບ້ານທ່ານ ແລະ
ສິ່ງສຳຄັນ ຄືທ່ານຄວນມີປື້ມພຣະຄຳພີໄວ້ເປັນຂອງຕົນເອງ
ແລະໝັ່ນສຶກສາໄປນຳແຕ່ລະມື້.  ຄວາມເຂົ້າໃຈ ຈະເຮັດໃຫ້ທ່ານ
ບໍ່ເປັນຄົນທີ່ເຊື່ອງົມງວາຍ ຫລືເຊື່ອຕາມຄົນອື່ນ ຫລືເຊື່ອໄປຕາມ
ບ້ານຕາມເມືອງ ແຕ່ເຊື່ອເພາະທ່ານເຂົ້າໃຈ ໃນເຣື້ອງຂອງພຣະ
ເຈົ້າ ດ້ວຍຕົວທ່ານເອງ.

ສຈ. ດຣ. ເຈມສ໌ ອຸດົມ



# ສາຣະບານ

ພຣະເຈົ້າ
ມະນຸດແລະຄວາມຜິດບາບ
ໂທດທັນແຫ່ງຄວາມຜິດບາບ
ພຣະເຢຊູຄຣິດຊົງເປັນພຣະຜູ້ຊ່ອຍໃຫ້ລອດ
ຄວາມລອດພົ້ນ
ກິຈການຂອງພຣະວິນຍານບໍຣິສຸດ
ການອະທິຖານ
ພິທີສິນຕ່າງໆ
ຄຣິສຕະຈັກ
ພຣະເຢຊູຄຣິດ ຈະສະເດັດກັບມາອີກ

# ພຣະເຈົ້າ

## 1. ພຣະເຈົ້າຄືໃຜ?

ພຣະເຈົ້າ ຄືຜູ້ຊົງຣິດອຳນາດທີ່ສຸດ ເປັນຜູ້ຊົງສ້າງທ້ອງຟ້າ ແລະແຜ່ນດິນ ພຣະອົງຊົງເປັນຜູ້ສ້າງມະນຸດ ແລະທຸກສິ່ງທີ່ມີຊີວິດທັງປວງ. ພຣະອົງຊົງເປັນຜູ້ຄອບຄອງສິ່ງທັງຫມົດໃນຈັກກະວານ. ພຣະອົງຊົງເປັນເຈົ້າຊີວິດເໜືອສິ່ງອື່ນໃດໃນໂລກ.

**ປະຖົມການ 1:1** *"ເມື່ອພຣະເຈົ້າຊົງເລີ້ມຕົ້ນນິລະມິດສ້າງແຜ່ນດິນ ແລະສັພສິ່ງໃນທ້ອງຟ້ານັ້ນ"*

**ໂກໂລຊາຍ 1:16-17** *"ເພາະວ່າໃນພຣະອົງ ພຣະເຈົ້າໄດ້ຊົງສ້າງສັພສິ່ງຂຶ້ນ ທັງໃນທ້ອງຟ້າແລະເທິງແຜ່ນດິນໂລກ ສິ່ງທີ່ຕາເຫັນໄດ້ ແລະທີ່ເຫັນບໍ່ໄດ້ ຈະເປັນພຣະທີ່ນັ່ງຫລືເປັນອານຸພາບ ເປັນຜູ້ປົກຄອງຫລືຜູ້ມີອຳນາດ ສິ່ງທັງປວງເຫລົ່ານີ້ແມ່ນພຣະເຈົ້າໄດ້ສ້າງຂຶ້ນໂດຍທາງພຣະອົງແລະສຳລັບພຣະອົງ ພຣະອົງຊົງເປັນຢູ່ກ່ອນສິ່ງສາຣະພັດ ແລະສິ່ງສາຣະພັດນັ້ນເປັນຣະບຽບຢູ່ໂດຍພຣະອົງ"*

**ພຣະນິມິດ 4:11** *"ຂ້າແດ່ອົງພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າຂອງຂ້າພຣະອົງທັງຫລາຍ ພຣະອົງຊົງສົມຄວນທີ່ຈະໄດ້ຮັບຄຳສັຣເສີນ ພຣະກຽດ ແລະຣິດເດດ ເພາະວ່າພຣະອົງໄດ້ຊົງສ້າງສັພສິ່ງທັງປວງ ແລະສັພສິ່ງທັງປວງນັ້ນກໍຊົງສ້າງຂຶ້ນແລ້ວ ແລະດຳຣົງຢູ່ຕາມຊອບພຣະທັຍພຣະອົງ"*



## 2. ພຣະເຈົ້າມີຫຼາຍອົງບໍ?

ພຣະເຈົ້າອົງທ່ຽງແທ້ມີແຕ່ອົງດຽວເທົ່ານັ້ນ.

**ເອຊາຢາ 45:22** *"ມະນຸດທຸກມຸມໂລກເອີຍ ຈົ່ງຄືນມາຫາເຮົາ ແລະຮັບເອົາການຊ່ອຍໃຫ້ພົ້ນເຖີດ ເຮົາເປັນພຣະເຈົ້າແຕ່ອົງດຽວ ບໍ່ມີພຣະເຈົ້າອົງອື່ນ"*

**1 ຕີໂມທຽວ 2:5** *"ດ້ວຍເຫດວ່າມີພຣະເຈົ້າອົງດຽວ ແລະມີຜູ້ກາງແຕ່ຜູ້ດຽວລະຫວ່າງພຣະເຈົ້າກັບມະນຸດ ຄືພຣະເຢຊູຄຣິດຜູ້ຊົງສະພາບເປັນມະນຸດ"*

**ອົພຍົບ 20:3-5** *"ພວກເຈົ້າຢ່າມີພຣະອື່ນ ນອກຈາກເຮົາ ພວກເຈົ້າຢ່າເຮັດຮູບເຄົາຣົບສຳລັບຕົນ ຫລືຮູບສິ່ງນຶ່ງສິ່ງໃດທີ່ມີຢູ່ໃນຟ້າສວັນ ໃນແຜ່ນດິນຫລືໃນລຸ່ມແຜ່ນດິນຢ່າຂາບໄຫວ້ຮູບເຫລົ່ານັ້ນ ເພາະວ່າເຮົາເປັນພຣະຜູ້ເປັນເຈົ້າຂອງພວກເຈົ້າ ແລະເປັນພຣະເຈົ້າຜູ້ຫວງແຫນພວກເຈົ້າ ເຮົາຈະລົງໂທດລູກຫລານຂອງຜູ້ທີ່ຊັງເຮົາເຖິງສາມສີ່ຊົ່ວອາຍຸຄົນ"*

## 3. ເມື່ອຕົ້ນເດີມນັ້ນ ພຣະເຈົ້າຊົງມີຊີວິດເປັນຢູ່ຢ່າງໃດ?

ພຣະອົງຊົງເປັນຜູ້ຊົງມີຊີວິດຢູ່ດ້ວຍພຣະອົງເອງ ພຣະອົງຊົງເປັນຢູ່ຊົ່ວນິຣັນ ບໍ່ມີເບື້ອງຕົ້ນແລະບໍ່ມີເບື້ອງປາຍ ພຣະອົງຊົງດຳຣົງຢູ່ກ່ອນສິ່ງສາຣະພັດທັງປວງ.

**ເພງສັຣເສີນ 90:2** *"ພຣະອົງຊົງເປັນພຣະເຈົ້າອົງຊົ່ວນິຣັນດອນ ບໍ່ມີກົກແລະບໍ່ມີປາຍ ກ່ອນສ້າງພູທັງຫລາຍແລະພື້ນແຜ່ນດິນໂລກ"*

**ເອຊາຢາ 44:6** *"ພຣະຜູ້ເປັນເຈົ້າອົງມີອຳນາດຍິ່ງໃຫຍ່ ອົງຊົງໄຖ່ແລະຄຸ້ມຄອງອິສຣາເອນກ່າວດັ່ງນີ້, "ເຮົາເປັນຜູ້ຕົ້ນ ເປັນຜູ້ປາຍ ເປັນພຣະຜູ້ເປັນເຈົ້າແຕ່ຜູ້ດຽວ ບໍ່ມີພຣະເຈົ້າອົງອື່ນນອກຈາກເຮົາ"*

## 4. ມີຫຍັງແດ່ ທີ່ສະແດງວ່າພຣະເຈົ້າຍິ່ງໃຫຍ່?

ພຣະອົງຊົງສະຖິດຢູ່ທຸກຫົນທຸກແຫ່ງໃນເວລາດຽວກັນ, ພຣະອົງຊົງຊາບທຸກສິ່ງທຸກຢ່າງ, ພຣະອົງຊົງມີຣິດທານຸພາບສູງສຸດ, ຊຶ່ງຫມາຍຄວາມວ່າບໍ່ມີສິ່ງໃດທີ່ພຣະອົງຈະກະທຳບໍ່ໄດ້. ພຣະອົງຊົງເປັນຜູ້ສ້າງທຸກສິ່ງໃນໂລກແລະສ້າງມະນຸດ.

**ເພງສັຣເສີນ 139:1-10** *"ຂ້າແດ່ພຣະຜູ້ເປັນເຈົ້າ ພຣະອົງໄດ້ກວດເບິ່ງຂ້າພຣະອົງແລະຮູ້ຈັກຂ້າພຣະອົງດີ ພຣະອົງຊົງຮູ້ຈັກທຸກຢ່າງທີ່ຂ້າພຣະອົງກະທຳ ເຖິງວ່າຢູ່ໄກແສນໄກ ພຣະອົງກໍຍັງເຂົ້າໃຈຄວາມນຶກຄິດຂອງຂ້າພຣະອົງ. ພຣະອົງຊົງເຫັນຂ້າພຣະອົງ ໃນເວລາທີ່ຂ້າພຣະອົງກຳລັງເຮັດວຽກ ຫລືພັກຜ່ອນ ພຣະອົງຮູ້ຈັກການກະທຳທຸກຢ່າງຂອງຂ້າພຣະອົງ ແມ່ນວ່າກ່ອນຂ້າພຣະອົງຈະເວົ້າ ພຣະອົງກໍຮູ້ລ່ວງຫນ້າແລ້ວວ່າຂ້າພຣະອົງຈະເວົ້າຫຍັງ ພຣະອົງຊົງສະຖິດຢູ່ອ້ອມຂ້າງອ້ອມແອວຂ້າພຣະອົງ ພຣະອົງຊົງຄຸ້ມຄອງຂ້າພຣະອົງດ້ວຍອຳນາດຂອງພຣະອົງ ຄວາມຮູ້ຂອງພຣະອົງມີເຫລືອຫລາຍຈົນຂ້າພຣະອົງບໍ່ສາມາດເຂົ້າໃຈໄດ້ ຊຶ່ງເປັນການລຶກລັບທີ່ສຸດທີ່ຂ້າພຣະອົງຈະເຂົ້າໃຈໄດ້ ຂ້າພຣະອົງຈະຫນີຈາກພຣະວິຫານຂອງພຣະອົງໄປຢູ່ທາງໃດ ຂ້າພຣະອົງຈະຫນີຈາກພຣະພັກຂອງພຣະອົງໄປບ່ອນໃດ ຖ້າວ່າຂ້າພຣະອົງຂຶ້ນໄປເທິງຟ້າສວັນ ພຣະອົງກໍຢູ່ທີ່ນັ້ນ ຖ້າວ່າຂ້າພຣະອົງລົງໄປພິພົບຄົນຕາຍ ພຣະອົງກໍຢູ່ທີ່ນັ້ນ ຖ້າວ່າຂ້າພຣະອົງບິນໄປຈົນສຸດທາງທິດຕາເວັນອອກ ຫລືຢູ່ຫ່າງໄກທີ່ສຸດໃນທິດຕາເວັນຕົກພຣະອົງກໍຢູ່ທີ່ນັ້ນເພື່ອນຳຫນ້າຂ້າພຣະອົງໄປ ແລະພຣະອົງກໍຊົງສະຖິດຢູ່ທີ່ນັ້ນເພື່ອຊ່ອຍເຫລືອຂ້າພຣະອົງ"*



**ມັດທາຍ 28:18** *"ພຣະເຢຊູຈຶ່ງສະເດັດມາໃກ້ແລ້ວຊົງກ່າວກັບເຂົາວ່າ, "ອຳນາດທັງຫມົດໃນສວັນແລະທີ່ແຜ່ນດິນໂລກກໍດີຊົງມອບໃຫ້ແກ່ເຮົາແລ້ວ"*

**1 ຕີໂມທຽວ 1:17** *"ພຣະກຽດແລະພຣະຣັສມີຈົ່ງມີແກ່ພຣະມະຫາກະສັດ ຜູ້ຊົງພຣະຈະເຣີນຢູ່ເປັນນິດ ຜູ້ຊົງເປັນອົງອຳມະຕະຊຶ່ງບໍ່ໄດ້ປາກົດພຣະອົງ ຜູ້ຊົງເປັນພຣະເຈົ້າແຕ່ອົງດຽວສືບໆໄປເປັນນິດ"*

**ລູກາ 1:37** *"ເພາະວ່າຝ່າຍພຣະເຈົ້າບໍ່ມີສິ່ງໃດທີ່ເຫລືອພຣະກຳລັງ"*

## 5. ພຣະເຈົ້າຊົງມີພຣະລັກສະນະຢ່າງໃດແດ່?

ພຣະເຈົ້າຊົງເປັນຜູ້ບໍຣິສຸດທີ່ສຸດ, ດີທີ່ສຸດ, ຍຸດຕິທັມທີ່ສຸດ, ຊົງປະກອບດ້ວຍຄວາມຮັກ, ຄວາມເມດຕາ, ແລະພຣະຄຸນຂອງພຣະອົງບໍ່ມີຂອບເຂດຈຳກັດເລີຍ.

**1 ເປໂຕ 1:15** *"ແຕ່ເພາະພຣະອົງຜູ້ຊົງເອີ້ນທ່ານທັງຫລາຍນັ້ນບໍຣິສຸດ ຝ່າຍພວກທ່ານຈົ່ງກາຍເປັນຜູ້ບໍຣິສຸດໃນກິຣິຍາວາຈາທຸກປະການເຫມືອນກັນ"*

**ມັດທາຍ 5:8** *"ຜູ້ໃດມີໃຈບໍຣິສຸດກໍເປັນສຸກ ເພາະວ່າຜູ້ນັ້ນຈະໄດ້ເຫັນພຣະເຈົ້າ"*

**ເພງສັດເສີນ 89:14** *"ຄວາມຊອບທັມແລະຄວາມຍຸດຕິທັມ ເປັນຮາກຖານແຫ່ງບັນລັງຂອງພຣະອົງ ຄວາມຮັກໝັ້ນຄົງ ແລະຄວາມສັດສຸດຈະຣິດເດີນນຳໜ້າພຣະອົງ"*

**ອົພຍົບ 34:6** *"ແລ້ວພຣະຜູ້ເປັນເຈົ້າໄດ້ສະເດັດຜ່ານໜ້າໂມເຊໄປ ແລະຊົງກ່າວວ່າ, "ພຣະຜູ້ເປັນເຈົ້າ ພຣະຜູ້ເປັນເຈົ້າແມ່ນພຣະເຈົ້າຜູ້ເຕັມປ່ຽມໄປດ້ວຍຄວາມເມດຕາກະຣຸນາ ຜູ້ບໍ່ໂກດງ່າຍ ຜູ້ສະແດງຄວາມຮັກໝັ້ນຄົງ ແລະຄວາມສັດຊື່"*

## 6. ພຣະເຈົ້າມີຮູບກາຍແບບໃດ?

ພຣະເຈົ້າບໍ່ມີຮູບກາຍແບບໃດເລີຍ ພຣະອົງຊົງເປັນພຣະວິນຍານ. ດັ່ງນັ້ນຜູ້ທີ່ຈະນະມັສການພຣະອົງຕ້ອງນະມັສການດ້ວຍຈິດວິນຍານ ແລະຄວາມຈິງ. ພຣະອົງຊົງເປັນຢູ່ດ້ວຍພຣະອົງເອງ, ແລະມະນຸດເຮົາບໍ່ເຄີຍມີໃຜໄດ້ເຫັນພຣະເຈົ້າເລີຍ ບໍ່ວ່າໃນສະໄໝໃດໆກໍຕາມ.

**ໂຢຮັນ 1: 18** *"ບໍ່ມີໃຜໄດ້ເຫັນພຣະເຈົ້າຈັກເທື່ອ ແຕ່ພຣະບຸດອົງດຽວ ຜູ້ຊົງເປັນພຣະເຈົ້າຊຶ່ງຊົງສະຖິດຢູ່ໃນພຣະຊວງຂອງພຣະບິດາ ພຣະອົງນັ້ນແຫລະ, ໄດ້ຊົງສະແດງໃຫ້ຮູ້"*

**ໂຢຮັນ 4:24** *"ພຣະເຈົ້າຊົງເປັນພຣະວິນຍານ ແລະຜູ້ທີ່ນະມັສການພຣະອົງຕ້ອງນະມັສການດ້ວຍຈິດວິນຍານແລະຄວາມຈິງ"*

## 7. ພຣະເຈົ້າມີຊື່ວ່າແນວໃດ?

ພຣະເຈົ້າມີຊື່ວ່າ "ພຣະເຢໂຮວາ" ແລະຊົງເອີ້ນອີກວ່າ "ພຣະບິດາຜູ້ຊົງສະຖິດໃນສະຫວັນ"



**ເພງສັດເສີນ 83:18** *"ໃຫ້ເຂົາທັງຫລາຍຮູ້ວ່າພຣະອົງຜູ້ດຽວ ຜູ້ຊົງພຣະນາມວ່າພຣະຜູ້ເປັນເຈົ້າ ຊົງເປັນຜູ້ສູງສຸດເຫນືອແຜ່ນດິນໂລກທັງສິ້ນ"*

**ມັດທາຍ 6:9** *"ເຫດສັນນີ້ ພວກທ່ານຈົ່ງອ້ອນວອນຕາມຢ່າງນີ້ວ່າ, "ຂ້າແດ່ພຣະບິດາຂອງຂ້າພຣະອົງທັງຫລາຍ ຜູ້ຊົງສະຖິດໃນສວັນ ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ເຄົາຣົບບູຊາ"*

**ພຣະນາມຕ່າງໆຂອງພຣະເຈົ້າໃນພຣະຄຳພີ:**

ຄຳທີ່ໃຊ້ຢ່າງກວ້າງຂວາງທີ່ສຸດໃນພຣະຄຳພີເດີມຄື El (ເອລ) ຊຶ່ງແປວ່າ "ພຣະເຈົ້າແຫ່ງອິສຣາເອນ "

**ປະຖົມການ 33:20** *"ຢາໂຄບສ້າງແທ່ນບູຊາຂຶ້ນທີ່ນັ້ນ ແລະໃສ່ຊື່ວ່າ ເອນອີໂລເຮອິສຣາເອນ"*

ຈາກນັ້ນຄຳສັພດັ່ງກ່າວໄດ້ພັນແປມາໃຊ້ດັ່ງນີ້:

- ພາສາ ເຮັບເຣີ ເອີ້ນວ່າ: ເອລິມ (Elim) ເອໂລຮິມ (Elohim) ເອໂລອາ (Eloah)
- ພາສາ ກຣີກ ເອີ້ນວ່າ: ເທອອສ໌ (Theos)
- ພາສາ ລາຕິນ ເອີ້ນວ່າ: ເດອູສ໌ (Deus
- ພາສາ ອັງກິດເອີ້ນວ່າ: ກອດ (God)

ຕໍ່ໄປນີ້ເປັນຄຳທົ່ວໄປທີ່ໃຊ້ເອີ້ນຊື່ຂອງພຣະເຈົ້າ. ພຣະຄຳພີເດີມທີ່ເປັນພາສາເຮັບເຣີ ໄດ້ໃຊ້ຊື່ພຣະເຈົ້າວ່າ **ເອໂລຮິມ** ສເມີ. ພ້ອມດຽວກັນກໍຍັງມີຫລາຍຄຳສັພທີ່ນຳມາໃຊ້ເພື່ອເອີ້ນຊື່ຂອງພຣະເຈົ້າເຊັ່ນ:

- ເອລ-ເອລີໂຍນ (El-Elyon) ແປວ່າ "ພຣະເຈົ້າອົງສູງສຸດ"

**ເພງສັດເສີນ 78:35** "ເຂົາຣະລຶກວ່າພຣະເຈົ້າຊົງເປັນພຣະສີລາຂອງເຂົາ ແລະພຣະເຈົ້າອົງສູງສຸດເປັນພຣະຜູ້ໄຖ່ຂອງເຂົາ"

- ເອລ-ຊາດດາຍ (El-Shaddai) ແປວ່າ "ພຣະເຈົ້າຜູ້ຊົງຣິດ"

**ປະຖົມການ17:1** *"ເມື່ອອັບຣາມອາຍຸໄດ້ເກົ້າສິບເກົ້າປີ ພຣະຜູ້ເປັນເຈົ້າຊົງປາກົດໃຫ້ທ່ານເຫັນແລະກ່າວວ່າ, "ເຮົາເປັນພຣະເຈົ້າຜູ້ມີອຳນາດຍິ່ງໃຫຍ່ ຈົ່ງເຊື່ອຟັງເຮົາ ແລະປະພຶດແຕ່ຄວາມຊອບທັມຕລອດຊົ່ວຊີວິດຂອງເຈົ້າ"*

- ເຢໂຮວາຫລື ຢາເວ (Jehovah/Yahweh) "ຜູ້ຊົງເປັນຢູ່" ພາສາເຮັບເຣີແປວ່າ "ເປັນ, ຢູ່, ຄື".

**ອົພຍົບ 6:2-3** *"ພຣະເຈົ້າຊົງກ່າວແກ່ໂມເຊອີກວ່າ, "ເຮົາຄືພຣະຜູ້ເປັນເຈົ້າເຮົາໄດ້ປາກົດໃຫ້ແກ່ອັບຣາຮາມ, ແກ່ອີຊາກ, ແລະແກ່ຢາໂຄບ ເຫັນໃນຖານະເປັນພຣະເຈົ້າຜູ້ມີອຳນາດຍິ່ງໃຫຍ່ ແຕ່ເຮົາບໍ່ໄດ້ສຳແດງໃຫ້ເຂົາຮູ້ຈັກເຮົາໃນນາມພຣະຜູ້ເປັນເຈົ້າ"*

**ອົພຍົບ 3:13-16** *"ແລ້ວໂມເຊໄດ້ທູນຖາມພຣະເຈົ້າວ່າ, "ເມື່ອຂ້າພຣະອົງໄປເຖິງຊາວອິສຣາເອນ ແລະບອກເຂົາວ່າ ພຣະເຈົ້າແຫ່ງບັນພະບຸຣຸດຂອງພວກທ່ານໄດ້ສົ່ງຂ້າພະເຈົ້າມາຫາພວກທ່ານ ພວກເຂົາກໍຈະຖາມຂ້າພຣະອົງວ່າ ພຣະເຈົ້າອົງນັ້ນຊົງພຣະນາມວ່າແນວໃດ? ແລ້ວຂ້າພຣະອົງຈະຕອບເຂົາວ່າຈັ່ງໃດ? ຖ້າພຣະອົງບໍ່ບອກພຣະນາມຂອງພຣະອົງໃຫ້ຂ້າ ພຣະອົງຮູ້ເສັຽກ່ອນ"ພຣະເຈົ້າຈຶ່ງຊົງບອກໂມເຊວ່າ, "ເຮົາເປັນຜູ້ຊຶ່ງເຮົາເປັນ" ພຣະອົງຊົງກ່າວຕໍ່ໄປວ່າ, "ໃຫ້ເຈົ້າໄປບອກຊາວອິສຣາເອນວ່າ ຜູ້ຊົງພຣະນາມວ່າ "ເຮົາເປັນ" ໄດ້ສົ່ງຂ້າພະເຈົ້າມາຫາທ່ານທັງຫລາຍ" ພຣະເຈົ້າຍັງຊົງບອກໂມເຊອີກວ່າ, "ໃຫ້ເຈົ້າບອກຊາວອິສຣາເອນ ດັ່ງນີ້ ພຣະຜູ້ເປັນເຈົ້າແຫ່ງບັນພະບຸຣຸດຂອງທ່ານ ຄືພຣະເຈົ້າຂອງອັບຣາຮາມ, ພຣະເຈົ້າຂອງອີຊາກ, ແລະພຣະເຈົ້າຂອງຢາໂຄບ ໄດ້ສົ່ງຂ້າພະເຈົ້າມາຫາທ່ານທັງ*



*ຫລາຍ ອັນນີ້ແຫລະ, ແມ່ນນາມຂອງເຮົາ ຊື່ອັນນີ້ຈະບໍ່ປ່ຽນແປງຕລອດໄປເປັນນິດ ແຕ່ຈະເປັນຢູ່ຢ່າງນີ້ທຸກຊົ່ວອາຍຸຄົນ"*

ພ້ອມດຽວກັນຄຳນີ້ຍັງໄດ້ປສົມກັບຄຳອື່ນໆເພື່ອໃຫ້ມີຄວາມໝາຍກວ້າງອີກຄື:

- ເຢໂຮວາຢີເຣ (Jehovah Jire) ແປວ່າ "ພຣະເຈົ້າຜູ້ຊົງຈັດຕຽມ"

**ປະຖຸມການ 22:14** *"ອັບຣາຮາມໃສ່ຊື່ບ່ອນນັ້ນວ່າ "ພຣະຜູ້ເປັນເຈົ້າຊົງຈັດຫາໃຫ້" ແລະຈົນເຖິງທຸກວັນນີ້ຊາວເມືອງກໍຍັງເວົ້າຕໍ່ໆກັນມາວ່າ "ເທິງພູເຂົາຂອງພຣະຜູ້ເປັນເຈົ້າ ພຣະອົງຊົງຈັດຫາໃຫ້"*

- ເຢໂຮວາ ຣາຟາ (Jehovah Rapha) ແປວ່າ "ພຣະເຈົ້າຜູ້ຊົງປິ່ນປົວຮັກສາ"

**ອົພຍົບ 15:26** *ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ຖ້າພວກເຈົ້າເຊື່ອຟັງເຮົາຜູ້ເປັນພຣະຜູ້ເປັນເຈົ້າຂອງເຈົ້າ ຈົ່ງທຳໃນສິ່ງທີ່ເຮົາເຫັນວ່າຖືກຕ້ອງ ເອົາໃຈໃສ່ທຳຕາມພຣະບັນຍັດຂອງເຮົາ ແລະປະຕິບັດຕາມກົດບັນຍັດຂອງເຮົາທຸກຢ່າງ ເຮົາກໍຈະບໍ່ລົງໂທດພວກເຈົ້າດ້ວຍໂຣກໄພໄຂ້ເຈັບຕ່າງໆເຫມືອນຢ່າງທີ່ເຮົາໄດ້ນຳມາລົງໂທດຊາວເອຢິບນັ້ນ ເຮົານີ້ແຫລະ ເປັນຜູ້ປິ່ນປົວພວກເຈົ້າໃຫ້ດີ"*

- ເຢໂຮວານິດສີ (Jehovah Nissi) ແປວ່າ "ພຣະເຈົ້າຜູ້ເປັນທຸງຊັຍ"

**ອົພຍົບ 17:15** *"ແລ້ວໂມເຊໄດ້ສ້າງແທ່ນບູຊາອັນນຶ່ງຂຶ້ນເອີ້ນແທ່ນນັ້ນວ່າ, "ພຣະຜູ້ເປັນເຈົ້າຊົງເປັນທຸງຊັຍຂອງຂ້າພະເຈົ້າ" (ເຢໂຮວາ ນິສຊີ)*

- ເຢໂຮວາ ຊາໂລມ (Jehovah Shalom) ແປວ່າ "ພຣະເຈົ້າອົງສັນຕິສຸກ"

**ພວກຜູ້ປົກຄອງ 6:24** *"ແລ້ວກິເດໂອນໄດ້ສ້າງແທ່ນບູຊາໃຫ້ພຣະຜູ້ເປັນເຈົ້າຢູ່ທີ່ນັ້ນ ແລະໃສ່ຊື່ວ່າ "ພຣະຜູ້ເປັນເຈົ້າເປັນຄວາມສງົບສຸກ" ແທ່ນບູຊານີ້ຢູ່ໃນບ້ານໂອຟຣາ ແລະເປັນຂອງຊາວອາບີເອເຊີຈົນເທົ່າເຖິງທຸກວັນນີ້"*

- ເຢໂຮວາ ຊຳມາ (Jehovah Shammah) ແປວ່າ "ພຣະເຈົ້າຜູ້ຊົງສະຖິດຢູ່"

**ເອເຊກຽນ 48:35** *"ແທກຮອບນະຄອນນັ້ນໄດ້ນຶ່ງໝື່ນແປດພັນສອກ ຕັ້ງແຕ່ນີ້ໄປນະຄອນມີຊື່ວ່າ ພຣະຜູ້ເປັນເຈົ້າສະຖິດທີ່ນັ້ນ"*

-ນອກນີ້ຍັງມີຊື່ອື່ນອີກຄື ເຢໂຮວາ ຣາອາຫ໌ ແປວ່າ "ພຣະເຈົ້າຜູ້ລ້ຽງ" ເພງສັດເສີນ 23:1 ແລະ ເຢໂຮວາ ຊິດເຄນູ ແປວ່າ "ພຣະເຈົ້າຜູ້ເປັນຄວາມຊອບທັມຂອງເຮົາ" ເຢເຣມີຢາ 23:6

## 8. ພຣະຢາໂຮວາ ແປວ່າຫຍັງ?

ແປວ່າ ພຣະຜູ້ຊົງພຣະຊົນຢູ່ດ້ວຍພຣະອົງເອງ, ແລະຜູ້ຊົງພຣະຊົນຢູ່ຕລອດໄປເປັນນິດ.

**ອົພຍົບ 3:14** *"ພຣະເຈົ້າຈຶ່ງຊົງບອກໂມເຊວ່າ, "ເຮົາເປັນຜູ້ຊຶ່ງເຮົາເປັນ" ພຣະອົງຊົງກ່າວຕໍ່ໄປວ່າ, "ໃຫ້ເຈົ້າໄປບອກຊາວອິສຣາເອນວ່າ ຜູ້ຊົງພຣະນາມວ່າ "ເຮົາເປັນ" ໄດ້ສົ່ງຂ້າພະເຈົ້າມາຫາທ່ານທັງຫລາຍ"*

**1 ຕີໂມທຽວ 6:15-16** *"ຊຶ່ງພຣະເຈົ້າຜູ້ສເວີຍສຸກ ແລະຊົງອິດສູງສຸດແຕ່ພຣະອົງດຽວ ຊົງເປັນພຣະມະຫາກະສັດເໜືອ*



*ກະສັດທັງປວງ ແລະຊົງເປັນເຈົ້າເໜືອເຈົ້າທັງປວງ ຈະຊົງສະແດງໃຫ້ປາກົດຕາມເວລາກຳໜົດພຣະອົງຜູ້ດຽວຊົງເປັນອຳມະຕະ ແລະຊົງສະຖິດຢູ່ໃນຄວາມສວ່າງ ຊຶ່ງບໍ່ມີຄົນໃດຈະເຂົ້າໄປເຖິງ ເປັນອົງທີ່ມະນຸດບໍ່ໄດ້ເຫັນຈັກເທື່ອ ແລະບໍ່ສາມາດຈະເຫັນໄດ້ ພຣະກຽດ ແລະອິດທານຸພາບອັນຖາວອນ ຈົ່ງມີແກ່ພຣະອົງນັ້ນ ອາແມນ"*

# ມະນຸດ ແລະຄວາມຜິດບາບ

## 9. ເມື່ອພຣະເຈົ້າຊົງສ້າງໂລກນັ້ນ ງານເດັ່ນທີ່ສຸດຂອງພຣະອົງຄືຫຍັງ?

ຄືການສ້າງມະນຸດຄູ່ທຳອິດ ຊຶ່ງກາຍມາເປັນບັນພະບຸຣຸດຂອງເຮົາ. ພຣະອົງໄດ້ຊົງສ້າງມະນຸດຕາມແບບພຣະສາຍາຂອງພຣະອົງເອງ ແລະຈັດໃຫ້ຢູ່ໃນສວນເອເດັນ ຊົງມອບໃຫ້ຄອບຄອງສິ່ງທີ່ມີຊີວິດທັງໝົດທີ່ພຣະອົງຊົງສ້າງ.

**ປະຖົມການ 1:26-31** *"ດັ່ງນັ້ນ ພຣະເຈົ້າຈຶ່ງຊົງສ້າງມະນຸດໃຫ້ມີຮູບຮ່າງຄ້າຍຄືກັນກັບພຣະອົງ ພຣະອົງໄດ້ສ້າງຊາຍແລະຍິງ ຄັນສ້າງແລ້ວກໍຊົງອວຍພອນໃຫ້ແກ່ເຂົາວ່າ, "ຈົ່ງມີລູກເຕົ້າໃຫ້ມາກຫລາຍ ໃຫ້ເຊື້ອສາຍຂອງພວກເຈົ້າມີຢູ່ທົ່ວທຸກແຫ່ງເພື່ອຄຸ້ມຄອງໂລກເຮົາ ໃຫ້ພວກເຈົ້າມີອຳນາດເໜືອກວ່າປາ ນົກ ສັດປ່າ ແລະສັດເລືອຄານທຸກຊະນິດ "ພຣະເຈົ້າຊົງກ່າວຕໍ່ໄປວ່າ, "ສຳລັບພວກເຈົ້າເຮົາໄດ້ໃຫ້ພືດແລະໝາກໄມ້ທຸກຊະນິດເປັນອາຫານ ແຕ່ສຳລັບສັດປ່າ ສັດເລືອ*

*ຄານ ແລະຝູງນົກນັ້ນເຮົາໄດ້ໃຫ້ຫຍ້າເປັນອາຫານ" ແລ້ວສິ່ງນັ້ນກໍເກີດມີມາພຣະເຈົ້າຊົງທອດພຣະເນດສັພສິ່ງທີ່ຊົງນິລະມິດສ້າງກໍຊົງພໍພຣະທັຍຫລາຍ ມື້ຄືນຜ່ານໄປມື້ເຊົ້າຕ່າວມາ ແມ່ນມື້ທີ່ຫົກ"*

**ປະຖົມການ 2:7-25** " *ເມື່ອນັ້ນ ພຣະຜູ້ເປັນເຈົ້າໄດ້ເອົາດິນມາປັ້ນເປັນຮູບຄົນແລ້ວເປົ່າລົມຫາຍໃຈໃສ່ຮູດັງໃຫ້ມີຊີວິດ ຮູບປັ້ນນັ້ນກໍກັບກາຍເປັນຄົນທີ່ມີຊີວິດຈິດໃຈຕໍ່ມາ ພຣະຜູ້ເປັນເຈົ້າຊົງສ້າງສວັນຂຶ້ນແຫ່ງນຶ່ງ ໃນເອເດນທາງທິດຕາເວັນອອກ ເມື່ອສ້າງແລ້ວກໍຊົງເອົາຄົນທີ່ພຣະອົງໄດ້ປັ້ນນັ້ນມາອາສັຍຢູ່ໃນສວນນັ້ນ ພຣະອົງຊົງໄດ້ນິລະມິດໃຫ້ກົກໄມ້ເກີດຂຶ້ນ ຊຶ່ງມີໃບຂຽວງາມດີ ແລະຜົນລະໄມ້ກໍເປັນຫນ້າຢາກກິນ ໃນກາງສວນມີຕົ້ນໄມ້ພິເສດຢູ່ສອງຕົ້ນ ຄືຕົ້ນໄມ້ທີ່ໃຫ້ມີຊີວິດ ແລະຕົ້ນໄມ້ທີ່ໃຫ້ຮູ້ຈັກຄວາມດີ ແລະຄວາມຊົ່ວນອກນີ້ ຍັງມີແມ່ນ້ຳສາຍນຶ່ງໄຫລອອກຈາກເອເດນມາຊຸບລ້ຽງສວນນີ້ ແມ່ນ້ຳນີ້ແບ່ງອອກເປັນສີ່ສາຍ ສາຍທີ່ນຶ່ງຊື່ວ່າ ປີໂຊນ ຊຶ່ງໄຫລອ້ອມປະເທດຮາວີລາ ທີ່ນັ້ນມີແຮ່ທອງຄຳໃນປະເທດນີ້ມີບໍ່ຄຳຊັ້ນດີ ມີແກ້ວປະເສີດໂມລາ ແລະຕົ້ນຢາງຫອມທີ່ມີຄ່າ ສາຍທີ່ສອງຊື່ວ່າກີໂຮນ ຊຶ່ງໄຫລອ້ອມປະເທດກູຊ ສາຍທີ່ສາມຊື່ວ່າ ຕີກຣິສ ຊຶ່ງໄຫລຜ່ານປະເທດອັສຊີເຣັຽທາງທິດຕາເວັນອອກ ແລະສາຍທີ່ສີ່ຊື່ວ່າ ເອີຟຣາດ ພຣະຜູ້ເປັນເຈົ້າໄດ້ເອົາຄົນທີ່ພຣະອົງສ້າງນັ້ນ ມາເຝົ້າຮັກສາແລະເບິ່ງແຍງສວນພຣະອົງຊົງສັ່ງແກ່ຊາຍຜູ້ນັ້ນວ່າ, "ຫມາກໄມ້ທຸກໆກົກໃນສວນນີ້ເຈົ້າກິນໄດ້ຫມົດ ເວັ້ນໄວ້ແຕ່ກົກທີ່ໃຫ້ຮູ້ຈັກຄວາມດີ ແລະຄວາມຊົ່ວ ເຈົ້າຢ່າກິນ ຖ້າເຈົ້າຂືນກິນຫມາກໄມ້ໃນກົກນີ້ ເຈົ້າຈະຕ້ອງເຖິງແກ່ຄວາມຕາຍ" ພຣະຜູ້ເປັນເຈົ້າຊົງກ່າວ*



*ອີກວ່າ, "ບໍ່ເປັນການສົມຄວນທີ່ໃຫ້ຜູ້ຊາຍຢູ່ໂດດດ່ຽວເຊັ່ນນີ້ ເຮົາຄວນຫາຜູ້ຊ່ວຍທີ່ເຫມາະສົມໃຫ້ເຂົາ"ດັ່ງແລ້ວ ພຣະອົງຈຶ່ງເອົາຂີ້ດິນປັ້ນເປັນສັດ ແລະນົກຕ່າງໆ ແລ້ວເອົາສັດ ແລະນົກທີ່ປັ້ນນັ້ນໃຫ້ຊາຍຜູ້ຮັກສາສວນເບິ່ງ ເພື່ອຢາກຮູ້ວ່າເຂົາຈະໃສ່ຊື່ຫຍັງໃຫ້ ດັ່ງແລ້ວຊື່ທີ່ເຂົາຕັ້ງໃຫ້ນັ້ນກໍເປັນຊື່ຂອງສັດຕ່າງໆຕໍ່ງມາຫລັງຈາກຜູ້ຊາຍນັ້ນໄດ້ຕັ້ງຊື່ໃຫ້ສັດຕ່າງໆແລ້ວ ສັດເຫລົ່ານັ້ນກໍບໍ່ໄດ້ເປັນຜູ້ຊ່ວຍເຂົາຫຍັງຫມົດເມື່ອເປັນດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງທຳໃຫ້ຊາຍຜູ້ນັ້ນນອນຫລັບສະຫນິດ ໃນຂນະນອນຫລັບຢູ່ນັ້ນ ພຣະອົງຊົງເອົາກະດູກຂ້າງຊີກນຶ່ງຂອງເຂົາອອກມາແລ້ວຊົງທຳໃຫ້ເນື້ອຫນັງຈອດຕິດກັນດັ່ງເດີມພຣະອົງຊົງເອົາກະດູກຂ້າງນັ້ນມາສ້າງເປັນຜູ້ຍິງ ເມື່ອສ້າງແລ້ວພຣະອົງກໍຊົງມອບຍິງນັ້ນໃຫ້ແກ່ເຂົາຊາຍຜູ້ນັ້ນຈຶ່ງເວົ້າວ່າ, "ໃນທີ່ສຸດ ນີ້ເດ ຜູ້ຊຶ່ງມີຮູບຮ່າງຄືເຮົາ ກະດູກຂອງນາງ ມາຈາກກະດູກຂອງເຮົາ ເນື້ອຫນັງຂອງນາງ ມາຈາກເນື້ອຫນັງຂອງເຮົາ ນາງຊື່ວ່າ ຜູ້ຍິງ ເພາະນາງມາຈາກຜູ້ຊາຍ"ດ້ວຍເຫດນີ້ ຜູ້ຊາຍຈຶ່ງຕ້ອງລາຈາກບິດາມານດາຂອງຕົນໄປຕິດພັນຢູ່ກັບພັຣຍາ ແລ້ວເຂົາທັງສອງກໍກາຍເປັນຄົນ ຄົນດຽວກັນຜູ້ຊາຍແລະຜູ້ຍິງນັ້ນເປືອຍກາຍຢູ່ ໂດຍບໍ່ຮູ້ສຶກລະອາຍກັນເລີຍ"*

## 10. ການທີ່ພຣະເຈົ້າຊົງສ້າງມະນຸດ ຕາມແບບພຣະສາຍາຂອງພຣະອົງນັ້ນ ຫມາຍຄວາມວ່າແນວໃດ?

ຫມາຍຄວາມວ່າ ພຣະເຈົ້າຊົງໂຜດໃຫ້ມະນຸດ ມີຄວາມນຶກຄິດ ແລະມີຈິດສຳນຶກທີ່ສາມາດຮູ້ເຫດຜົນ ແບ່ງແຍກລະຫວ່າງ

ຄວາມດີ ແລະຄວາມຊົ່ວໄດ້. ທັງນີ້ກໍເພື່ອຈະໃຫ້ມະນຸດສາມາດຮ່ວມສາມັກຄີທັມກັບພຣະເຈົ້າໄດ້.

**ເອຊາຢາ 1:18** *“ພຣະຜູ້ເປັນເຈົ້າຊົງກ່າວວ່າ, “ຂໍໃຫ້ພວກເຮົາມາເວົ້າກັນເທາະ ຄືເຖິງແມ່ນບາບຂອງເຈົ້າຈະເປັນສີແດງ ເຮົາກໍຈະລ້າງໃຫ້ຂາວສະອາດເຫມືອນນວນຝ້າຍ ແລະເຖິງມັນຈະແດງເຂັ້ມ ເຮົາກໍຈະເຮັດໃຫ້ຂາວເຫມືອນຂົນແກະ”*

**ໂຢຊວຍ 24:15** *“ຖ້າວ່າພວກທ່ານບໍ່ເຕັມໃຈຮັບໃຊ້ພຣະຜູ້ເປັນເຈົ້າ ຈົ່ງຕັດສິນໃຈໃນວັນນີ້ວ່າ ພວກທ່ານຈະຮັບໃຊ້ຜູ້ໃດ ຈະຮັບໃຊ້ພຣະຊຶ່ງປູ່ຍ່າຕາຍາຍບົວລະບັດຢູ່ໃນທ້ອງຖິ່ນຟາກຕາເວັນອອກຂອງແມ່ນ້ຳເອີຟຣາດ ຫລືພຣະຂອງຄົນອາໂມຣິດໃນແຜ່ນດິນຊຶ່ງທ່ານອາໄສຢູ່ນີ້ ແຕ່ວ່າ ຂ້າພະເຈົ້າແລະຄອບຄົວຂອງຂ້າພະເຈົ້າຈະຮັບໃຊ້ພຣະຜູ້ເປັນເຈົ້າ”*

**ໂຢຮັນ 1:3** *“ພຣະເຈົ້າຊົງສ້າງສິ່ງທັງປວງຂຶ້ນມາໂດຍພຣະທັມ ໃນບັນດາສິ່ງທີ່ເປັນມານັ້ນ ບໍ່ມີຈັກສິ່ງທີ່ເປັນມາໂດຍນອກຈາກພຣະທັມ”*

## 11. ຄວາມຜິດບາບໄດ້ເຂົ້າມາໃນໂລກນີ້ແບບໃດ?

ເພາະວ່າ ບິດາມານດາຄູ່ແຮກຂອງມະນຸດເຮົາໄດ້ຂັດຂືນຕໍ່ພຣະບັນຊາຂອງພຣະເຈົ້າ, ໂດຍການກິນຫມາກໄມ້ທີ່ພຣະອົງຊົງຫ້າມ. ການກະທຳທີ່ຝ່າຝືນຕໍ່ຄຳສັ່ງຂອງອົງພຣະຜູ້ເປັນເຈົ້ານັ້ນແຫຼະ, ທີ່ເຮັດໃຫ້ເຮົາມີບາບ.

**ປະຖົມການ 2:17--3:1-24** *ພຣະອົງຊົງສັ່ງແກ່ຊາຍຜູ້ນັ້ນວ່າ, “ຫມາກໄມ້ທຸກໆກົກໃນສວນນີ້ເຈົ້າກິນໄດ້ຫມົດ ເວັ້ນໄວ້ແຕ່ກົກທີ່ໃຫ້ຮູ້ຈັກຄວາມດີ ແລະຄວາມຊົ່ວ ເຈົ້າຢ່າກິນ ຖ້າເຈົ້າຂືນ*



*ກິນຫມາກໄມ້ໃນກົກນີ້ ເຈົ້າຈະຕ້ອງເຖິງແກ່ຄວາມຕາຍ”ພຣະຜູ້ເປັນເຈົ້າຊົງກ່າວອີກວ່າ, “ບໍ່ເປັນການສົມຄວນທີ່ໃຫ້ຜູ້ຊາຍຢູ່ໂດດດ່ຽວເຊັ່ນນີ້ ເຮົາຄວນຫາຜູ້ຊົດຊ່ອຍທີ່ເຫມາະສົມໃຫ້ເຂົາ”ດັ່ງແລ້ວ ພຣະອົງຈຶ່ງເອົາຂີ້ດິນປັ້ນເປັນສັດ ແລະນົກຕ່າງໆ ແລ້ວເອົາສັດ ແລະນົກທີ່ປັ້ນນັ້ນໃຫ້ຊາຍຜູ້ຮັກສາສວນເບິ່ງ ເພື່ອຢາກຮູ້ວ່າເຂົາຈະໃສ່ຊື່ຫຍັງໃຫ້ ດັ່ງແລ້ວຊື່ທີ່ເຂົາຕັ້ງໃຫ້ນັ້ນກໍເປັນຊື່ຂອງສັດຕ່າງໆຕໍ່ໆມາຫລັງຈາກຜູ້ຊາຍນັ້ນໄດ້ຕັ້ງຊື່ໃຫ້ສັດຕ່າງໆແລ້ວ ສັດເຫລົ່ານັ້ນກໍບໍ່ໄດ້ເປັນຜູ້ຊົດຊ່ອຍເຂົາຫຍັງຫມົດເມື່ອເປັນດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຊົງທຳໃຫ້ຊາຍຜູ້ນັ້ນນອນຫລັບສນິດ ໃນຂນະນອນຫລັບຢູ່ນັ້ນ ພຣະອົງຊົງເອົາກະດູກຂ້າງຊີກນຶ່ງຂອງເຂົາອອກມາ ແລ້ວຊົງທຳໃຫ້ເນື້ອຫນັງຈອດຕິດກັນດັ່ງເດີມພຣະອົງຊົງເອົາກະດູກຂ້າງນັ້ນມາສ້າງເປັນຜູ້ຍິງເມື່ອສ້າງແລ້ວພຣະອົງກໍຊົງມອບຍິງນັ້ນໃຫ້ແກ່ເຂົາຊາຍຜູ້ນັ້ນຈຶ່ງເວົ້າວ່າ, “ໃນທີ່ສຸດ ນີ້ເດ ຜູ້ຊຶ່ງມີຮູບຮ່າງຄືເຮົາ ກະດູກຂອງນາງ ມາຈາກກະດູກຂອງເຮົາ ເນື້ອຫນັງຂອງນາງ ມາຈາກເນື້ອຫນັງຂອງເຮົາ ນາງຊື່ວ່າ ຜູ້ຍິງ ເພາະນາງມາຈາກຜູ້ຊາຍ”ດ້ວຍເຫດນີ້ ຜູ້ຊາຍຈຶ່ງຕ້ອງລາຈາກບິດາມານດາຂອງຕົນໄປຕິດພັນຢູ່ກັບພັຣຍາ ແລ້ວເຂົາທັງສອງກໍກາຍເປັນຄົນ ຄົນດຽວກັນຜູ້ຊາຍແລະຜູ້ຍິງນັ້ນເປືອຍກາຍຢູ່ ໂດຍບໍ່ຮູ້ສຶກລະອາຍກັນເລີຍ.*

### *ມະນຸດຕົກຢູ່ໃນຄວາມບາບ*

*ງູເປັນສັດທີ່ຫລັກແຫລມກວ່າສັດທັງຫລາຍ ທີ່ພຣະຜູ້ເປັນເຈົ້າໄດ້ສ້າງໄວ້ ງູໄດ້ຖາມຜູ້ຍິງວ່າ, “ຈິງຫລື ທີ່ພຣະເຈົ້າຊົງຫ້າມບໍ່ໃຫ້ພວກເຈົ້າກິນຫມາກໄມ້ໃນສວນນີ້?”ຜູ້ຍິງນັ້ນຕອບວ່າ, “ຫມາກ*

ໄມ້ທຸກໆກົກໃນສວນນີ້ ພວກເຮົາກິນໄດ້ເວັ້ນໄວ້ແຕ່ຫມາກໄມ້ໃນກົກທີ່ຢູ່ກາງສວນນັ້ນ ເພາະພຣະເຈົ້າບອກບໍ່ໃຫ້ພວກເຮົາກິນ ຫລືກະທັ່ງແຕະຕ້ອງເປັນເດັດຂາດ ຖ້າພວກເຮົາຂືນກິນພວກເຮົາຕ້ອງຕາຍ”ງູຈຶ່ງຕອບວ່າ, “ບໍ່ເປັນຄວາມຈິງ, ພວກເຈົ້າຈະບໍ່ຕາຍດອກ ພຣະເຈົ້າເວົ້າເຊັ່ນນັ້ນກໍເພາະພຣະອົງຊົງຮູ້ດີວ່າ ເມື່ອໃດເຈົ້າກິນຫມາກໄມ້ນັ້ນ ເຈົ້າຈະຮູ້ແຈ້ງເຫັນຈິງກັບຈະຮູ້ການດີແລະການຊົ່ວເຫມືອນດັ່ງພຣະອົງ”ຜູ້ຍິງເຫັນວ່າຫມາກໄມ້ໃນກົກນັ້ນຊ່າງງາມ ແລະເປັນຫນ້າຢາກກິນອີ່ຫລີ ນອກນີ້ນາງຍັງຄິດວ່າຈະມີສະຕິປັນຍາອີກ ດັ່ງນັ້ນນາງຈຶ່ງຕັດສິນໃຈປິດເອົາຫມາກໄມ້ແລ້ວກິນຄັນແລ້ວ ຈຶ່ງເອົາຫມາກໄມ້ນັ້ນໃຫ້ຜົວນາງກິນນຳຫລັງຈາກກິນຫມາກໄມ້ແລ້ວ ໃນທັນໃດນັ້ນ ພວກເຂົາກໍຮູ້ແຈ້ງເຫັນຈິງ ເພາະສະນັ້ນ ພວກເຂົາຈຶ່ງຮູ້ວ່າ ພວກຕົນກຳລັງເປືອຍກາຍຢູ່ ດັ່ງນັ້ນ ພວກເຂົາຈຶ່ງພາກັນເອົາໃບໄມ້ມາຫຍິບເຂົ້າກັນທຳເປັນເຄື່ອງນຸ່ງໃນຄືນວັນນັ້ນ ພວກເຂົາໄດ້ຍິນສຽງຍ່າງຂອງພຣະຜູ້ເປັນເຈົ້າໃນສວນ ພວກເຂົາຈຶ່ງພາກັນຫລົບລີ້ຊ່ອນຢູ່ໃນຖ້າມກາງກົກໄມ້ ແຕ່ພຣະຜູ້ເປັນເຈົ້າໄດ້ຊົງເອີ້ນຫາຊາຍຜູ້ນັ້ນວ່າ, “ເຈົ້າຢູ່ໃສ?” ເຂົາຈຶ່ງຕອບວ່າ, “ຂ້າພຣະອົງໄດ້ຍິນສຽງຍ່າງຂອງພຣະອົງໃນສວນ ຂ້າພຣະອົງຢ້ານຈຶ່ງຫລົບລີ້ຊ່ອນຕົວຢູ່ເພາະວ່າຂ້າພຣະອົງກຳລັງເປືອຍກາຍ”ພຣະເຈົ້າຈຶ່ງຖາມວ່າ, “ໃຜບອກວ່າເຈົ້າເປືອຍກາຍ ບໍ່ແມ່ນເຈົ້າກິນຫມາກໄມ້ທີ່ເຮົາໄດ້ຫ້າມນັ້ນຫລື?”ຊາຍຜູ້ນັ້ນທູນຕອບວ່າ, “ໂດຍ, ແມ່ນຜູ້ຍິງທີ່ພຣະອົງປະທານໃຫ້ນັ້ນເອົາຫມາກໄມ້ໃຫ້ຂ້າພຣະອົງກິນ”ແລ້ວພຣະຜູ້ເປັນເຈົ້າຊົງຖາມຜູ້ຍິງນັ້ນວ່າ, “ເປັນຫຍັງເຈົ້າຈຶ່ງທຳເຊັ່ນນັ້ນ” ນາງທູນຕອບວ່າ, “ງູໄດ້ຍົວະໃຫ້ຂ້າພຣະອົງກິນ”



ຕໍ່ມາ ພຣະຜູ້ເປັນເຈົ້າຊົງບອກງູວ່າ, “ດ້ວຍເຫດວ່າ ເຈົ້າໄດ້ຫລອກລວງຜູ້ຍິງນັ້ນ ແມ່ນເຈົ້າເທົ່ານັ້ນທີ່ຈະໄດ້ຮັບການສາບແຊ່ງໃນຈຳນວນສັດທັງປວງ ແຕ່ບັດນີ້ໄປ ເຈົ້າຈະລືເລືອດ້ວຍທ້ອງ ແລະຈະເອົາຂີ້ດິນເປັນອາຫານເຈົ້າກັບແມ່ຍິງຈະຕ້ອງກຽດຊັງກັນ ມະນຸດແລະງູຈະຕ້ອງເປັນສັດຕູກັນ ມະນຸດຈະພຍາຍາມຢຽບຫົວເຈົ້າໃຫ້ແຕກ ແລະເຈົ້າກໍຈະພຍາຍາມຕອດສົ້ນຫນ່ອງຂອງພວກເຂົາ”ແລ້ວພຣະອົງຊົງກ່າວກັບຜູ້ຍິງນັ້ນວ່າ, “ເຮົາຈະເພີ້ມຄວາມຫຍຸ້ງຍາກໃຫ້ແກ່ເຈົ້າເວລາມີທ້ອງ ແລະຈະໃຫ້ເຈົ້າຄອດບຸດດ້ວຍຄວາມເຈັບປວດ ເຖິງປານນັ້ນເຈົ້າກໍຍັງຢາກໄດ້ຜົວຢູ່ ແລະຜົວນັ້ນຈະເປັນນາຍປົກຄອງເບິ່ງແຍງເຈົ້າ”ຄັນແລ້ວ ພຣະຜູ້ເປັນເຈົ້າຊົງກ່າວກັບອາດາມວ່າ, “ເຈົ້າໄດ້ເຊື່ອຟັງພັຣຍາຂອງເຈົ້າ  ເຈົ້າກິນຫມາກໄມ້ຊຶ່ງເຮົາໄດ້ຫ້າມຍ້ອນສິ່ງທີ່ເຈົ້າໄດ້ກະທຳມານັ້ນ ຂີ້ດິນຈະຖືກສາບແຊ່ງ ກ່ອນຈະໄດ້ອາຫານມາລ້ຽງຊີບ ເຈົ້າຈະຕ້ອງເຮັດວຽກຢ່າງຫນັກ ຂຸດດິນຟັນໄມ້ຈົນຫນ້າແຫລ້ຫນ້າກ່ຳເທື່ອລ້ຽງຊີວິດກົກໄມ້ແລະພືດຕ່າງໆທີ່ມີຫນາມຈະເກີດຂຶ້ນສຳລັບເຈົ້າ ແລະຈະກິນພືດນັ້ນເປັນອາຫານເຈົ້າຈະຕ້ອງຫາລ້ຽງຊີບດ້ວຍເຫື່ອໄຫລໄຄຍ້ອຍ ຈົນກວ່າເຈົ້າຈະສິ້ນຊີວິດກັບຄືນໄປສູ່ດິນບ່ອນທີ່ເຈົ້າມາ ເຈົ້າມາແຕ່ດິນ ເຈົ້າຈະຕ້ອງກັບໄປໃນດິນອີກ”ອາດາມໃສ່ຊື່ໃຫ້ພັຣຍາຂອງເຂົາວ່າ “ເອວາ” ຊຶ່ງມີຄວາມຫມາຍວ່າ ນາງເປັນມານດາຂອງມະນຸດທັງປວງຕໍ່ມາ ພຣະຜູ້ເປັນເຈົ້າໄດ້ປະທານເສື້ອທີ່ທຳດ້ວຍຫນັງສັດໃຫ້ອາດາມ ແລະເມັຽຂອງເຂົານຸ່ງຫົ່ມ

### *ອາດາມແລະເອວາຖືກໄລ່ອອກຈາກສວນ*

*ຫລັງຈາກນັ້ນຕໍ່ມາ ພຣະຜູ້ເປັນເຈົ້າຊົງກ່າວວ່າ, "ບັດນີ້ ມະນຸດໄດ້ກາຍເປັນເຫມືອນພວກເຮົາໄດ້ຮູ້ຈັກການດີ ແລະການຊົ່ວ ເຂົາຈະບໍ່ໄດ້ກິນຫມາກໄມ້ທີ່ໃຫ້ມີຊີວິດຕລອດໄປເປັນນິດອີກ"ດັ່ງນັ້ນ ພຣະຜູ້ເປັນເຈົ້າຈຶ່ງຂັບໄລ່ເຂົາອອກຈາກສວນເອເດນ ໃຫ້ເຮັດວຽກຂຸດດິນຟັນໄມ້ ແລະທຳມາຫາກິນໃນດິນບ່ອນທີ່ກຳເນີດມາເມື່ອພຣະເຈົ້າໄດ້ຂັບໄລ່ມະນຸດອອກຈາກສວນແລ້ວ ພຣະອົງໄດ້ຊົງແຕ່ງຕັ້ງເທວະດາ ເຊຣູບິມ ທາງທິດຕາເວັນອອກຂອງສວນ ແລະດາບທີ່ມີແສງໄຟແກວ່ງໄປທົ່ວທຸກທິດ ເພື່ອປ້ອງກັນບໍ່ໃຫ້ຜູ້ນຶ່ງຜູ້ໃດເຂົ້າໄປໃກ້ກົກໄມ້ທີ່ໃຫ້ມີຊີວິດຕລອດໄປເປັນນິດນັ້ນ"*

## 12. ໃຜ ເປັນຜູ້ລໍ້ລວງອາດາມແລະເອວາ ໃຫ້ຂັດຕໍ່ຄຳສັ່ງພຣະເຈົ້າ?

ລູຍຊິເຟີ ເຄີຍເປັນທູດສະຫວັນຢູ່ກັບພຣະເຈົ້າ ແຕ່ຕໍ່ມາໄດ້ຖືກພຣະເຈົ້າຊົງສາບ. ໄດ້ທຳການລໍ້ລວງ ເອວາໃຫ້ສົງສັຍໃນຄຳສັ່ງຂອງພຣະເຈົ້າ. ພະຍາມານ ຫຼືຜີຖ່ອຍຮ້າຍນີ້ ບາງເທື່ອເຮົາກໍເອີ້ນວ່າ ງູເຖົ້າ ຫລືຊາຕານ.

**ປະຖົມການ 3:1** *"ງູເປັນສັດທີ່ຫລັກແຫລມກວ່າສັດທັງຫລາຍ ທີ່ພຣະຜູ້ເປັນເຈົ້າໄດ້ສ້າງໄວ້ ງູໄດ້ຖາມຜູ້ຍິງວ່າ, "ຈິງຫລື ທີ່ພຣະເຈົ້າຊົງຫ້າມບໍ່ໃຫ້ພວກເຈົ້າກິນຫມາກໄມ້ໃນສວນນີ້?""*

**ລູກາ 4:1-13** *"ພຣະເຢຊູເຕັມໄປດ້ວຍພຣະວິນຍານບໍຣິສຸດໄດ້ສະເດັດກັບຈາກແມ່ນໍ້າຈໍແດນ ແລະພຣະວິນຍານໄດ້ຊົງນຳ*



*ພຣະອົງໄປໃນປ່າພຍາມານໄດ້ທົດລອງພຣະອົງເປັນເວລາສີ່ສິບວັນ ໃນວັນເຫລົ່ານັ້ນພຣະອົງບໍ່ໄດ້ຊົງສເວີຍອາຫານສິ່ງໃດ ແລະເມື່ອສິ້ນສີ່ສິບວັນແລ້ວ ພຣະອົງຊົງຢາກອາຫານພຍາມານໄດ້ທູນພຣະອົງວ່າ, "ຖ້າທ່ານເປັນພຣະບຸດຂອງພຣະເຈົ້າ ຈົ່ງສັ່ງຫີນກ້ອນນີ້ໃຫ້ກາຍເປັນອາຫານເບິ່ງດູ"ພຣະເຢຊູຕອບມັນວ່າ, "ມີພຣະຄັມພີຂຽນໄວ້ວ່າ ມະນຸດຈະບໍ່ລ້ຽງຊີວິດດ້ວຍອາຫານສິ່ງດຽວ" ແລ້ວມານໄດ້ນຳພຣະອົງຂຶ້ນເມືອສະແດງບັນດາຣາຊແຜ່ນດິນທົ່ວພິພົບໃນບັດດຽວຊີ້ໃຫ້ພຣະອົງເຫັນແລະມານໄດ້ທູນພຣະອົງວ່າ, "ອຳນາດທັງຫມົດນີ້ ສະງ່າຣາສີຂອງຣາຊແຜ່ນດິນນັ້ນ ເຮົາຈະຍົກໃຫ້ແກ່ທ່ານ ເພາະວ່າຊົງມອບເປັນສິດໄວ້ແກ່ເຮົາແລ້ວ ແລະເຮົາປາຖນາຈະໃຫ້ແກ່ຜູ້ໃດກໍໃຫ້ແກ່ຜູ້ນັ້ນເຫດສັນນີ້ຖ້າທ່ານຂາບໄຫວ້ເຮົາ ສັພສິ່ງນັ້ນຈະເປັນຂອງທ່ານຫມົດ"ຝ່າຍພຣະເຢຊູຊົງຕອບມານວ່າ, "ມີຄຳຂຽນໄວ້ໃນພຣະຄັມພີວ່າ, "ຈົ່ງຂາບໄຫວ້ພຣະອົງຜູ້ເປັນເຈົ້າຂອງເຈົ້າ ແລະປະຕິບັດພຣະອົງແຕ່ຜູ້ດຽວ"ແລ້ວພຍາມານໄດ້ນຳພຣະອົງໄປຍັງກຸງເຢຣູຊາເລັມ ໃຫ້ພຣະອົງປະທັບຢູ່ເທິງຫລັງຄາພຣະວິຫານ ແລະທູນພຣະອົງວ່າ, "ຖ້າທ່ານເປັນພຣະບຸດຂອງພຣະເຈົ້າ ຈົ່ງໂຕນລົງຈາກທີ່ນີ້ເບິ່ງດູເພາະວ່າມີຄຳຂຽນໄວ້ໃນພຣະຄັມພີວ່າ, "ພຣະເຈົ້າຈະຊົງຮັບສັ່ງພວກເທວະດາຂອງພຣະອົງກ່ຽວກັບເຣື່ອງທ່ານເພື່ອໃຫ້ເຂົາເອົາໃຈໃສ່ຮັກສາທ່ານໄວ້"ແລະ "ມືຂອງເທວະດາເຫລົ່ານັ້ນຈະຮັບທ່ານໄວ້ ຢ້ານວ່າຕີນຂອງທ່ານຈະຕຳຫີນ"ພຣະເຢຊູຊົງຕອບມານວ່າ, "ມີຄຳກ່າວໄວ້ວ່າ "ຢ່າທົດລອງໃຈພຣະຜູ້ເປັນເຈົ້າຂອງເຈົ້າ"ເມື່ອມານໄດ້ທົດລອງພຣະອົງທຸກປະການແລ້ວມັນກໍຫນີຈາກພຣະອົງໄປຈົນເຖິງເວລາທີ່ມີໂອກາດອີກ"*

**ພຣະນິມິດ 12:9** *"ພະຍານາກໃຫຍ່ຊຶ່ງເປັນງູແຕ່ດຶກດຳບັນທີ່ເຂົາເອີ້ນວ່າ ເດັຽໂບໂລ (Devil) ຫລື ຊາຕານ (Satan) ຜູ້ຫລອກລວງມະນຸດທັງໂລກ ກໍຖືກຊັດຖິ້ມລົງເສັຽ ພຍານາກກັບບໍຣິວານຂອງມັນກໍຖືກຖິ້ມລົງເທິງແຜ່ນດິນໂລກ"*

## 13. ການຫຼົງທຳຜິດຂອງອາດາມນີ້ ໄດ້ກາຍເປັນຜົນຮ້າຍແກ່ມະນຸດຢ່າງໃດແດ່?

ຄວາມຜິດບາບ ໄດ້ເຂົ້າມາໃນໂລກນີ້ກໍເພາະການທຳຜິດຂອງອາດາມ. ແລະຄວາມຜິດບາບນັ້ນໄດ້ເປັນຕົ້ນເຫດໃຫ້ເກີດຄວາມຕາຍ. ດ້ວຍເຫດນີ້ແຫລະ ຄວາມຕາຍຈຶ່ງໄດ້ລາມໄປເຖິງຄົນທັງປວງ. ມະນຸດທຸກຄົນໄດ້ກາຍເປັນຄົນຜິດບາບທັງສິ້ນ. ທຸກຄົນກາຍເປັນຄົນອະທັມ ແລະໄດ້ຮັບເອົາຄວາມເສື່ອມຊາມເປັນມໍຣະດົກ. ດັ່ງນັ້ນມະນຸດທຸກຄົນຈຶ່ງຕ້ອງຕາຍຍ້ອນຄວາມຜິດບາບນັ້ນ

**ໂຣມ 5:12** *"ເຫດສັນນັ້ນຄວາມຜິດບາບໄດ້ເຂົ້າມາໃນໂລກເພາະດ້ວຍມະນຸດຄົນດຽວ ແລະຄວາມຕາຍກໍໄດ້ເກີດມາຍ້ອນຄວາມຜິດບາບນັ້ນ ຢ່າງນັ້ນແຫລະ, ຄວາມຕາຍຈຶ່ງໄດ້ລາມໄປເຖິງມະນຸດທຸກຄົນ ເພາະວ່າທຸກຄົນໄດ້ເຮັດບາບແລ້ວ"*

**ໂຣມ 3:10** *"ດັ່ງມີຄຳຂຽນໄວ້ໃນພຣະຄັມພີວ່າ, "ບໍ່ມີຄົນຊອບທັມຈັກຄົນນຶ່ງຄົນດຽວ"*

**ເພງສັຣເສີນ 51:5** *"ຂ້າພຣະອົງຊົ່ວ ແລະເຕັມໄປດ້ວຍຄວາມຜິດຕັ້ງແຕ່ນີ້ເກີດມາ"*



## 14. ມະນຸດທຸກຄົນເປັນຄົນຜິດບາບແທ້ບໍ?

ແມ່ນແລ້ວ ພຣະຄຳພີໄດ້ເປັນຜູ້ຊີ້ບອກພວກເຮົາຢ່າງຊັດເຈນແລ້ວວ່າ ມະນຸດທຸກຄົນໄດ້ເຮັດຜິດບາບ.

**ໂຣມ 3:10-12** *ດັ່ງມີຄຳຂຽນໄວ້ໃນພຣະຄັມພີວ່າ, "ບໍ່ມີຄົນຊອບທັມຈັກຄົນນຶ່ງຄົນດຽວ ບໍ່ມີຄົນທີ່ເຂົ້າໃຈ ບໍ່ມີຄົນທີ່ສແວງຫາພຣະເຈົ້າທຸກຄົນໄດ້ຫລົງເວັ້ນໄປ ເຂົາພາກັນເປັນຄົນຊົ່ວໄປຫມົດ ຜູ້ເຮັດການດີບໍ່ມີຈັກຄົນດຽວ"*

**ໂຣມ 10:23** *"ດ້ວຍວ່າທຸກຄົນໄດ້ເຮັດຜິດບາບແລະຂາດຈາກພຣະຣັສມີຂອງພຣະເຈົ້າ"*

## 15. ເຮັດແນວໃດຈຶ່ງຈະຮູ້ວ່າ ເຮົາເປັນຄົນຜິດຄົນບາບ?

ເຮົາຮູ້ໄດ້ໂດຍການອ່ານພຣະຄຳພີຂອງພຣະເຈົ້າ ແລ້ວຕ້ອງມີການສຳຫຼວດເບິ່ງຕົນເອງວ່າ ໄດ້ປະຕິບັດຕາມພຣະຄຳຂອງພຣະເຈົ້າຫຼືບໍ່.

**ໂຢຮັນ 16:8-11** *"ເມື່ອພຣະອົງສະເດັດມາແລ້ວ ພຣະອົງນັ້ນແຫລະ, ຈະຊົງບັນດົນໃຫ້ໂລກຮູ້ແຈ້ງໃນເຣື່ອງຄວາມຜິດບາບຄວາມຊອບທັມ ແລະການພິພາກສາໃນເຣື່ອງຄວາມຜິດບາບນັ້ນຄືເພາະເຂົາບໍ່ວາງໃຈເຊື່ອໃນເຮົາໃນເຣື່ອງຄວາມຊອບທັມນັ້ນ ຄືເພາະເຮົາໄປຫາພຣະບິດາແລະພວກທ່ານຈະບໍ່ເຫັນເຮົາອີກສ່ວນເຣື່ອງການພິພາກສານັ້ນ ຄືເພາະຜູ້ປົກຄອງໂລກນີ້ໄດ້ຖືກພິພາກສາແລ້ວ"*

**ເຮັບເຣີ 4:12** *"ເພາະວ່າພຣະທັມຂອງພຣະເຈົ້າປະກອບດ້ວຍຊີວິດແລະຣິດເດດ ຄົມກວ່າດາບສອງຄົມທຸກດວງແທງຊອດເຖິງ*

*ຈິດໃຈແລະວິນຍານຕລອດທັງຄໍ່າກະດູກແລະໄຂໃນກະດູກຕິດຕໍ່ກັນ ຈຶ່ງສັງເກດຮູ້ຄວາມຄິດແລະຄວາມມຸ້ງໝາຍໃນໃຈໄດ້ພຣະເຈົ້າຈະຊົງປະທານພຣະວິນຍານບໍຣິສຸດຂອງພຣະອົງ ມາປຸກລຸກຄວາມຮູ້ສຶກຜິດແລະຊອບຂອງເຮົາຂຶ້ນ ເພື່ອໃຫ້ເຮົາສາມາດສຳນຶກໄດ້ວ່າ ຕົວເຮົາເອງໄດ້ເປັນຄົນຜິດບາບ"*

## 16. ໃຜເປັນຜູ້ຂຽນພຣະຄຳພີຂຶ້ນ?

ແມ່ນຜູ້ຊອບທັມທີ່ພຣະເຈົ້າຊົງເລືອກ ເປັນຜູ້ຂຽນແລະກໍໄດ້ກ່າວໄປຕາມທີ່ພຣະວິນຍານຂອງພຣະເຈົ້າຊົງບັນດົນຈິດໃຈໃຫ້ຂຽນຂຶ້ນ. ພຣະຄຳພີທຸກຕອນບໍ່ແມ່ນອອກມາຈາກແນວຄິດ ຫຼືການປະພັນຂອງມະນຸດ ແຕ່ແມ່ນການຊົງຊີ້ແນະບັນດົນຈິດໃຈຈາກພຣະເຈົ້າ. ດັ່ງນັ້ນພຣະຄຳພີທັງເຫຼັ້ມໄດ້ຖືກຂຽນຂຶ້ນມາໂດຍການຊົງນຳພາຂອງພຣະເຈົ້າ.

**2 ເປໂຕ 1:21** *"ເພາະວ່າຄຳທຳນວາຍນັ້ນບໍ່ໄດ້ມາຈາກນ້ຳໃຈຂອງມະນຸດຈັກເທື່ອ ແຕ່ມະນຸດໄດ້ກ່າວຄຳທີ່ມາຈາກພຣະເຈົ້າຕາມທີ່ພຣະວິນຍານບໍຣິສຸດຊົງດົນໃຈ"*

**2 ຕີໂມທຽວ 3:16-17** *"ພຣະຄັມພີທຸກຕອນໄດ້ຮັບການຊົງບັນດົນໃຈຈາກພຣະເຈົ້າ ແລະເປັນປໂຍດໃນການສອນ ການກ່າວຕັກເຕືອນວ່າກ່າວ ການປັບປຸງແກ້ໄຂໃຫ້ຖືກຕ້ອງ ແລະການອົບຮົມໃນທາງຊອບທັມເພື່ອຄົນຂອງພຣະເຈົ້າຈະບັນລຸຜົນສຳເຣັດ ແລະຈັດຕຽມໄວ້ພ້ອມສຳລັບການດີທຸກຢ່າງ"*



## 17. ໃນສະໄໝພຣະຄຳພີເດີມ ແລະພຣະຄຳພີໃໝ່ ພຣະເຈົ້າໄດ້ຊົງສຳແດງພຣະອົງຕໍ່ມະນຸດ ຢ່າງໃດ?

ໃນສະໄໝພຣະຄຳພີເດີມ ຊົງສະແດງພຣະຕໍ່ມະນຸດ ໂດຍທາງຜູ້ພະຍາກອນ ຫຼືພວກຜູ້ທຳນວາຍ ແລະພວກປະໂຣຫິດ ຊົງປະທານພຣະບັນຍັດແກ່ເຂົາເຫຼົ່ານັ້ນ. ສ່ວນໃນສະໄໝຂອງພຣະຄຣິສຕະທັມຄຳພີໃໝ່ ພຣະຜູ້ເປັນເຈົ້າໄດ້ຊົງກ່າວກັບເຮົາໂດຍທາງພຣະບຸດຂອງພຣະອົງ ຄືອົງພຣະເຢຊູຄຣິສເຈົ້າຂອງພວກເຮົາທັງຫລາຍນັ້ນເອງ.

**ອົພຍົບ 20:1-17** *ພຣະຜູ້ເປັນເຈົ້າຊົງກ່າວຖ້ອຍຄຳຕໍ່ໄປນີ້ວ່າ, "ເຮົາແມ່ນພຣະຜູ້ເປັນເຈົ້າຂອງພວກເຈົ້າ ຜູ້ໄດ້ນຳພາພວກເຈົ້າອອກຈາກປະເທດເອຢິບ ຄືອອກຈາກປະເທດທີ່ພວກເຈົ້າໄດ້ຕົກເປັນທາດພວກເຈົ້າ* ***ຢ່າມີພຣະອື່ນ*** *ນອກຈາກເຮົາພວກເຈົ້າຢ່າເຮັດຮູບເຄົາຣົບສຳລັບຕົນ ຫລືຮູບສິ່ງນຶ່ງສິ່ງໃດທີ່ມີຢູ່ໃນຟ້າສວັນໃນແຜ່ນດິນຫລືໃນລຸ່ມແຜ່ນດິນ* ***ຢ່າຂາບໄຫວ້*** *ຮູບເຫລົ່ານັ້ນ ເພາະວ່າເຮົາເປັນພຣະຜູ້ເປັນເຈົ້າຂອງພວກເຈົ້າ ແລະເປັນພຣະເຈົ້າຜູ້ຫວງແຫນພວກເຈົ້າ ເຮົາຈະລົງໂທດລູກຫລານຂອງຜູ້ທີ່ຊັງເຮົາເຖິງສາມສີ່ຊົ່ວອາຍຸຄົນແຕ່ຈະສະແດງຄວາມຮັກໝັ້ນຄົງຕໍ່ຜູ້ທີ່ຮັກເຮົາ ແລະຕໍ່ຜູ້ທີ່ປະພຶດຕາມພຣະບັນຍັດຂອງເຮົາສືບໄປຫລາຍຊົ່ວອາຍຸພັນຄົນພວກເຈົ້າ* ***ຢ່າໃຊ້ຊື່*** *ພຣະຜູ້ເປັນເຈົ້າຂອງເຈົ້າ ໄປໃນທາງທີ່ຜິດເພາະເຮົາຈະລົງໂທດຜູ້ທີ່ໃຊ້ຊື່ເຮົາໄປໃນທາງທີ່ຜິດພວກເຈົ້າ* ***ຈົ່ງນັບຖືວັນສິນ*** *ໃຫ້ຖືເປັນວັນສັກສິດຂອງພຣະຜູ້ເປັນເຈົ້າ ຈົ່ງເຮັດວຽກທັງປວງຂອງເຈົ້າແຕ່ໃນຫົກມື້ ແຕ່ມື້ຖ້ວນເຈັດໃຫ້ຖືເປັນວັນສັກສິດຂອງພຣະຜູ້ເປັນເຈົ້າຂອງເຈົ້າໃນມື້ນີ້ໃຫ້ເຈົ້າເອງພ້ອມດ້ວຍບຸດຊາຍບຸດຍິງ ຂ້ອຍທາດ ແລະສັດ*

*ລ້ຽງຂອງພວກເຈົ້າຕລອດທັງຄົນຕ່າງດ້າວທີ່ອາໄສຢູ່ໃນບ້ານເມືອງຂອງພວກເຈົ້າຢຸດເຮັດວຽກທັງຫມົດໃນຫົກມື້ນັ້ນພຣະຜູ້ເປັນເຈົ້າໄດ້ຊົງສ້າງຟ້າສວັນ ແຜ່ນດິນໂລກ ທະເລ ແລະສິ່ງສາຣະພັດທີ່ມີຢູ່ໃນສາມແຫ່ງນີ້ ແຕ່ໃນມື້ຖ້ວນເຈັດພຣະອົງໄດ້ຢຸດພັກດ້ວຍເຫດນີ້ ພຣະຜູ້ເປັນເຈົ້າຈຶ່ງໄດ້ອວຍພອນໃຫ້ມື້ຖ້ວນເຈັດເປັນວັນສິນບໍຣິສຸດສຳລັບພຣະອົງ* ***ຈົ່ງນັບຖືບິ****ດາມານດາຂອງເຈົ້າເພື່ອເຈົ້າຈະມີອາຍຸຫມັ້ນຍືນຢູ່ໃນແຜ່ນດິນທີ່ພຣະຜູ້ເປັນເຈົ້າຂອງເຈົ້າໄດ້ມອບໃຫ້ພວກເຈົ້າ* ***ຢ່າຂ້າ****ຄົນ* ***ຢ່າລ່ວງ****ເກີນຜົວເມັຽຜູ້ອື່ນຢ່າລັກຊັບ* ***ຢ່າເປັນພຍານ****ເທັດໃສ່ຮ້າຍເພື່ອນບ້ານຂອງຕົນ* ***ຢ່າອິດ****ສາຢາກໄດ້ເຮືອນຂອງຜູ້ອື່ນ* ***ຢ່າອິດສາຢາກ****ໄດ້ຜົວຫລືເມັຽ ຢາກໄດ້ຂ້ອຍທາດ ຢາກໄດ້ງົວຄວາຍ ຢາກໄດ້ລໍຫລືສິ່ງອື່ນໃດທີ່ເປັນຂອງຄົນອື່ນ"*

**ເຮັບເຣີ 1:1-2** *"ໃນສະໄຫມພຣະເຈົ້າໄດ້ຊົງກ່າວຫລາຍເທື່ອດ້ວຍວິທີຕ່າງໆ ແກ່ບັນພະບຸຣຸດຂອງເຮົາທັງຫລາຍທາງພວກຜູ້ປະກາດພຣະທັມແຕ່ໃນຄາວສຸດທ້າຍນີ້ ພຣະອົງໄດ້ຊົງກ່າວແກ່ເຮົາທັງຫລາຍທາງພຣະບຸດ ຜູ້ຊຶ່ງພຣະອົງໄດ້ຊົງຕັ້ງໃຫ້ເປັນຜູ້ຮັບສັພສິ່ງທັງປວງເປັນມໍຣະດົກ ແລະດ້ວຍພຣະບຸດນັ້ນພຣະອົງໄດ້ຊົງສ້າງໂລກທັງຫລາຍ"*

## 18. ພຣະບັນຍັດຂອງພຣະເຈົ້າມີຫຍັງແດ່? ໃຜເປັນຜູ້ຮັບເອົາແລະມີຂຶ້ນເວລາໃດ?

ພຣະເຈົ້າຊົງເປັນຜູ້ປະທານພຣະບັນຍັດແກ່ ທ່ານໂມເຊ. ຊຶ່ງເປັນເວລາກວ່າ 3500 ປີຜ່ານມາແລ້ວ, ກ່ອນທີ່ພຣະເຢຊູຄຣິສຈະ



ປະສູດ ປະມານ 1500 ປີ. ພຣະບັນຍັດນັ້ນໄດ້ກ່າວໂດຍຫຍໍ້ດັ່ງຕໍ່ລົງໄປນີ້:

**ອົບພະຍົບ 20:1-17** "*ພຣະເຈົ້າຊົງຕຣັສວ່າ ເຮົາຄື ພຣະເຢໂຮວາ ພຣະເຈົ້າຂອງພວກເຈົ້າ ຜູ້ໄດ້ນຳພວກເຈົ້າອອກຈາກປະເທດເອຢິບ ຄືອອກຈາກປະເທດທີ່ພວກເຈົ້າໄດ້ຕົກເປັນທາດ.*

1. *ຢ່າໄດ້ມີພຣະອື່ນຕໍ່ໜ້າເຮົາເລີຍຂໍ້ 3*
2. *ຢ່າເຮັດຮູບເຄົາຣົບສຳລັບຕົນຂໍ້ 4*
   *ຢ່າຂາບໄຫວ້ຮູບເຫຼົ່ານັ້ນ ເພາະວ່າເຮົາເປັນພຣະເຈົ້າຂອງພວກເຈົ້າຂໍ້ 5*
3. *ຢ່າໃຊ້ຊື່ພຣະຜູ້ເປັນເຈົ້າຂອງເຈົ້າໄປໃນທາງທີ່ຜິດ ເພາະເຮົາຈະລົງໂທດຜູ້ທີ່ໃຊ້ຊື່ເຮົາໄປໃນທາງທີ່ຜິດ ຂໍ້ 7*
4. *ພວກເຈົ້າຈົ່ງນັບຖືວັນສິນ (ວັນສະບາໂຕ) ໃຫ້ຖືເປັນວັນສັກສິດຂອງພຣະຜູ້ເປັນເຈົ້າ ຂໍ້8*
5. *ຈົ່ງນັບຖື ບິດາມານດາຂອງເຈົ້າ ຂໍ້ 12*
6. *ຢ່າຂ້າຄົນ ຂໍ້ 13*
7. *ຢ່າລ່ວງເກີນຜົວເມັຽຜູ້ອື່ນຂໍ້ 14*
8. *ຢ່າລັບຊັບ ຂໍ້ 15*
9. *ຢ່າເປັນພະຍານເທັດໃສ່ຮ້າຍເພື່ອນບ້ານຂອງຕົນ ຂໍ້ 16*
10. *ຢ່າໂລບສິ່ງໃດໆທີ່ເປັນຂອງເພື່ອນບ້ານຂອງທ່ານ ຂໍ້ 17*

## 19. ພຣະເຢຊູຄຣິສໄດ້ສະລຸບຂໍ້ຄວາມໃນພຣະບັນຍັດໃຫ້ສັ້ນເຂົ້າແບບໃດ?

ພຣະອົງຊົງສະລຸບດັ່ງນີ້ຄື: ຈົ່ງຮັກພຣະເຈົ້າດ້ວຍສຸດຈິດດ້ວຍສຸດໃຈ ດ້ວຍສຸດກຳລັງຄວາມຄິດຂອງທ່ານແລະຈົ່ງຮັກ

ເພື່ອນບ້ານເໝືອນຮັກຕົນເອງ. ສະລູບແລ້ວຄືຈົ່ງຮັກກັນດ້ວຍໃຈຈິງ ແລະຈົ່ງໃຫ້ພຣະເຈົ້າເປັນນື່ງໃນຊີວິດຂອງທ່ານ.

**ມັດທາຍ 22: 37-39** *"ພຣະເຢຊູຊົງຕອບວ່າ, "ຈົ່ງຮັກອົງພຣະຜູ້ເປັນເຈົ້າຂອງເຈົ້າດ້ວຍສຸດໃຈ ດ້ວຍສຸດຈິດ ແລະດ້ວຍສຸດຄວາມຄິດຂອງເຈົ້າ"ນັ້ນແຫລະ, ເປັນພຣະບັນຍັດຂໍ້ໃຫຍ່ແລະຂໍ້ຕົ້ນ.ຂໍ້ທີ່ສອງກໍເຫມືອນກັນຄື "ຈົ່ງຮັກເພື່ອນບ້ານເຫມືອນຮັກຕົນເອງ"*

## 20. ຖ້າຄົນທັງຫຼາຍຫາກປະຕິບັດຕາມພຣະບັນຍັດແລ້ວ ຈະກາຍເປັນຄົນຊອບທັມໄດ້ຫຼືບໍ?

ບໍ່ໄດ້ເລີຍ ທັງນີ້ກໍເພາະຜູ້ທີ່ປະພຶດຕາມພຣະບັນຍັດນັ້ນ ຈະບໍ່ສາມາດທຳໃຫ້ຕົນເອງປາສຈາກມົນທິນແຫ່ງຄວາມຜິດບາບໄດ້ເລີຍ ແຕ່ພວກເຂົາຈະກາຍເປັນຜູ້ຊອບທັມໄດ້ ໂດຍການມີຄວາມເຊື່ອໃນອົງພຣະເຢຊູຄຣິສເຈົ້າເທົ່ານັ້ນ ເພາະຜູ້ທີ່ຖືຮັກສາພຣະບັນຍັດໄດ້ໝົດ. ແຕ່ຖ້າຫາກຜິດເສັ່ຽຂໍ້ນື່ງ ຜູ້ນັ້ນກໍຖືວ່າທຳຜິດທັງໝົດພຣະບັນຍັດດ້ວຍ. "ເພາະວ່າທຸກຄົນໄດ້ເຮັດຜິດບາບແລະຂາດຈາກພຣະຣັສມີຂອງພຣະເຈົ້າ" ດັ່ງນັ້ນເຮົາຈຶ່ງແນ່ໃຈວ່າທຸກຄົນຕ້ອງມີຄວາມຜິດໃນການລ່ວງລະເມີດພຣະບັນຍັດຂອງພຣະເຈົ້າ.

**ຢາໂກໂບ 2:10** *"ເພາະວ່າຖ້າບຸກຄົນໃດຖືຮັກສາພຣະບັນຍັດໄດ້ທັງຫມົດ ແຕ່ຜິດຢູ່ຂໍ້ດຽວ ຜູ້ນັ້ນກໍກາຍເປັນຜູ້ຜິດພຣະບັນຍັດທັງຫມົດ"*

**ໂຣມ 3:23** *"ດ້ວຍວ່າທຸກຄົນໄດ້ເຮັດຜິດບາບ ແລະຂາດຈາກພຣະຣັສມີຂອງພຣະເຈົ້າ"*



## 21. ຖ້າເຊັ່ນນັ້ນ ພຣະເຈົ້າຊົງປະທານພຣະບັນຍັດໄວ້ເຮັດຫຽັງ?

ເພາະພຣະບັນຍັດໄດ້ທຳໃຫ້ເຮົາຮູ້ຈັກຄວາມຜິດ, ພຣະບັນຍັດກໍປຽບເຫມືອນຄຣູທີ່ຈະນຳເຮົາໃຫ້ສາມາດເຂົ້າເຖິງພຣະເຢຊູຄຣິສໄດ້. ເປັນເຄື່ອງສະແດງໃຫ້ເຮົາຮູ້ເຖິງຄວາມຈຳເປັນຢ່າງຍິ່ງໃນໃຈຂອງເຮົາທີ່ຈະໄດ້ຮັບການອະພັຍໂທດບາບ ເພາະອົງໃສ່ພຣະບັນຍັດແລ້ວພວກເຮົາບໍ່ສາມາດຈະປະຕິບັດຕາມທຸກໆຂໍ້ໄດ້ເລີຍ. ດັ່ງນັ້ນເຮົາຈະເປັນຄົນຊອບທັມໄດ້ກໍເພາະເຊື່ອໃນອົງພຣະເຢຊູຄຣິສເຈົ້າເທົ່ານັ້ນ.

**ໂຣມ 3:20** *"ເພາະວ່າໃນສາຍພຣະເນດຂອງພຣະເຈົ້າບໍ່ມີມະນຸດຄົນໃດຈະຊົງຖືວ່າເປັນຜູ້ຊອບທັມດ້ວຍການເຮັດຕາມພຣະບັນຍັດ ເພາະວ່າພຣະບັນຍັດໄດ້ເຮັດໃຫ້ສັງເກດຮູ້ຈັກຄວາມບາບ"*

**ຄາລາເຕັຽ 3:24** *"ເພາະສັນນັ້ນ ພຣະບັນຍັດຈຶ່ງປົກຄອງນຳພາພວກເຮົາໄປຈົນເຖິງພຣະຄຣິດສະເດັດມາ ເພື່ອພວກເຮົາຈະໄດ້ຊົງຖືວ່າເປັນຄົນຊອບທັມໂດຍອາສັຍຄວາມເຊື່ອ"*

# <u>ໂທດທັນແຫ່ງຄວາມຜິດບາບ</u>

## 22. ຄົນຜິດບາບຈະໄດ້ຮັບໂທດຢ່າງໃດ?

ໂທດທັນທີ່ຈະໄດ້ຮັບກໍຄືຄວາມຕາຍ ຊຶ່ງຜູ້ທີ່ຜິດບາບທັງຫຼາຍຈະຕ້ອງຕາຍທາງດ້ານຮ່າງກາຍ ແລະຈິດວິນຍານນຳອີກດ້ວຍ.

ການຕາຍແບບນີ້ຈະເປັນການຕາຍຊົ່ວນິຣັນດອນ ໝາຍຄວາມວ່າຕ້ອງແຍກອອກຈາກພຣະເຈົ້າໂດຍເດັດຂາດ ແລະຈະບໍ່ມີໂອກາດໄດ້ພົບເຫັນພຣະເຈົ້າອີກເລີຍ. ທັງຈິດໃຈກໍຈະບໍ່ມີຄວາມສງົບສຸກ. ຈະລະນຶກຢູ່ສເມີວ່າຕົວເອງເປັນຄົນຜິດບາບເຖິງແມ່ນວ່າຕົວເອງຈະຍັງຢູ່ໃນໂລກນີ້ກໍຕາມ.

**ປະຖົມການ 3:8-10** *"ໃນຄືນວັນນັ້ນ ພວກເຂົາໄດ້ຍິນສຽງຍ່າງຂອງພຣະຜູ້ເປັນເຈົ້າໃນສວນ ພວກເຂົາຈຶ່ງພາກັນຫລົບລີ້ຊ່ອນຢູ່ໃນຖ້າມກາງກົກໄມ້ ແຕ່ພຣະຜູ້ເປັນເຈົ້າໄດ້ຊົງເອີ້ນຫາຊາຍຜູ້ນັ້ນວ່າ, "ເຈົ້າຢູ່ໃສ?" ເຂົາຈຶ່ງຕອບວ່າ, "ຂ້າພຣະອົງໄດ້ຍິນສຽງຍ່າງຂອງພຣະອົງໃນສວນ ຂ້າພຣະອົງຢ້ານຈຶ່ງຫລົບລີ້ຊ່ອນຕົວຢູ່ ເພາະວ່າຂ້າພຣະອົງກໍາລັງເປືອຍກາຍ"*

**ໂຣມ 6:23** *"ດ້ວຍວ່າຄ່າຈ້າງຂອງຄວາມຜິດບາບກໍຄືຄວາມຕາຍ ແຕ່ຂອງພຣະຣາຊທານອັນໂຜດມາແຕ່ພຣະເຈົ້າກໍຄືຊີວິດອັນຕລອດໄປເປັນນິດໃນພຣະຄຣິດ ຄືພຣະເຢຊູເຈົ້າຂອງພວກເຮົາ"*

**2 ເທຊະໂລນິກ 1:8-9** *"ເພື່ອຈະລົງໂທດຕອບແທນຄົນທັງປວງທີ່ບໍ່ຮູ້ຈັກພຣະເຈົ້າ ແລະແກ່ຄົນທີ່ບໍ່ຍອມເຊື່ອຟັງຂ່າວປະເສີດເຣື່ອງພຣະເຢຊູເຈົ້າຂອງເຮົາທັງຫລາຍຄົນພວກນັ້ນຈະໄດ້ຖືກໂທດ ຄືຄວາມວິນາດຈິບຫາຍເປັນນິດ ແລະແຍກຫ່າງຈາກພຣະພັກຂອງພຣະຜູ້ເປັນເຈົ້າ ແລະຈາກຣິດທານຸພາບອັນຮຸ່ງເຮືອງຂອງພຣະອົງ"*

***ພຣະນິມິດ 21:8*** *"ແຕ່ສ່ວນຄົນຂີ້ໂຢ່ຍ ຄົນບໍ່ເຊື່ອ ຄົນທີ່ເຮັດການຫນ້າກຽດຫນ້າຊັງ ຄົນຄາຕກັມ ຄົນລ່ວງຜິດຊາຍຍິງ ຄົນໃຊ້ເວດມົນຄາຖາ ຄົນໄຫວ້ພຣະທຽມ ແລະຄົນຂີ້ຕົວະທຸກຄົນນັ້ນ*



*ມໍຣະດົກຂອງເຂົາຈະຢູ່ໃນບຶງທີ່ໄຫມ້ຢູ່ດ້ວຍໄຟປົນກັບມາດ ຊຶ່ງເປັນຄວາມຕາຍຄັ້ງທີ່ສອງ"*

## 23. ຄວາມຕາຍຈະເປັນທາງທີ່ເຮົາຈະສາມາດພົ້ນໂທດ ແລະເປັນບ່ອນທີ່ສາມາດເຮັດໃຫ້ທຸກສິ່ງສິ້ນສຸດລົງບໍ?

ມະນຸດທັງຫລາຍໄດ້ຖືກກໍານົດໄວ້ແລ້ວວ່າ ຈະຕ້ອງຕາຍຄັ້ງດຽວ ແຕ່ພາຍຫຼັງນັ້ນຈະຕ້ອງມີການພິພາກສາໂທດ. ເຮົາທຸກຄົນຈະຕ້ອງໄດ້ຢືນຢູ່ຕໍ່ໜ້າຂອງພຣະຜູ້ເປັນເຈົ້າເພື່ອພຣະອົງຈະພິພາກສາຄວາມຜິດບາບຂອງພວກເຮົາ. ຄວາມຕາຍບໍ່ສາມາດເຮັດໃຫ້ທຸກສິ່ງສິ້ນສຸດລົງເລີຍ ເພາະວິນຍານຂອງເຮົາທັງຫລາຍບໍ່ໄດ້ສູນສິ້ນໄປເລີຍ ແຕ່ກົງກັນຂ້າມວິນຍານຂອງບັນດາຄົນທັງຫລາຍທີ່ຕາຍໄປແລ້ວນັ້ນຈະຄົງຢູ່ສເມີ ເຖິງແມ່ນວ່າເຮົາຈະຂຶ້ນສະຫວັນຫຼືລົງນະຣົກກໍຕາມ.

**ເຮັບເຣີ 9:27-28** *"ມະນຸດຖືກຊົງກໍານົດໄວ້ແລ້ວວ່າຈະຕ້ອງຕາຍເທື່ອດຽວ ແລະຫລັງຈາກນັ້ນຈະມີການຊົງພິພາກສາສັນໃດພຣະຄຣິດກໍສັນນັ້ນ ຄືພຣະອົງຊົງຖວາຍພຣະອົງເອງເປັນເຄື່ອງບູຊາເທື່ອດຽວ ເພື່ອແບກບາບຂອງຄົນຈໍານວນຫລາຍໄວ້ພຣະອົງຈະຊົງປາກົດເປັນເທື່ອທີ່ສອງ ໂດຍບໍ່ກ່ຽວກັບບາບ ແຕ່ເພື່ອໂຜດບັນດາຜູ້ທີ່ລໍຄອຍພຣະອົງດ້ວຍໃຈຮ້ອນຣົນ ໃຫ້ໄດ້ຮັບຄວາມພົ້ນ"*

**ລູກາ 16:19-31** *"ຍັງມີເສດຖີຄົນນຶ່ງນຸ່ງຫົ່ມເສື້ອສີມ່ວງອ່ອນແລະຜ້າປ່ານເນື້ອລະອຽດ ປິຕິຍິນດີດ້ວຍອາຫານການກິນຢ່າງປະນີດທຸກໆວັນແລະມີຄົນຍາກຈົນຜູ້ນຶ່ງຊື່ ລາຊະໂຣເປັນ*

*ບາດເຕັມຕົວ ທີ່ເຂົາຫາມມາຖິ້ມໄວ້ທີ່ປະຕູບ້ານເສດຖີລາຊະໂຣ ຢາກກິນຂອງທີ່ຕົກຈາກໂຕະຂອງເສດຖີນັ້ນໃຫ້ອີ່ມ ແລະຫລາຍກວ່ານັ້ນຫມາກໍຍັງມາເລັຽບາດຂອງເຂົາຢູ່ມາຄົນຍາກຈົນຜູ້ນັ້ນກໍຕາຍ ແລະຝູງເທວະດາໄດ້ຮັບເອົາໄປໄວ້ໃນເອິກຂອງອັບຣາຮາມ ຝ່າຍເສດຖີນັ້ນກໍຕາຍເຫມືອນກັນ ແລ້ວເຂົາກໍຝັງໄວ້ເມື່ອຢູ່ໃນແດນມໍຣະນາກໍເປັນທຸກເວທະນາຫລາຍ ເສດຖີນັ້ນຈຶ່ງເງີຍຕາຂຶ້ນເຫັນອັບຣາຮາມຢູ່ໄກ ແລະເຫັນລາຊະໂຣຢູ່ໃນເອິກຂອງທ່ານແລ້ວເສດຖີຈຶ່ງຮ້ອງວ່າ, “ອັບຣາຮາມ ບິດາເອີຍ, ຂໍເອັນດູຂ້ານ້ອຍແດ່ທ້ອນ ຂໍຈົ່ງໃຊ້ລາຊະໂຣມາເພື່ອຈະໄດ້ເອົາປາຍນິ້ວມືຈຸ່ມນ້ຳມາແປະໃສ່ລີ້ນຂ້ານ້ອຍໃຫ້ຊຸ່ມເຢັນ ດ້ວຍວ່າຂ້ານ້ອຍກຳລັງທົນທຸກທໍຣະມານຢູ່ໃນແປວໄຟນີ້”ແຕ່ອັບຣາຮາມຕອບວ່າ, “ລູກເອີຍ, ເຈົ້າຈົ່ງລະນຶກວ່າເມື່ອເຈົ້າຍັງມີຊີວິດຢູ່ ເຈົ້າໄດ້ຮັບຂອງດີສຳລັບຕົວແລະລາຊະໂຣໄດ້ຮັບຂອງບໍ່ດີ ຢ່າງດຽວກັນນັ້ນແຫລະ, ບັດນີ້ລາຊະໂຣໄດ້ຮັບຄວາມເລົ້າໂລມຢູ່ທີ່ນີ້ ແລະເຈົ້າໄດ້ຮັບຄວາມທຸກທໍຣະມານນອກນັ້ນອີກ, ລະຫວ່າງພວກເຮົາກັບພວກເຈົ້າຍັງມີເຫວອັນໃຫຍ່ຊຶ່ງຊົງຕັ້ງຂວາງຢູ່ ເພື່ອວ່າຖ້າຜູ້ໃດທີ່ປາຖນາຈະຂ້າມທີ່ນີ້ໄປເຖິງພວກເຈົ້າກໍບໍ່ໄດ້ ຫລືບໍ່ໃຫ້ເຂົາຂ້າມຈາກທີ່ນັ້ນມາເຖິງພວກເຮົາ”ເສດຖີນັ້ນຈຶ່ງເວົ້າວ່າ, “ບິດາເອີຍ, ຖ້າຢ່າງນັ້ນ ຂໍທ່ານໃຊ້ລາຊະໂຣໄປຍັງເຮືອນພໍ່ຂອງຂ້ານ້ອຍ ເພາະວ່າຂ້ານ້ອຍມີອ້າຍນ້ອງຫ້າຄົນ ເພື່ອໃຫ້ລາຊະໂຣໄປຕັກເຕືອນເຂົາ ເພາະຢ້ານວ່າເຂົາຈະເຂົ້າມາໃນບ່ອນທໍຣະມານນີ້ເຫມືອນກັນ”ແຕ່ອັບຣາຮາມຕອບວ່າ, “ເຂົາມີໂມເຊ ແລະພວກຜູ້ປະກາດພຣະທັມແລ້ວ ໃຫ້ເຂົາຟັງຄົນເຫລົ່ານັ້ນສາ”ເສດຖີຈຶ່ງຕອບວ່າ, “ອັບຣາຮາມ ບິດາເອີຍ, ບໍ່ແມ່ນຢ່າງນັ້ນດອກ ແຕ່ຖ້າ*



*ຄົນນຶ່ງຈາກຫມູ່ຄົນຕາຍໄປຫາເຂົາ ເຂົາຄົງຈະຖິ້ມໃຈເກົ່າເອົາໃຈໃຫມ່”ອັບຣາຮາມຈຶ່ງຕອບວ່າ, “ຖ້າເຂົາບໍ່ຟັງໂມເຊ ແລະພວກຜູ້ປະກາດພຣະທັມ ເຖິງຈະມີຄົນນຶ່ງຄືນມາຈາກຕາຍ ເຂົາກໍຈະບໍ່ຍອມເຊື່ອເຫມືອນກັນ”*

## 24. ຖ້າເຮົາທຳຄວາມດີຢູ່ສເມີ ເຮົາຈະສາມາດພົ້ນໂທດແລະສາມາດຂຶ້ນສູ່ສະຫວັນໄດ້ຫຼືບໍ?

ຕາມສາຍຕາຂອງພຣະເຈົ້າແລ້ວ ບໍ່ວ່າເຮົາຈະເຮັດສິ່ງໃດກໍຕາມມັນຈະລ້ວນແຕ່ແມ່ນສິ່ງທີ່ເປື້ອນເປິທັງນັ້ນ ອຳນາດໃນຕົວຂອງເຮົາເອງບໍ່ມີຄວາມເຂັ້ມແຂງພໍທີ່ຈະທຳຄວາມດີ ຕາມນ້ຳພຣະທັຍຂອງພຣະເຈົ້າໄດ້ເລີຍ. ດັ່ງນັ້ນເຮົາຈຶ່ງບໍ່ສາມາດກະທຳການສິ່ງໃດເພື່ອຈະນຳພາເຮົາຂຶ້ນສູ່ສະຫວັນດ້ວຍຕົວເຮົາເອງໄດ້ເລີຍ. ບໍ່ມີທາງໃດທີ່ເຮົາຈະສາມາດຫລຸດພົ້ນຈາກການພິພາກສາຂອງພຣະເຈົ້າໄດ້ເລີຍ, ນອກຈາກເຮົາຈະຍອມຮັບເອົາທາງແຫ່ງຄວາມລອດພົ້ນຈາກພຣະອົງ.

**ຕີໂຕ 3:5** *“ພຣະອົງໄດ້ຊົງໂຜດເຮົາທັງຫລາຍໃຫ້ພົ້ນ ບໍ່ແມ່ນຍ້ອນກິຈການອັນຊອບທັມທີ່ພວກເຮົາເອງໄດ້ເຮັດ ແຕ່ພຣະອົງໄດ້ຊົງພຣະກະຣຸນາຊຳຣະໃຫ້ພວກເຮົາມີໃຈບັງເກີດໃຫມ່ ແລະຊົງສ້າງພວກເຮົາຂຶ້ນໃຫມ່ໂດຍພຣະວິນຍານບໍຣິສຸດ”*

**ໂຣມ 3:12** *“ທຸກຄົນໄດ້ຫລົງເວັ້ນໄປ ເຂົາພາກັນເປັນຄົນຊົ່ວໄປຫມົດ ຜູ້ເຮັດການດີບໍ່ມີຈັກຄົນດຽວ”*

**ເຮັບເຣີ 2:1-3** *“ເຫດສັນນັ້ນພວກເຮົາຄວນເອົາໃຈໃສ່ ໃນຂໍ້ຄວາມທີ່ພວກເຮົາໄດ້ຍິນໄດ້ຟັງນັ້ນໃຫ້ຫລາຍຂຶ້ນອີກ ຢ້ານວ່າພວກເຮົາຈະລ່ວງກາຍໄປຈາກຂໍ້ຄວາມເຫລົ່ານັ້ນດ້ວຍວ່າເມື່ອ*

*ຖ້ອຍຄຳຊຶ່ງເທວະດາໄດ້ກ່າວນັ້ນປາກົດເປັນຈິງ ແລະການລ່ວງລະເມີດກັບການບໍ່ເຊື່ອຟັງທຸກຢ່າງໄດ້ຮັບຜົນຕອບສນອງຕາມຄວາມຍຸດຕິທັມແລ້ວ ດັ່ງນັ້ນ, ຖ້າພວກເຮົາລະເລີຍຕໍ່ຄວາມລອດພົ້ນອັນໃຫຍ່ຫລວງນີ້ ພວກເຮົາຈະຫນີພົ້ນໄປໄດ້ຢ່າງໃດ ຄວາມພົ້ນນັ້ນອົງພຣະຜູ້ເປັນເຈົ້າໄດ້ຊົງປະກາດໃນເວລາທີ່ວທີ ແລະບັນດາຜູ້ທີ່ໄດ້ຍິນກໍຢືນຢັນແກ່ພວກເຮົາວ່າເປັນຄວາມຈິງ"*

# <u>ພຣະເຢຊູຄຣິສຊົງເປັນພຣະຜູ້ຊ່ອຍໃຫ້ລອດ</u>

## 25. ພຣະເຈົ້າຊົງປະທານຄວາມລອດໃຫ້ແກ່ມະນຸດໂດຍວິທີໃດ?

ພຣະເຈົ້າບໍ່ປາຖນາຈະໃຫ້ຄົນນຶ່ງຄົນໃດຕ້ອງພົບກັບຄວາມພິນາດຈິບຫາຍເລີຍ. ພຣະອົງຊົງ ຮັກມະນຸດທັງຫຼາຍຈຶ່ງໄດ້ປະທານພຣະບຸດອົງດຽວຂອງພຣະອົງໃຫ້ລົງມາປະສູດໃນໂລກມະນຸດເພື່ອເປັນຜູ້ມາຮັບໂທດແທນເຮົາທັງຫຼາຍ ໂດຍທີ່ພຣະອົງຊົງຍອມຖືກຕອກຄຶງໄວ້ທີ່ໄມ້ກາງແຂນ, ເພາະເຫດທີ່ພຣະບຸດໄດ້ລົງມາຕາຍແທນພວກເຮົານີ້ແຫຼະ, ພວກເຮົາຈຶ່ງສາມາດກັບຄືນຫາພຣະເຈົ້າໄດ້ອີກ.

**2 ເປໂຕ 3:9** *"ອົງພຣະຜູ້ເປັນເຈົ້າບໍ່ໄດ້ຊົງເສີຍຊ້າໃນເຣື່ອງພຣະສັນຍາຂອງພຣະອົງ ເຫມືອນດັ່ງບາງຄົນຄິດວ່າຊ້າ ແຕ່ພຣະອົງຊົງອົດກັ້ນພຣະທັຍໄວ້ດົນນານເພາະເຫັນແກ່ທ່ານທັງຫລາຍ ພຣະອົງບໍ່ຊົງປະສົງທີ່ຈະໃຫ້ຜູ້ນຶ່ງຜູ້ໃດຈິບຫາຍເສັຽ ແຕ່ຊົງປາຖນາທີ່ຈະໃຫ້ຄົນທັງປວງມາເຖິງການຖີ້ມໃຈເກົ່າເອົາໃຈໃຫມ່ ວັນຂອງອົງພຣະຜູ້ເປັນເຈົ້າຈະມາເຖິງເຫມືອນດັ່ງຂະໂມຍມາ ໃນວັນນັ້ນທ້ອງຟ້າຈະລ່ວງເສັຽໄປດ້ວຍສຽງດັງກ້ອງສນັ່ນ ໂລກທາດຈະສລາຍໄປດ້ວຍໄຟ ແລະແຜ່ນດິນໂລກກັບສາຣະພັດທຸກສິ່ງຈະໄຫມ້ເສັຽຫມົດ"*



**ໂຢຮັນ 3:16** *"ເພາະວ່າພຣະເຈົ້າຊົງຮັກໂລກຈົນໄດ້ປະທານພຣະບຸດອົງດຽວຂອງພຣະອົງ ເພື່ອທຸກຄົນທີ່ວາງໃຈເຊື່ອໃນພຣະບຸດນັ້ນຈະບໍ່ຈິບຫາຍ ແຕ່ມີຊີວິດອັນຕລອດໄປເປັນນິດ"*

**2 ໂກຣິນໂທ 5:18-19** *"ສິ່ງທັງປວງນີ້ເກີດມາຈາກພຣະເຈົ້າຜູ້ຊົງໂຜດໃຫ້ເຮົາຄືນດີກັບພຣະອົງທາງພຣະຄຣິດ ແລະຊົງປະທານໃຫ້ເຮົາມີຫນ້າທີ່ປະຕິບັດໃນການຄືນດີນັ້ນຄືພຣະເຈົ້າຜູ້ຊົງສະຖິດຢູ່ໃນອົງພຣະຄຣິດ ໄດ້ຊົງກະທຳໃຫ້ມະນຸດຄືນດີກັນກັບພຣະອົງ ບໍ່ໄດ້ຊົງຖືໂທດໃນການຜິດບາບຂອງເຂົາ ແລະຊົງມອບຂ່າວເຣື່ອງການທີ່ພຣະອົງໃຫ້ຄືນດີກັນນັ້ນໄວ້ກັບເຮົາ"*

## 26. ພຣະບຸດອົງດຽວຂອງພຣະເຈົ້າ ຄືໃຜ?

ຄື ພຣະເຢຊູຄຣິສເຈົ້າ. ພຣະເຈົ້າຜູ້ຊົງພຣະຊົນຢູ່ຕລອດໄປເປັນນິດ, ພຣະອົງຊົງເປັນພຣະຜູ້ຊ່ອຍໃຫ້ລອດ ແລະທັງເປັນພຣະຜູ້ໄຖ່ຂອງຄົນທັງຫຼາຍ.

**ມັດທາຍ 1:21** *"ນາງຈະປະສູດບຸດ ແລ້ວເຈົ້າຈຶ່ງຖວາຍນາມທ່ານວ່າ ເຢຊູ ເພາະວ່າທ່ານຜູ້ນີ້ແຫລະ, ຈະເປັນຜູ້ໂຜດໄພ່ພົນຂອງຕົນໃຫ້ລອດພົ້ນຈາກຄວາມຜິດບາບຂອງເຂົາ"*

**ໂຢຮັນ 1:1-18** *"ເມື່ອຕົ້ນເດີມນັ້ນພຣະທັມຊົງເປັນຢູ່ແລ້ວພຣະທັມນັ້ນຊົງສະຖິດຢູ່ກັບພຣະເຈົ້າ ພຣະທັມນັ້ນແຫລະ,*

*ຊົງເປັນພຣະເຈົ້າເມື່ອຕົ້ນເດີມນັ້ນພຣະທັມຊົງສະຖິດຢູ່ກັບພຣະເຈົ້າ  ພຣະເຈົ້າຊົງສ້າງສິ່ງທັງປວງຂຶ້ນມາໂດຍພຣະທັມ ໃນບັນດາສິ່ງທີ່ເປັນມານັ້ນ ບໍ່ມີຈັກສິ່ງທີ່ເປັນມາໂດຍນອກຈາກພຣະທັມ ພຣະທັມນັ້ນຊົງມີຊີວິດຢູ່ໃນພຣະອົງເອງ ແລະຊີວິດນັ້ນເປັນຄວາມສວ່າງຂອງມະນຸສໂລກ ຄວາມສວ່າງກໍສ່ອງເຂົ້າມາໃນມືດ ແລະຄວາມມືດນັ້ນບໍ່ໄດ້ຊະນະຕໍ່ຄວາມສວ່າງ ແລະເກີດມີຊາຍຄົນນຶ່ງທີ່ພຣະເຈົ້າຊົງໃຊ້ມາ ຊື່ວ່າ ໂຢຮັນທ່ານໄດ້ມາເປັນພະຍານ ເພື່ອອ້າງຄວາມພະຍານເຣື່ອງຄວາມສວ່າງນັ້ນ ເພື່ອຄົນທັງປວງຈະໄດ້ເຊື່ອໃນດ້ວຍທ່ານທ່ານບໍ່ແມ່ນຄວາມສວ່າງແຕ່ມາເປັນພະຍານກ່ຽວເຣື່ອງຄວາມສວ່າງນັ້ນອັນນີ້ຄືຄວາມສວ່າງອັນແທ້ຈິງ ທີ່ຂນະນັ້ນກຳລັງເຂົ້າມາໃນໂລກແລະສ່ອງເຖິງຄົນທັງປວງພຣະອົງຊົງສະຖິດຢູ່ໃນໂລກຊຶ່ງພຣະເຈົ້າຊົງສ້າງຂຶ້ນດ້ວຍພຣະອົງນັ້ນ ແຕ່ໂລກບໍ່ໄດ້ຮູ້ຈັກພຣະອົງພຣະອົງໄດ້ສະເດັດມາຍັງບ້ານເມືອງຂອງພຣະອົງ ແລະຊາວບ້ານຊາວເມືອງຂອງພຣະອົງບໍ່ໄດ້ຕ້ອນຮັບພຣະອົງແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບພຣະອົງ ຄືຜູ້ທີ່ເຊື່ອໃນພຣະນາມຂອງພຣະອົງ ພຣະອົງຊົງປະທານສິດໃຫ້ກາຍເປັນບຸດຂອງພຣະເຈົ້າຊຶ່ງບໍ່ໄດ້ເກີດຈາກເລືອດເນື້ອ ຫລືກາມ ຫລືຄວາມປະສົງຂອງມະນຸດ ແຕ່ເກີດຈາກພຣະເຈົ້າພຣະທັມໄດ້ຊົງບັງເກີດເປັນມະນຸດ ແລະຊົງອາໄສຢູ່ຖ້າມກາງເຮົາທັງຫລາຍບໍຣິບູນດ້ວຍພຣະຄຸນແລະຄວາມຈິງເຮົາທັງຫລາຍໄດ້ເຫັນສະງ່າຣາສີຂອງພຣະອົງ ຄືສະງ່າຣາສີອັນສົມກັບພຣະບຸດອົງດຽວຂອງພຣະອົງໂຢຮັນໄດ້ເປັນພຍານໃຫ້ແກ່ພຣະອົງແລະຮ້ອງປະກາດວ່າ, "ຜູ້ນີ້ແຫລະ, ຄືຜູ້ທີ່ເຮົາໄດ້ກ່າວເຖິງວ່າ "ຜູ້ທີ່ມາພາຍຫລັງເຮົາກໍຈະອອກກ່ອນຫນ້າເຮົາ ເພາະ*



*ທ່ານເປັນຢູ່ກ່ອນ ເຮົາ"ແລະເຮົາທຸກຄົນໄດ້ຮັບຈາກຄວາມຄົບບໍຣິບູນຂອງພຣະອົງ ເປັນພຣະຄຸນຊ້ອນພຣະຄຸນເພາະວ່າພຣະເຈົ້າໄດ້ຊົງປະທານພຣະບັນຍັດນັ້ນດ້ວຍໂມເຊ ສ່ວນພຣະຄຸນແລະຄວາມຈິງມາດ້ວຍພຣະເຢຊູຄຣິດບໍ່ມີໃຜໄດ້ເຫັນພຣະເຈົ້າຈັກເທື່ອແຕ່ພຣະບຸດອົງດຽວ ຜູ້ຊົງເປັນພຣະເຈົ້າຊຶ່ງຊົງສະຖິດຢູ່ໃນພຣະຊວງຂອງພຣະບິດາ ພຣະອົງນັ້ນແຫລະ, ໄດ້ຊົງສະແດງໃຫ້ຮູ້"*

## 27. ພຣະເຢຊູຄຣິສ ພຣະບຸດຂອງພຣະເຈົ້າຊົງຮັບເອົາສະພາບມະນຸດຢ່າງໃດ?

ພຣະອົງຊົງຮັບເອົາສະພາບເປັນມະນຸດ ໂດຍມີຮູບກາຍເຊັ່ນດຽວກັນກັບຄົນທັງຫລາຍ, ແຕ່ພຣະອົງຊົງລົງມາບັງເກີດ ໂດຍຣິດເດດ ແຫ່ງພຣະວິນຍານບໍຣິສຸດ, ຊົງບັງເກີດຈາກນາງມາຣີອາຍິງພົມມະຈາຣີ ແລະພຣະອົງເອງກໍຊົງເປັນຜູ້ທີ່ປາສຈາກຄວາມຜິດບາບທັງມວນ.

**ມັດທາຍ 1:23** *"ເບິ່ງແມ໋, ຍິງພົມມະຈາຣີນັ້ນຈະມີທ້ອງແລະປະສູດບຸດຄົນນຶ່ງ ແລະເຂົາຈະເອີ້ນບຸດນັ້ນວ່າ ເອມານູເອນ" (ແປວ່າ "ພຣະເຈົ້າຊົງສະຖິດຢູ່ກັບເຮົາທັງຫລາຍ")*

**ລູກາ 1:31-35** *"ເບິ່ງແມ໋, ເຈົ້າຈະມີທ້ອງແລະປະສູດບຸດຊາຍ ຈົ່ງຕັ້ງຊື່ບຸດນັ້ນວ່າ ເຢຊູບຸດນັ້ນຈະໄດ້ເປັນໃຫຍ່ ແລະຈະຊົງເອີ້ນວ່າພຣະບຸດຂອງຜູ້ສູງສຸດ ອົງພຣະຜູ້ເປັນເຈົ້າຊົງປະທານພຣະທີ່ນັ່ງຂອງກະສັດດາວິດ ຜູ້ເປັນບັນພະບຸຣຸດຂອງທ່ານ ໃຫ້ແກ່ທ່ານແລະທ່ານຈະສເວີຍຣາຊຄຸ້ມຄອງເຊື້ອສາຍຂອງຢາໂຄບສືບໆໄປເປັນນິດ ແລະຣາຊອານາຈັກຂອງທ່ານຈະບໍ່ຮູ້ສິ້ນສຸດ"ຝ່າຍມາຣີອາຈຶ່ງທູນເທວະດານັ້ນວ່າ, "ເຫດການນີ້ຈະເປັນໄປ*

*ໄດ້ຢ່າງໃດ ເພາະຂ້ານ້ອຍຍັງບໍ່ທັນໄດ້ຮ່ວມຮູ້ກັບຊາຍຈັກເທື່ອ" ເທວະດາໄດ້ຕອບນາງວ່າ, "ພຣະວິນຍານບໍຣິສຸດຈະສະເດັດລົງມາເຖິງເຈົ້າ ແລະຣິດເດດຂອງຜູ້ສູງສຸດຈະປົກຄຸມເຈົ້າໄວ້ ເຫດສັນນີ້ບຸດທີ່ຈະເກີດມານັ້ນຈະໄດ້ເອີ້ນວ່າບໍຣິສຸດ ຄືພຣະບຸດຂອງພຣະເຈົ້າ"*

***ໂຢຮັນ 1:15*** *ໂຢຮັນໄດ້ເປັນພຍານໃຫ້ແກ່ພຣະອົງແລະຮ້ອງປະກາດວ່າ, "ຜູ້ນີ້ແຫລະ, ຄືຜູ້ທີ່ເຮົາໄດ້ກ່າວເຖິງວ່າ "ຜູ້ທີ່ມາພາຍຫລັງເຮົາກໍຈະອອກກ່ອນຫນ້າເຮົາ ເພາະທ່ານເປັນຢູ່ກ່ອນເຮົາ"*

**ຟີລິປອຍ 2:7-8** *"ແຕ່ໄດ້ກັບຊົງຍອມສລະ ແລະຊົງຮັບສະພາບຂ້ອຍຂ້າ ຊົງຖືກຳເນີດເປັນມະນຸດແລະເມື່ອຊົງປາກົດພຣະອົງໃນສະພາບມະນຸດແລ້ວ ພຣະອົງກໍຊົງຖ່ອມພຣະອົງລົງ ຍອມເຊື່ອຟັງຈົນເຖິງຄວາມມໍຣະນາ ຄືເຖິງຄວາມມໍຣະນາທີ່ໄມ້ກາງແຂນ"*

## 28. ພຣະເຢຊູຄຣິສຊົງເປັນຢູ່ຕັ້ງແຕ່ກ່ອນທີ່ຈະມາບັງເກີດໃນໂລກມະນຸດແທ້ບໍ?

ແມ່ນແລ້ວ ພຣະອົງຊົງດຳຣົງຢູ່ເປັນນິດ ກັບພຣະບິດາເຈົ້າ. ພຣະອົງຊົງເປັນເບື້ອງຕົ້ນແລະເບື້ອງປາຍ ພຣະອົງຊົງດຳຣົງຢູ່ຕັ້ງແຕ່ອະດີດຕລອດເຖິງອະນາຄົດ ຈະບໍ່ມີຍາມສິ້ນສຸດເລີຍ.

**ໂຢຮັນ 1:14** *"ພຣະທັມໄດ້ຊົງບັງເກີດເປັນມະນຸດ ແລະຊົງອາໄສຢູ່ຖ້າມກາງເຮົາທັງຫລາຍບໍຣິບູນດ້ວຍພຣະຄຸນແລະຄວາມຈິງ ເຮົາທັງຫລາຍໄດ້ເຫັນສະງ່າຣາສີຂອງພຣະອົງ ຄືສະງ່າຣາສີອັນສົມກັບພຣະບຸດອົງດຽວຂອງພຣະອົງ"*



**ໂກໂລຊາຍ 1:15-18** *"ພຣະອົງຊົງເປັນແບບລັກສະນະຂອງພຣະເຈົ້າ ຜູ້ຊຶ່ງຕາເຫັນບໍ່ໄດ້ ຊົງເປັນບຸດແຣກເຫນືອສາຣະພັດທີ່ຊົງນິຣະມິດສ້າງຂຶ້ນນັ້ນເພາະວ່າໃນພຣະອົງ ພຣະເຈົ້າໄດ້ຊົງສ້າງສັພສິ່ງຂຶ້ນ ທັງໃນທ້ອງຟ້າແລະເທິງແຜ່ນດິນໂລກ ສິ່ງທີ່ຕາເຫັນໄດ້ ແລະທີ່ເຫັນບໍ່ໄດ້ ຈະເປັນພຣະທີ່ນັ່ງຫລືເປັນອານຸພາບເປັນຜູ້ປົກຄອງຫລືຜູ້ມີອຳນາດ ສິ່ງທັງປວງເຫລົ່ານີ້ແມ່ນພຣະເຈົ້າໄດ້ສ້າງໂດຍທາງພຣະອົງແລະສຳລັບພຣະອົງພຣະອົງຊົງເປັນຢູ່ກ່ອນສິ່ງສາຣະພັດ ແລະສິ່ງສາຣະພັດນັ້ນເປັນລະບຽບຢູ່ໂດຍພຣະອົງ ພຣະອົງຊົງເປັນສີສະຂອງກາຍ ຄືຄຣິສຕະຈັກພຣະອົງຊົງເປັນປະຖົມ ເປັນຜູ້ແຣກທີ່ຖືກຊົງບັນດານໃຫ້ຄືນມາຈາກຕາຍ ເພື່ອພຣະອົງຈະຊົງເປັນເອກໃນສັພສິ່ງທັງປວງ"*

## 29. ພຣະນາມຂອງພຣະເຢຊູຄຣິສ ແປວ່າຫຍັງ?

ພຣະເຢຊູ ແປວ່າ ພຣະຜູ້ຊ່ອຍໃຫ້ລອດ. ພຣະຄຣິສ ແປວ່າ ຜູ້ທີ່ພຣະເຈົ້າຊົງຊະໂລມໄວ້. ອິມານູເອນ ແປວ່າ ພຣະເຈົ້າຊົງຢູ່ກັບເຮົາ.

**ມັດທາຍ 1:21** *"ນາງຈະປະສູດບຸດ ແລ້ວເຈົ້າຈົ່ງຖວາຍນາມທ່ານວ່າ ເຢຊູ ເພາະວ່າທ່ານຜູ້ນີ້ແຫລະ, ຈະເປັນຜູ້ໂຜດໄພ່ພົນຂອງຕົນໃຫ້ລອດພົ້ນຈາກຄວາມຜິດບາບຂອງເຂົາ"*

**ລູກາ 4:18** *"ພຣະວິນຍານແຫ່ງອົງພຣະຜູ້ເປັນເຈົ້າຊົງສະຖິດຢູ່ເທິງຂ້າພະເຈົ້າ ເພາະວ່າພຣະອົງໄດ້ຫົດສົງຕັ້ງຂ້າພະເຈົ້າໄວ້ ໃຫ້ປະກາດຂ່າວປະເສີດແກ່ຄົນຍາກຈົນ ພຣະອົງໄດ້ຊົງໃຊ້ຂ້າພະເຈົ້າປະກາດອິສຣະພາບແກ່ບັນດາຊະເລີຍ ໃຫ້ປະກາດແກ່*

*ຄົນຕາບອດວ່າຈະໄດ້ເຫັນຮຸ່ງອີກ ໃຫ້ປ່ອຍຜູ້ຖືກບີບບັງຄັບເປັນອິສຣະ"*

**ມັດທາຍ 1:23** *"ເບິ່ງແມ່, ຍິງພົມມະຈາຣີນັ້ນຈະມີທ້ອງແລະປະສູດບຸດຄົນນຶ່ງ ແລະເຂົາຈະເອີ້ນບຸດນັ້ນວ່າ ເອມານູເອນ" ( ແປວ່າ "ພຣະເຈົ້າຊົງສະຖິດຢູ່ກັບເຮົາທັງຫລາຍ")*

## 30. ພຣະເຢຊູຊົງກຳເນີດເວລາໃດ? ແລະເກີດຢູ່ໃສ?

ຊົງບັງເກີດກວ່າ 2000 ປີມາແລ້ວ, ທີ່ໝູ່ບ້ານເບັດເລເຮັມ, ປະເທດປາແລສຕາຍ ໃນທະວີບເອເຊັຽ.

**ມັດທາຍ 2:1** *"ເມື່ອພຣະເຢຊູຊົງປະສູດຢູ່ບ້ານເບດເລເຮັມແຂວງຢູດາຍໃນສະໄຫມຂອງກະສັດເຮໂຣດ ເບິ່ງແມ່, ມີພວກໂຫຣາຈານຈາກທິດຕາເວັນອອກມາຍັງກຸງເຢຣູຊາເລັມ"*

## 31. ພຣະເຢຊູຄຣິສຊົງມີພຣະຊົນໃນໂລກນີ້ຈັກປີ? ແລະທຳການປະກາດຈັກປີ?

ພຣະເຢຊູຄຣິສ ໄດ້ມີພຣະຊົນຢູ່ໃນໂລກນີ້ປະມານ 33ປີ. ແລະຊົງໄດ້ທຳການປະກາດຂ່າວປະເສີດຂອງພຣະອົງຢູ່ປະມານ 3 ປີເຄິ່ງ.

**ລູກາ 3:21-23** *"ຢູ່ມາເມື່ອຄົນທັງປວງໄດ້ຮັບບັບຕິສະມາ ແລະພຣະເຢຊູກໍຊົງຮັບບັບຕິສະມາເຫມືອນກັນ ຂນະເມື່ອພຣະອົງຊົງໄຫວ້ວອນຢູ່ ທ້ອງຟ້າກໍໄຂອອກແລະພຣະວິນຍານບໍຣິສຸດຊົງຮູບເຫມືອນນົກເຂົາໄດ້ສະເດັດລົງມາສະຖິດຢູ່ເທິງພຣະອົງ ແລະມີພຣະສຸຣະສຽງອອກມາຈາກຟ້າສວັນວ່າ, "ທ່ານເອີຍ, ທ່ານເປັນບຸດທີ່ຮັກຂອງເຮົາ ເຮົາຊອບໃຈຫລາຍໃນທ່ານ" ເມື່ອພຣະ*



*ເຢຊູຊົງຕັ້ງຕົ້ນປະຕິບັດຫນ້າທີ່ ພຣະອົງມີພຣະຊົນມາຍຸປະມານສາມສິບພັນສາ (ຕາມຄວາມຄາດຫມາຍຂອງຄົນທັງຫລາຍເຂົ້າໃຈວ່າ) ເປັນບຸດຂອງໂຢເຊບ ຊຶ່ງເປັນບຸດຂອງເຮລີ"*

## 32. ເມື່ອພຣະເຢຊູຄຣິສດຳຣົງຊີວິດຢູ່ໃນໂລກນີ້ ພຣະອົງໄດ້ທຳການສິ່ງໃດແດ່?

ພຣະອົງໄດ້ສະເດັດໄປທົ່ວທຸກໝູ່ບ້ານ. ຊົງສັ່ງສອນໃນໂຮງທັມມະເທສນາ, ຊົງປະກາດຂ່າວປະເສີດເຣື່ອງແຜ່ນດິນສະຫວັນຂອງພຣະເຈົ້າ. ຊົງຮັກສາໂຣກພັຍໄຂ້ເຈັບຂອງປະຊາຊົນໃຫ້ຫາຍດີ. ຊົງໂຜດຄົນຕາຍແລ້ວໃຫ້ກັບຄືນມີຊີວິດອີກ ແລະບັນດາຄົນທີ່ຖືກຜີສິງໃຫ້ຫາຍດີ.

**ມັດທາຍ 4:23-25** *"ພຣະເຢຊູໄດ້ສະເດັດໄປທົ່ວແຂວງຄາລີເລ ຊົງສັ່ງສອນໃນໂຮງທັມມະເທສນາຂອງເຂົາ ຊົງປະກາດຂ່າວປະເສີດເຣື່ອງຣາຊອານາຈັກນັ້ນ ແລະຊົງໂຜດພົລເມືອງທີ່ເຈັບໄຂ້ໄດ້ພຍາດທຸກຢ່າງໃຫ້ດີຫມົດກິດຕິສັບຂອງພຣະອົງກໍຊ່າລືໄປທົ່ວປະເທດຊີເຣັຽ ເຂົາຈຶ່ງພາຄົນປ່ວຍໄຂ້ໄດ້ພຍາດຕ່າງໆ, ຄົນທີ່ທົນທຸກທໍຣະມານ, ຄົນທີ່ຜີເຂົ້າສິງ, ຄົນບ້າຫມູແລະຄົນເປັນເປັ້ຽມາຫາພຣະອົງ ພຣະອົງກໍຊົງໂຜດໃຫ້ເຂົາດີທຸກຄົນແລະມີຄົນຫມູ່ໃຫຍ່ມາຈາກແຂວງຄາລີເລ, ຈາກແຂວງເດກາໂປລີ, ຈາກກຸງເຢຣູຊາເລັມ, ແລະຢູເດັຽ ແລະຈາກແມ່ນ້ຳຈໍແດນຟາກນັ້ນຕິດຕາມພຣະອົງໄປ"*

**ລູກາ 7:11-17** *"ຫລັງຈາກນັ້ນຫນ້ອຍນຶ່ງພຣະອົງກໍສະເດັດໄປຍັງເມືອງນຶ່ງຊື່ ນາອີນ ພວກສາວົກຂອງພຣະອົງກັບປະຊາຊົນຫລວງຫລາຍໄດ້ຕາມພຣະອົງໄປເມື່ອສະເດັດມາໃກ້ປະຕູ*

*ເມືອງນັ້ນ ເບິ່ງແມ່, ມີຄົນກຳລັງຫາມສົບຊາຍໜຸ່ມຜູ້ນຶ່ງອອກມາ ເປັນລູກຊາຍຄົນດຽວຂອງແມ່ ແລະນາງກໍເປັນໝ້າຍ ມີຊາວເມືອງຫລາຍສົມຄວນອອກມານຳຍິງນັ້ນເມື່ອຊົງເຫັນຍິງນັ້ນ ພຣະອົງກໍຊົງເມດຕາແລ້ວຊົງກ່າວວ່າ, "ຢ່າຮ້ອງໄຫ້"ແລ້ວພຣະອົງສະເດັດເຂົ້າໄປໃກ້ບາຍໂລງ ພວກຫາມສົບນັ້ນກໍຢຸດຢືນຢູ່ ພຣະອົງຈຶ່ງຊົງສັ່ງວ່າ, "ຊາຍໜຸ່ມເອີຍ, ເຮົາສັ່ງເຈົ້າວ່າ ຈົ່ງລຸກຂຶ້ນ"ແລ້ວຄົນທີ່ຕາຍນັ້ນກໍລຸກຂຶ້ນນັ່ງຕັ້ງຕົ້ນເວົ້າ ພຣະອົງຈຶ່ງຊົງມອບຊາຍນັ້ນໃຫ້ແມ່ເຂົາຄວາມຢ້ານສະດຸ້ງຕົກໃຈກໍຕົກໃສ່ເຂົາທັງປວງ ເຂົາຈຶ່ງສັຣເສີນພຣະເຈົ້າວ່າ, "ທ່ານຜູ້ປະກາດພຣະທັມຜູ້ໃຫຍ່ໄດ້ເກີດຂຶ້ນທ່າມກາງພວກເຮົາແລ້ວ ແລະພຣະເຈົ້າໄດ້ສະເດັດມາຢ້ຽມຢາມພົລເມືອງຂອງພຣະອົງແລ້ວ"ເຣື່ອງຂອງພຣະອົງໄດ້ຊ່າລືໄປທົ່ວແຂວງຢູດາຍແລະທົ່ວຂົງເຂດທີ່ຢູ່ລ້ອມຮອບນັ້ນ"*

## 33. ເປັນຫຽັງພຣະບຸດຂອງພຣະເຈົ້າຈຶ່ງຖືກຕອກຄຶງໄວ້ທີ່ໄມ້ກາງແຂນ?

ເພາະພຣະອົງເປັນຜູ້ບໍຣິສຸດແລະຊອບທັມ, ໄດ້ຊົງເສັຽສະລະຊີວິດຂອງພຣະອົງເອງທີ່ໄມ້ກາງແຂນ ເພື່ອເປັນຄ່າໄຖ່ຄວາມຜິດຄວາມບາບຂອງຄົນທັງຫຼາຍ, ເພື່ອຈະໄດ້ມີໂອກາດຄືນດີກັນກັບພຣະເຈົ້າ

**1 ເປໂຕ 3:18** *"ດ້ວຍວ່າພຣະຄຣິດກໍເໝືອນກັນ, ໄດ້ສິ້ນພຣະຊົນເທື່ອດຽວເປັນການສິ້ນສຸດ ເພື່ອແທນຄວາມຜິດບາບ ຄືພຣະອົງຜູ້ຊອບທັມແທນຜູ້ບໍ່ຊອບທັມ ເພື່ອຈະນຳເຮົາທັງຫລາຍໄປ*



*ເຖິງພຣະເຈົ້າ ຝ່າຍກາຍພຣະອົງຊົງຖືກປະຫານເສັຽ ແຕ່ຝ່າຍວິນຍານພຣະອົງຖືກຊົງບັນດານໃຫ້ຄືນພຣະຊົນ"*

**1 ເປໂຕ2:24** *"ໃນພຣະກາຍຂອງພຣະອົງເອງ ພຣະອົງໄດ້ຊົງຮັບແບກບາບຂອງພວກເຮົາໄປເຖິງຕົ້ນໄມ້ນັ້ນ ເພື່ອພວກເຮົາຈະໄດ້ຕາຍເສັຽ ຝ່າຍການບາບ ແລະມີຊີວິດຝ່າຍຄວາມຊອບທັມດ້ວຍບາດແຜຂອງພຣະອົງ ທ່ານທັງຫລາຍກໍດີປົກກະຕິແລ້ວ"*

**2 ໂກຣິນໂທ 5:18-19** *"ສິ່ງທັງປວງນີ້ເກີດມາຈາກພຣະເຈົ້າຜູ້ຊົງໂຜດໃຫ້ເຮົາຄືນດີກັບພຣະອົງທາງພຣະຄຣິດ ແລະຊົງປະທານໃຫ້ເຮົາມີໜ້າທີ່ປະຕິບັດໃນການຄືນດີນັ້ນຄືພຣະເຈົ້າຜູ້ຊົງສະຖິດຢູ່ໃນອົງພຣະຄຣິດ ໄດ້ຊົງກະທຳໃຫ້ມະນຸດຄືນດີກັນກັບພຣະອົງ ບໍ່ໄດ້ຊົງຖືໂທດໃນການຜິດບາບຂອງເຂົາ ແລະຊົງມອບຂ່າວເຣື່ອງການທີ່ພຣະອົງໃຫ້ຄືນດີກັນນັ້ນໄວ້ກັບເຮົາ"*

## 34. ໃນການຝັງສົບຂອງພຣະເຢຊູຄຣິສ ໄດ້ມີການກວດຂັນຢ່າງໃດແດ່? ເປັນຫຽັງຈຶ່ງຕ້ອງເຮັດແບບນັ້ນ?

ພວກສັດຕຣູຂອງພຣະອົງໄດ້ໃຫ້ມີທະຫານເຝົ້າຍາມອຸບໂມງຝັງສົບຂອງພຣະເຢຊູຢ່າງແຂງແຮງ ພ້ອມທັງໃຫ້ມີການປະທັບຕາໃສ່ເທິງຫີນໄວ້ນຳອີກ. ການກະທຳດັ່ງກ່າວນີ້ກໍເປັນເພາະພຣະເຢຊູໄດ້ບອກຫຼາຍຄັ້ງວ່າພຣະອົງຈະເປັນຄືນມາໃນວັນທີ່ສາມທັງນີ້ກໍເພື່ອກັນບໍ່ໃຫ້ມີການລັກສົບແລະອື່ນໆ.

**ລູກາ 9:22** *"ແລ້ວຊົງກ່າວວ່າ, "ບຸດມະນຸດຈະຕ້ອງທົນທຸກທໍຣະມານຫລາຍປະການ ພວກເຖົ້າແກ່ກັບພວກປະໂຣຫິດຕົ້ນໃຫຍ່ ແລະພວກນັກທັມຈະບໍ່ຍອມຮັບທ່ານ ເຂົາຈະໄດ້ຂ້າທ່ານ*

*ເສັ່ງ ແລ້ວໃນວັນຖ້ວນສາມທ່ານຈະຖືກຊົງບັນດານໃຫ້ເປັນຄືນມາອີກ"*

**ລູກາ24:7** *"ວ່າບຸດມະນຸດຈະຕ້ອງຖືກມອບໄວ້ໃນມືຄົນບາບຈະຖືກຄຶງໄວ້ທີ່ໄມ້ກາງແຂນ ແລໃນວັນຖ້ວນສາມກໍຈະຄືນມາອີກ"*

**ມັດທາຍ 27:62-66** *"ວັນຫນ້າມາ ຄືວັນຖັດຈາກວັນຈັດແຈງ ພວກປະໂຣຫິດຕົນໃຫຍ່ກັບພວກຟາຣີຊາຍໄດ້ພາກັນໄປຫາປີລາດ ຮຽນວ່າ, "ທ່ານທີ່ນັບຖື, ພວກອາຕະມາຈື່ຈຳໄດ້ວ່າຄົນຫລອກລວງຜູ້ນັ້ນ ເມື່ອຍັງມີຊີວິດຢູ່ ເຂົາໄດ້ເວົ້າວ່າ, "ພາຍຫລັງສາມວັນແລ້ວເຮົາຈະເປັນຄືນມາ"ດ້ວຍເຫດນັ້ນຂໍທ່ານບັນຊາສັ່ງໃຫ້ເຝົ້າອຸບໂມງໄວ້ຢ່າງແຂງແຮງຈົນເຖິງວັນຖ້ວນສາມ ຢ້ານວ່າພວກສາວົກຂອງມັນຈະມາລັກເອົາສົບໄປແລ້ວຈະກ່າວຕໍ່ພົລເມືອງວ່າ "ທ່ານເປັນຄືນມາຈາກຕາຍແລ້ວ" ການຫລອກລວງຄັ້ງສຸດທ້າຍນີ້ຈະຮ້າຍແຮງກວ່າຄັ້ງກ່ອນ"ປີລາດໄດ້ບອກເຂົາວ່າ, "ພວກທ່ານມີທະຫານຍາມ ຈົ່ງໄປເຝົ້າ ໃຫ້ແຂງແຮງຕາມຄວາມເຫັນຂອງພວກທ່ານ"ແລະເຂົາກໍໄດ້ພາກັນໄປເຮັດໃຫ້ອຸບໂມງນັ້ນຫມັ້ນຄົງ ໂດຍປະທັບຕາໃສ່ຫີນໄວ້ແລະຕັ້ງທະຫານຍາມໃຫ້ເຝົ້າຢູ່"*

## 35. ພຣະເຢຊູຄຣິສໄດ້ເປັນຄືນມາຈາກຕາຍແທ້ບໍ?

ນີ້ເປັນຄວາມຈິງ ຄວາມຕາຍບໍ່ສາມາດຍຶດຫນ່ຽວພຣະອົງໄວ້ໄດ້ເລີຍ. ພຣະອົງຊົງເອົາຊະນະຕໍ່ຄວາມຕາຍແລະນາຮົກໄດ້ໂດຍການຊົງຄືນພຣະຊົນໃນວັນຖ້ວນສາມ.



**ລູກາ ບົດທີ 24** *"ແຕ່ຮຸ່ງເຊົ້າວັນຕົ້ນສັປດາ ຜູ້ຍິງເຫລົ່ານັ້ນໄດ້ນຳເອົາເຄື່ອງຫອມທີ່ຈັດໄວ້ນັ້ນມາເຖິງອຸບໂມງແລະເຂົາໄດ້ເຫັນກ້ອນຫີນນັ້ນກິ້ງອອກຈາກປາກອຸບໂມງແລ້ວ ແລະເມື່ອເຂົ້າໄປທັງໃນແລ້ວເຂົາກໍບໍ່ເຫັນພຣະສົບເມື່ອເຂົາກຳລັງຄຶດສງົນສົນເທດ້ວຍເຫດການນັ້ນ ເບິ່ງແມ່, ມີຊາຍສອງຄົນຢືນຢູ່ໃກ້ເຂົາ ນຸ່ງເຄື່ອງອັນງົດງາມຈົນເຫລື້ອມຕາຝ່າຍແມ່ຍິງເຫລົ່ານັ້ນກໍຢ້ານແລະກົ້ມຫນ້າລົງເຖິງດິນ ສອງຄົນນັ້ນໄດ້ຖາມເຂົາວ່າ, "ພວກນາງຊອກຄົນເປັນໃນຫມູ່ຄົນຕາຍເຮັດຫຍັງ(ພຣະອົງບໍ່ປະທັບຢູ່ທີ່ນີ້ ແຕ່ຖືກຊົງບັນດານໃຫ້ເປັນຄືນມາແລ້ວ) ຈົ່ງລະນຶກເຖິງຄຳທີ່ພຣະອົງຊົງກ່າວກັບທ່ານທັງຫລາຍ ເມື່ອພຣະອົງຍັງຢູ່ໃນແຂວງຄາລີເລນັ້ນວ່າບຸດມະນຸດຈະຕ້ອງຖືກມອບໄວ້ໃນມືຄົນບາບ ຈະຖືກຄຶງໄວ້ທີ່ໄມ້ກາງແຂນ ແລະໃນວັນຖ້ວນສາມກໍຈະຄືນມາອີກ"ແມ່ຍິງເຫລົ່ານັ້ນໄດ້ລະນຶກເຖິງຖ້ອຍຄຳຂອງພຣະອົງແລະເມື່ອໄດ້ກັບໄປຈາກອຸບໂມງແລ້ວ ເຂົາໄດ້ບອກເຫດການທັງປວງນັ້ນແກ່ພວກສິບເອັດຄົນນັ້ນແລະຄົນອື່ນໆເຫມືອນກັນຜູ້ທີ່ໄດ້ບອກເຫດການນັ້ນແກ່ພວກອັຄສາວົກ ຄືມາຣິອາມັກດາລາ ໂຢຮັນນາມາຣິອາແມ່ຂອງຢາໂກໂບ ພ້ອມດ້ວຍຜູ້ອື່ນໆທີ່ຢູ່ກັບເຂົາຝ່າຍພວກອັຄສາວົກບໍ່ເຊື່ອຄຳເວົ້າຂອງພວກຜູ້ຍິງ ເພາະຖືວ່າເປັນຄຳເວົ້າເປົ່າໆ(ແຕ່ເປໂຕໄດ້ລຸກຂຶ້ນແລ່ນມາຍັງອຸບໂມງ ເມື່ອກົ້ມລົງກໍເຫັນແຕ່ຜ້າຫໍ່ເທົ່ານັ້ນ ຈຶ່ງກັບໄປດ້ວຍຄຶດປລາດໃຈເຖິງເຫດການຊຶ່ງເກີດຂຶ້ນນັ້ນ)*

***ການເດີນທາງໄປເອມມາອູດ***

*ແລະເບິ່ງແມ່, ໃນວັນດຽວກັນນັ້ນຍັງມີສາວົກສອງຄົນກຳລັງໄປບ້ານເອມມາອູດ ຊຶ່ງໄກຈາກກຸງເຢຣູຊາເລັມປະມານຫົກພັນວາ*

ເຂົາທັງສອງໄດ້ສົນທະນາກັນເຖິງເຫດການທີ່ເກີດຂຶ້ນນັ້ນເມື່ອເຂົາກຳລັງສົນທະນາໄຕ່ຖາມກັນຢູ່ ພຣະເຢຊູກໍສະເດັດເຂົ້າມາໃກ້ເຂົາ ແລ້ວໄດ້ສະເດັດຮ່ວມທາງກັບເຂົາໄປແຕ່ຕາຂອງເຂົາໄດ້ຖືກຊົງບັງລັບໄວ້ ເພື່ອບໍ່ໃຫ້ເຂົາຮູ້ຈັກພຣະອົງພຣະອົງຊົງຖາມເຂົາວ່າ, “ເມື່ອມາຕາມທາງພວກທ່ານໄຕ່ຖາມກັນເຖິງເຣື່ອງໃດ” ແລະເຂົາໄດ້ຢຸດຢືນຢູ່ດ້ວຍໜ້າໂສກເສົ້າແລ້ວຄົນນຶ່ງຊື່ກະໂລປາ ໄດ້ທູນຖາມພຣະອົງວ່າ, “ໃນບັນດາແຂກເມືອງທີ່ມາອາສັຍຢູ່ໃນກຸງເຢຣູຊາເລັມ ມີແຕ່ທ່ານຜູ້ດຽວຫລື ທີ່ບໍ່ຮູ້ເຫດການຊຶ່ງເກີດຂຶ້ນທີ່ນັ້ນລະຫວ່າງວັນເຫລົ່ານີ້”ພຣະອົງຊົງຖາມເຂົາວ່າ, “ເຫດການອັນໃດ” ເຂົາທູນຕອບວ່າ, “ເຣື່ອງເຢຊູໄທນາຊາເຣັດທີ່ສະແດງຕົວເປັນຜູ້ປະກາດພຣະທັມປະກອບດ້ວຍຣິດເດດ ໃນກິຈການແລະໃນຖ້ອຍຄຳຕໍ່ພຣະພັກພຣະເຈົ້າແລະຕໍ່ໜ້າພົລເມືອງທັງໝົດຄືຜູ້ທີ່ພວກປະໂຣຫິດຕົນໃຫຍ່ແລະພວກເຈົ້ານາຍຂອງເຮົາ ໄດ້ມອບທ່ານໄວ້ໃຫ້ຕັດສິນລົງໂທດເຖິງຕາຍ ແລະໄດ້ຄຶງໄວ້ທີ່ໄມ້ກາງແຂນແຕ່ເຮົາທັງຫລາຍຫວັງໃຈວ່າ ຈະແມ່ນທ່ານຜູ້ນີ້ແຫລະ, ທີ່ຈະໄຖ່ຊົນຊາດອິສຣາເອນໃຫ້ພົ້ນ ຫລາຍກວ່ານັ້ນອີກ, ວັນນີ້ເປັນວັນຖ້ວນສາມຕັ້ງແຕ່ເຫດການນັ້ນເກີດຂຶ້ນມີແມ່ຍິງລາງຄົນໃນພວກເຮົາໄດ້ໄປເຖິງອຸບໂມງແຕ່ຮຸ່ງເຊົ້າ ເຂົາໄດ້ເຮັດໃຫ້ພວກເຮົາປລາດໃຈຫລາຍຄືເຂົາບໍ່ໄດ້ເຫັນສົບຂອງທ່ານຈຶ່ງມາບອກວ່າໄດ້ເຫັນນິມິດເປັນເທວະດາ ແລະເທວະດາໄດ້ບອກວ່າທ່ານມີຊີວິດຢູ່ບາງຄົນທີ່ຢູ່ກັບພວກເຮົາກໍໄດ້ໄປເຖິງອຸບໂມງ ແລະໄດ້ພົບເຫມືອນພວກແມ່ຍິງນັ້ນໄດ້ບອກ ແຕ່ທ່ານຜູ້ນັ້ນເຂົາບໍ່ໄດ້ເຫັນ”ພຣະເຢຊູຊົງກ່າວແກ່ສອງຄົນນັ້ນວ່າ, “ໂອ ຄົນໂງ່, ຜູ້ມີໃຈເສີຍຊ້າໃນກາຍເຊື່ອບັນດາຖ້ອຍຄຳ ຊຶ່ງພວກຜູ້ປະ



ກາດພຣະທັມໄດ້ກ່າວໄວ້ນັ້ນຈຳເປັນທີ່ພຣະຄຣິດຈະຕ້ອງທົນທຸກທໍຣະມານຢ່າງນັ້ນ ແລ້ວເຂົ້າໄປໃນໃນຣັສມີຂອງພຣະອົງບໍ່ແມ່ນຫລື”ພຣະອົງຈຶ່ງຊົງອະທິບາຍພຣະຄັມພີທັງໝົດທີ່ກ່ຽວກັບພຣະອົງເອງໃຫ້ເຂົາຟັງ ຕັ້ງແຕ່ໂມເຊແລະບັນດາຜູ້ປະກາດພຣະທັມເມື່ອເຂົາມາໃກ້ບ້ານທີ່ຈະໄປນັ້ນ ພຣະອົງຊົງເຮັດເຫມືອນກັບວ່າຈະສະເດັດເລີຍໄປແຕ່ເຂົາທັງສອງໄດ້ໜ່ວງໜ່ຽວທູນພຣະອົງວ່າ, “ເຊີນທ່ານມາພັກເຊົາຢູ່ກັບເຮົາ ເພາະວ່າເວລາກໍຈວນຈະຄ່ຳແລ້ວ ແລະວັນກໍລ່ວງໄປຫລາຍແລ້ວ”ຢູ່ມາເມື່ອຊົງນັ່ງໂຕະຮ່ວມເຂົາ ພຣະອົງຊົງຈັບເອົາເຂົ້າຈີ່ມາໂມທະນາພຣະຄຸນ ແລ້ວຊົງຫັກຍື່ນໃຫ້ເຂົາແລະຕາຂອງເຂົາກໍຖືກຊົງປົດອອກ ແລ້ວພຣະອົງກໍຊົງຫາຍໄປຈາກເຂົາເສັຽເຂົາຈຶ່ງເວົ້າກັນວ່າ, “ເມື່ອພຣະອົງຊົງເວົ້ານຳເຮົາຕາມທາງ ແລະໄດ້ຊົງອະທິບາຍພຣະຄັມພີໃຫ້ເຮົາຟັງນັ້ນ ໃຈຂອງເຮົາກໍຮ້ອນຣົນເຫມືອນໄຟພາຍໃນເຮົາ ບໍ່ແມ່ນຫລື”ໃນໂມງນັ້ນເຂົາທັງສອງກໍລຸກຂຶ້ນກັບໄປຍັງກຸງເຢຣູຊາເລັມ ແລະໄດ້ພົບສິບເອັດຄົນນັ້ນຊຸມນຸມກັນຢູ່ພ້ອມກັບພັກພວກກຳລັງເວົ້າກັນວ່າ, “ແມ່ນອົງພຣະຜູ້ເປັນເຈົ້າຊົງເປັນຄືນມາແນ່ແທ້ ແລະໄດ້ຊົງປາກົດແກ່ຊີໂມນ” ຝ່າຍສອງຄົນນັ້ນໄດ້ເລົ່າຍັງເຫດການທີ່ໄດ້ເກີດຂຶ້ນຕາມທາງ ແລະການທີ່ພຣະອົງໄດ້ຊົງເຮັດໃຫ້ເຂົາຮູ້ຈັກພຣະອົງເອງໂດຍການຊົງຫັກເຂົ້າຈີ່ນັ້ນ”

**ພຣະເຢຊູຊົງປາກົດແກ່ພວກສາວົກ**

ເມື່ອເຂົາທັງສອງກຳລັງເລົ່າເຫດການທັງປວງນັ້ນຢູ່ ອົງພຣະເຢຊູໄດ້ຊົງຢືນຢູ່ທ່າມກາງເຂົາ (ໂດຍຊົງກ່າວວ່າ, “ສັນຕິສຸກຈົ່ງມີແກ່ທ່ານທັງຫລາຍ”)ຝ່າຍເຂົາກໍຢ້ານສະດຸ້ງຕົກໃຈໂດຍຄິດວ່າ

*ເຫັນຜີພຣະອົງຈຶ່ງຊົງກ່າວແກ່ເຂົາວ່າ, "ທ່ານທັງຫລາຍວຸ້ນວາຍເຮັດຫຍັງ ດ້ວຍເຫດໃດຄວາມຄຶດສະງົນສົນເທຈຶ່ງເກີດຂຶ້ນໃນໃຈຂອງພວກທ່ານຈົ່ງເບິ່ງມືແລະຕີນຂອງເຮົາວ່າແມ່ນເຮົາເອງ ຈົ່ງຄໍາເບິ່ງຕົວເຮົາ ເພາະວ່າຜີບໍ່ມີເນື້ອບໍ່ມີດູກເຫມືອນກັບທ່ານເຫັນເຮົາມີຢູ່ນີ້"ເມື່ອຊົງກ່າວດັ່ງນັ້ນແລ້ວ ພຣະອົງກໍຊົງສະແດງພຣະຫັດແລະພຣະບາດໃຫ້ເຂົາເຫັນເມື່ອເຂົາຍັງບໍ່ວາງໃຈເຊື່ອເພາະຄວາມຍິນດີແລະປລາດໃຈຢູ່ ພຣະອົງຈຶ່ງຊົງຖາມເຂົາວ່າ, "ທີ່ນີ້ພວກທ່ານມີຫຍັງກິນແດ່ຫລື"ແລະເຂົາກໍເອົາປາປີ້ງຕ່ອນນຶ່ງມາຖວາຍພຣະອົງພຣະອົງຊົງຮັບມາສເວີຍຕໍ່ຫນ້າເຂົາພຣະອົງຊົງກ່າວແກ່ເຂົາວ່າ, "ນີ້ແຫລະ, ຄືຖ້ອຍຄໍາຂອງເຮົາ ຊຶ່ງເຮົາໄດ້ບອກໄວ້ແກ່ທ່ານທັງຫລາຍ ເມື່ອເຮົາຍັງຢູ່ກັບພວກທ່ານວ່າບັນດາຄໍາທີ່ຂຽນໄວ້ເຖິງເຮົາໃນບັນຍັດຂອງໂມເຊ ໃນຄັມພີຂອງພວກຜູ້ປະກາດພຣະທັມ ແລະໃນຄັມພີເພງສັຣເສີນນັ້ນຈໍາເປັນຈະຕ້ອງສໍາເຣັດ"ເມື່ອນັ້ນພຣະອົງໄດ້ຊົງບັນດົນຈິດໃຈຂອງເຂົາ ເພື່ອໃຫ້ເຂົາເຂົ້າໃຈພຣະຄັມພີພຣະອົງຊົງກ່າວແກ່ເຂົາວ່າ, "ມີຄໍາຂຽນໄວ້ຢ່າງນີ້ ພຣະຄຣິດຈະຕ້ອງຊົງທົນທຸກທໍຣະມານ ແລະຊົງເປັນຄືນມາຈາກຕາຍໃນວັນຖ້ວນສາມແລະຈະຕ້ອງປະກາດທົ່ວທຸກປະເທດໃນພຣະນາມຂອງພຣະອົງໃຫ້ຖິ້ມໃຈເກົ່າເອົາໃຈໃຫມ່ຮັບການຍົກບາບໂທດ ຕັ້ງແຕ່ກຸງເຢຣູຊາເລັມໄປຝ່າຍທ່ານທັງຫລາຍເປັນພຍານໃນການທັງຫລາຍນັ້ນແລະເບິ່ງແມ່, ອັນທີ່ພຣະບິດາຂອງເຮົາໄດ້ຊົງສັນຍາໄວ້ນັ້ນ ເຮົາກໍໃຊ້ມາເທິງທ່ານທັງຫລາຍ ແຕ່ຝ່າຍພວກທ່ານຈົ່ງຄອຍຢູ່ໃນກຸງ ຈົນກວ່າພວກທ່ານຈະໄດ້ປະກອບດ້ວຍຣິດເດດທີ່ມາຈາກເບື້ອງເທິງ"*

***ການສະເດັດສູ່ສວັນ***



*ພຣະອົງຈຶ່ງຊົງພາເຂົາອອກໄປເຖິງບ້ານເບັດທາເນັຽ ແລະຊົງຍົກພຣະຫັດອວຍພອນເຂົາເມື່ອຊົງອວຍພອນຢູ່ນັ້ນ ພຣະອົງໄດ້ສະເດັດຈາກເຂົາໄປ (ແລະຊົງຖືກຮັບຂຶ້ນໄປສູ່ສວັນ)ສ່ວນເຂົາ(ເມື່ອຂາບລົງນະມັສການພຣະອົງແລ້ວ) ກໍກັບໄປຍັງກຸງເຢຣູຊາເລັມດ້ວຍຄວາມຍິນດີຫລາຍແລະທຸກໆວັນເຂົາທັງຫລາຍໄດ້ຢູ່ໃນບໍຣິເວນພຣະວິຫານ ສັຣເສີນໂມທະນາພຣະຄຸນຂອງພຣະເຈົ້າ*

## 36. ມີຫຍັງເປັນເຄື່ອງພິສູດວ່າ ພຣະອົງຊົງຄືນພຣະຊົນແທ້ໆ?

ອຸບໂມງຝັງສົບໄດ້ຖືກຫວ່າງເປົ່າ, ທູດສະຫວັນເອງກໍໄດ້ປະກາດຢູ່ທີ່ອຸບໂມງວ່າ, "ພວກທ່ານຊອກຄົນເປັນໃນໝູ່ຄົນຕາຍເຮັດຫຽັງ? ພຣະອົງບໍ່ປະທັບຢູ່ທີ່ນີ້ ແຕ່ຖືກຊົງບັນດານໃຫ້ເປັນຄືນມາແລ້ວ ຈົ່ງລະນຶກເຖິງຄໍາທີ່ພຣະອົງຊົງກ່າວກັບທ່ານທັງຫລາຍເມື່ອພຣະອົງຍັງຢູ່ໃນແຂວງຄາລີເລນັ້ນ"

**ລູກາ 24:3-7** *"ເມື່ອເຂົ້າໄປທັງໃນແລ້ວເຂົາກໍບໍ່ເຫັນພຣະສົບເມື່ອເຂົາກໍາລັງຄຶດສງົນສົນເທດ້ວຍເຫດການນັ້ນ ເບິ່ງແມ່, ມີຊາຍສອງຄົນຢືນຢູ່ໃກ້ເຂົາ ນຸ່ງເຄື່ອງອັນງົດງາມຈົນເຫລື້ອມຕາຝ່າຍແມ່ຍິງເຫລົ່ານັ້ນກໍຢ້ານແລະກົ້ມຫນ້າລົງເຖິງດິນ ສອງຄົນນັ້ນໄດ້ຖາມເຂົາວ່າ, "ພວກນາງຊອກຄົນເປັນໃນຫມູ່ຄົນຕາຍເຮັດຫຍັງ(ພຣະອົງບໍ່ປະທັບຢູ່ທີ່ນີ້ ແຕ່ຖືກຊົງບັນດານໃຫ້ເປັນຄືນມາແລ້ວ) ຈົ່ງລະນຶກເຖິງຄໍາທີ່ພຣະອົງຊົງກ່າວກັບທ່ານທັງຫລາຍ ເມື່ອພຣະອົງຍັງຢູ່ໃນແຂວງຄາລີເລນັ້ນວ່າບຸດມະນຸດຈະຕ້ອງຖືກມອບໄວ້ໃນມືຄົນບາບ ຈະຖືກຄຶງໄວ້ທີ່ໄມ້ກາງແຂນແລະໃນວັນຖ້ວນສາມກໍຈະຄືນມາອີກ"*

ພວກອັຄສາວົກຂອງພຣະອົງໄດ້ເຫັນພຣະອົງຫຼາຍຄັ້ງ ໃນໂອກາດຕ່າງໆກັນໃນໄລຍະເວລາທີ່ພຣະອົງຊົງຢູ່ກັບພວກເຂົາຈົນເຖິງການສະເດັດຄືນສູ່ສະຫວັນຂອງພຣະອົງ.

**ລູກາ 24:13-46** (ອ່ານຂ້າງເທິງ ຂໍ້ 35) ພຣະອົງຊົງປາກົດແກ່ຄົນຈຳນວນກວ່າຫ້າຮ້ອຍຄົນໃນເວລາດຽວກັນ. ນີ້ເປັນສິ່ງທີ່ຢັ້ງຢືນແລະເປັນພະຍານເຖິງການຄືນພຣະຊົນຂອງພຣະອົງ.

**1 ໂກຣິນໂທ 15:4-8** *"ແລະຊົງຖືກວາງໄວ້ ແລ້ວວັນຖ້ວນສາມໄດ້ຖືກຊົງບັນດານໃຫ້ຄືນຂຶ້ນມາ ຕາມທີ່ຂຽນໄວ້ໃນພຣະຄັມພີນັ້ນພຣະອົງຊົງປາກົດແກ່ເກຟາ ແລ້ວແກ່ພວກສິບສອງຄົນນັ້ນຕໍ່ມາພຣະອົງໄດ້ຊົງປາກົດແກ່ພວກພີ່ນ້ອງກວ່າຫ້າຮ້ອຍຄົນໃນຄາວດຽວ ຊຶ່ງສ່ວນຫລາຍຍັງເປັນຢູ່ຈົນເຖິງທຸກວັນນີ້ ແຕ່ບາງຄົນກໍລ່ວງຫລັບໄປແລ້ວຕໍ່ນັ້ນອີກພຣະອົງໄດ້ຊົງປາກົດແກ່ຢາໂກໂບ ແລ້ວແກ່ອັຄສາວົກທັງຫມົດພາຍຫລັງທີ່ສຸດພຣະອົງໄດ້ຊົງປາກົດແກ່ເຮົາ ຜູ້ເປັນເຫມືອນລູກທີ່ເກີດຜິດຍາມ"*

## 37. ເວລານີ້ ພຣະອົງຢູ່ໃສ?

ເມື່ອພຣະອົງຢູ່ກັບສາວົກຄົບ 40 ວັນ, ຫລັງຈາກຄືນພຣະຊົນແລ້ວ ພຣະອົງກໍສະເດັດກັບສະຫວັນ ຕໍ່ໜ້າສາວົກທີ່ເຝົ້າເບິ່ງຢູ່ນັ້ນ. ບັດນີ້ພຣະອົງຊົງປະທັບຢູ່ເບື້ອງພຣະຫັດຂວາຂອງພຣະບິດາເຈົ້າ.

**ກິຈການ 1:4-11** *"ໃນເວລາທີ່ພຣະອົງຊົງຮ່ວມປະຊຸມຢູ່ກັບເຂົາ ຈຶ່ງຊົງສັ່ງເຂົາບໍ່ໃຫ້ອອກໄປຈາກກຸງເຢຣູຊາເລັມ ແຕ່ໃຫ້ຄອຍຮັບຕາມພຣະສັນຍາຂອງພຣະບິດາ ຄືພຣະອົງໄດ້ຊົງ*



*ບອກວ່າ, "ຕາມທີ່ທ່ານທັງຫລາຍໄດ້ຍິນຈາກເຮົານັ້ນແຫລະ ເພາະວ່າໂຢຮັນໃຫ້ບັບຕິສະມາດ້ວຍນ້ຳກໍແມ່ນ ແຕ່ຕໍ່ໄປອີກບໍ່ເທິງທ່ານທັງຫລາຍຈະໄດ້ຮັບບັບຕິສະມາດ້ວຍພຣະວິນຍານບໍຣິສຸດ" ເມື່ອເຂົາໄດ້ປະຊຸມພ້ອມກັນ ເຂົາຈຶ່ງທູນຖາມພຣະອົງວ່າ, "ຂ້າແດ່ອົງພຣະຜູ້ເປັນເຈົ້າ, ພຣະອົງຈະຊົງຕັ້ງຣາຊອານາຈັກຄືນໃຫມ່ໃຫ້ແກ່ພວກອິສຣາເອນໃນບັດນີ້ຫລື" ພຣະອົງຊົງຕອບເຂົາວ່າ, "ບໍ່ແມ່ນຫນ້າທີ່ຂອງພວກທ່ານທີ່ຈະຮູ້ເວລາຫລືຍາມກຳນົດຊຶ່ງພຣະບິດາໄດ້ຊົງຕັ້ງໄວ້ດ້ວຍສິດຂອງພຣະອົງເອງແຕ່ທ່ານທັງຫລາຍຈະໄດ້ຮັບພຣະຣາຊທານຣິດເດດ ເມື່ອພຣະວິນຍານບໍຣິສຸດຈະສະເດັດມາເຖິງພວກທ່ານ ແລະພວກທ່ານຈະເປັນພະຍານຝ່າຍເຮົາໃນກຸງເຢຣູຊາເລັມ, ຕລອດທົ່ວແຂວງຢູດາຍ, ກັບແຂວງຊາມາເຣັຽ, ແລະຈົນເຖິງທີ່ສຸດປາຍແຜ່ນດິນໂລກ" ເມື່ອພຣະອົງຊົງກ່າວດັ່ງນັ້ນແລ້ວ ພຣະເຈົ້າຊົງຮັບພຣະອົງຂຶ້ນເມືອ ຂນະທີ່ເຂົາກຳລັງເບິ່ງຢູ່ ແລະມີເມກມາຮັບພຣະອົງໃຫ້ພົ້ນຈາກສາຍຕາຂອງເຂົາເມື່ອເຂົາກຳລັງແນມເບິ່ງຟ້າ ຂນະທີ່ພຣະອົງສະເດັດຂຶ້ນເມືອນັ້ນ ເບິ່ງແມ່, ມີສອງຄົນນຸ່ງເຄື່ອງຂາວມາປາກົດຢືນຢູ່ໃກ້ເຂົາສອງຄົນນັ້ນຈຶ່ງກ່າວວ່າ, "ຊາວຄາລີເລເອີຍ, ເປັນຫຍັງພວກທ່ານຈຶ່ງຢືນເບິ່ງທ້ອງຟ້າ ພຣະເຢຊູອົງນີ້ຊຶ່ງຊົງຮັບໄປຈາກພວກທ່ານຂຶ້ນເມືອສວັນແລ້ວ ຈະສະເດັດມາອີກເຫມືອນຢ່າງທີ່ພວກທ່ານໄດ້ເຫັນພຣະອົງຂຶ້ນເມືອຍັງສວັນນັ້ນ"*

**ໂຣມ 8:34** *"ໃຜຈະເປັນຜູ້ລົງໂທດອີກ ພຣະເຢຊູຄຣິດໄດ້ຊົງສິ້ນພຣະຊົນແລ້ວ ແລະຫລາຍກວ່ານັ້ນອີກໄດ້ຊົງຄືນພຣະຊົນແລ້ວ ພຣະອົງຊົງສະຖິດຢູ່ກ້ຳຂວາພຣະຫັດຂອງພຣະເຈົ້າ ພຣະອົງນັ້ນແຫລະ, ຊົງອ້ອນວອນເພື່ອເຮົາທັງຫລາຍດ້ວຍ"*

## 38. ພຣະເຢຊູຄຣິສ ຊົງຕຣັສໄວ້ວ່າຢ່າງໃດ? ໃນເຣື່ອງທີ່ພຣະອົງຈະສະເດັດກັບຄືນມາອີກ?

ພຣະເຢຊູຊົງຕຣັສວ່າ, "ຢ່າໃຫ້ໃຈຂອງທ່ານວຸ້ນວາຍໄປ ຈົ່ງໄວ້ວາງໃຈໃນພຣະເຈົ້າ ແລະໄວ້ວາງໃຈໃນເຮົາເໝືອນກັນ ໃນຜາສາດຂອງພຣະບິດາເຮົາມີທີ່ຢູ່ຫຼາຍບ່ອນ ຖ້າບໍ່ມີເຮົາຄົງບອກທ່ານແລ້ວ ເພາະເຮົາໄປຈັດຕຽມບ່ອນໄວ້ສຳລັບທ່ານທັງຫຼາຍ ເມື່ອເຮົາໄປຈັດຕຽມບ່ອນໄວ້ສຳລັບທ່ານແລ້ວ ເຮົາຈະກັບມາຮັບທ່ານໄປຢູ່ກັບເຮົາ ເພື່ອວ່າເຮົາຢູ່ທີ່ໃດພວກທ່ານກໍຈະຢູ່ທີ່ນັ້ນເໝືອນກັນແລະທ່ານຮູ້ຈັກທາງທີ່ເຮົາຈະໄປນັ້ນ."

**ໂຢຮັນ 14:1-3** *"ຢ່າໃຫ້ໃຈຂອງທ່ານທັງຫລາຍວຸ້ນວາຍໄປຈົ່ງວາງໃຈໃນພຣະເຈົ້າແລະໄວ້ວາງໃຈໃນເຮົາເຫມືອນກັນໃນຜາສາດພຣະບິດາຂອງເຮົາມີທີ່ຢູ່ຫລາຍບ່ອນ ຖ້າບໍ່ມີເຮົາຄົງໄດ້ບອກພວກທ່ານແລ້ວ ເພາະເຮົາໄປຈັດແຈງບ່ອນໄວ້ສຳລັບທ່ານທັງຫລາຍເມື່ອເຮົາໄປຈັດແຈງບ່ອນໄວ້ສຳລັບພວກທ່ານແລ້ວເຮົາຈະກັບມາອີກຮັບທ່ານໄປຢູ່ກັບເຮົາ ເພື່ອວ່າເຮົາຢູ່ທີ່ໃດພວກທ່ານຈະຢູ່ທີ່ນັ້ນເຫມືອນກັນ"*

## 39. ເມື່ອເວລາທີ່ພຣະເຢຊູຄຣິສສະເດັດກັບຄືນມາອີກຄັ້ງທີ່ສອງນີ້ຈະມີເຫດການຫຽັງເກີດຂຶ້ນ?

* ຜູ້ທີ່ຕາຍໃນພຣະຄຣິສຈະກັບເປັນຂຶ້ນມາໃໝ່ ແລະພຣະອົງກໍຈະຮັບເອົາພວກເຂົາເຫຼົ່ານັ້ນຂຶ້ນໄປຍັງສະຫວັນພ້ອມໆກັນກັບຊາວຄຣິສະຕຽນທັງຫລາຍທີ່ຍັງມີຊີວິດຢູ່ ແລະທີ່ນັ້ນແຫຼະ, ທຸກຄົນທີ່ເຊື່ອຈະໄດ້ເຫັນພຣະຜູ້ເປັນເຈົ້າ.



**1 ເທຊະໂລນິກ 4:13-17** *"ພີ່ນ້ອງທັງຫລາຍເອີຍ, ພວກເຮົາຢາກໃຫ້ເຈົ້າທັງຫລາຍຮູ້ຄວາມຈິງເຣື່ອງຄົນທີ່ຫລັບໄປນັ້ນ ເພື່ອພວກເຈົ້າຈະບໍ່ໂສກເສົ້າເຫມືອນດັ່ງຄົນອື່ນທີ່ບໍ່ມີຄວາມຫວັງເພາະໃນເມື່ອເຮົາເຊື່ອວ່າພຣະເຢຊູຊົງສິ້ນພຣະຊົນແລະຊົງຄືນພຣະຊົນແລ້ວ ໂດຍພຣະເຢຊູນັ້ນແຫລະ, ພຣະເຈົ້າຈະຊົງນຳບັນດາຄົນທີ່ຫລັບໄປແລ້ວນັ້ນໃຫ້ມາກັບພຣະອົງໃນຂໍ້ນີ້ເຮົາບອກເຈົ້າທັງຫລາຍຕາມພຣະທັມຂອງອົງພຣະຜູ້ເປັນເຈົ້າວ່າ ພວກເຮົາຜູ້ຍັງເປັນຢູ່ແລະຄອຍຖ້າການສະເດັດມາຂອງພຣະຜູ້ເປັນເຈົ້າ ເຮົາຈະລ່ວງຫນ້າໄປກ່ອນພວກຄົນທີ່ຫລັບໄປແລ້ວນັ້ນກໍບໍ່ໄດ້ແທ້ດ້ວຍວ່າຈະມີຄຳສັ່ງອັນດັງ ຈະມີສຽງຂອງອັຄເທວະດາ ແລະສຽງແກຂອງພຣະເຈົ້າ ແລ້ວອົງພຣະຜູ້ເປັນເຈົ້າຈະສະເດັດລົງມາຈາກສວັນ ພວກຄົນທີ່ເຊື່ອໃນພຣະຄຣິດທີ່ຕາຍໄປແລ້ວກໍຈະຄືນຂຶ້ນມາກ່ອນຫລັງຈາກນັ້ນເຮົາທັງຫລາຍຜູ້ມີຊີວິດຍັງເປັນຢູ່ກໍຈະຖືກຮັບຂຶ້ນໄປໃນເມກພ້ອມກັນກັບຄົນພວກນັ້ນ ແລະຈະພົບອົງພຣະຜູ້ເປັນເຈົ້າໃນຟ້າອາກາດ ຢ່າງນັ້ນແຫລະ, ພວກເຮົາກໍຈະຢູ່ນຳພຣະຜູ້ເປັນເຈົ້າເປັນນິດ"*

* ພຣະອົງຈະຊົງເປັນຜູ້ພິພາກສາຄົນທັງໂລກ ທັງຄົນເປັນແລະຄົນຕາຍ. ທັງຜູ້ຊອບທັມແລະຄົນອະທັມທັງຫຼາຍກໍຈະເປັນຂຶ້ນມາຈາກຕາຍເພື່ອທຸກຄົນຈະຕ້ອງໄດ້ເຂົ້າສູ່ການພິພາກສາໂທດ.

**ກິຈການ 24:15** *"ຂ້າພະເຈົ້າມີຄວາມຫວັງໃຈໃນພຣະເຈົ້າຕາມຊຶ່ງເຂົາເອງກໍມີຄວາມຫວັງໃຈເຫມືອນກັນ ຄືຫວັງໃຈວ່າຄົນທັງປວງທັງຜູ້ຊອບທັມແລະຜູ້ບໍ່ຊອບທັມ ຈະຖືກຊົງບັນດານໃຫ້ເປັນຄືນມາຈາກຕາຍ"*

**2 ຕີໂມທຽວ 4:1** *"ເຮົາສັ່ງເຈົ້າຕໍ່ພຣະພັກພຣະເຈົ້າ ແລະຕໍ່ພຣະພັກພຣະເຢຊູຄຣິດ ຜູ້ຊົງພິພາກສາທັງຄົນເປັນ ແລະຄົນຕາຍ ໂດຍອ້າງເຖິງການທີ່ພຣະອົງຈະຊົງສ່ອງສວ່າງມາປາກົດ ແລະອ້າງເຖິງຣາຊອານາຈັກຂອງພຣະອົງວ່າ"*

* ແລ້ວພຣະອົງຈະຊົງຈັດຕັ້ງອານາຈັກຂອງພຣະອົງຂຶ້ນ ຊຶ່ງມັນຈະເປັນອານາຈັກທີ່ຍືນນານຕລອດການ. ພຣະອົງກໍຈະຊົງເປັນເຈົ້າຊີວິດຜູ້ຄອບຄອງຕລອດໄປເປັນນິດ.

**ພຣະນິມິດ 11:15-17"** *ເມື່ອເທວະດາຕົນທີ່ເຈັດໄດ້ເປົ່າແກຂຶ້ນແລ້ວ ມີຫລາຍສຽງໃນສວັນກ່າວດັງຂຶ້ນວ່າ, "ຣາຊອານາຈັກແຫ່ງພິພົບນີ້ ໄດ້ກາຍເປັນກຳມະສິດແຫ່ງອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ ແລະເປັນຂອງພຣະຄຣິດຂອງພຣະອົງ ພຣະອົງຈະຊົງສ່ວນອະວຸໂສຊາວສີ່ທ່ານນັ້ນ ຊຶ່ງນັ່ງຢູ່ທີ່ບັນລັງຂອງຕົນຕໍ່ພຣະພັກພຣະເຈົ້າ ກໍຫມູບລົງນະມັສການພຣະເຈົ້າ ກາບທູນວ່າ, "ຂ້າແດ່ອົງພຣະຜູ້ເປັນເຈົ້າ ຜູ້ຊົງຣິດທານຸພາບສູງສຸດ ຜູ້ຊົງດຳຣົງຢູ່ໃນປັດຈຸບັນນີ້ ແລະໄດ້ຊົງດຳຣົງຢູ່ໃນຄາວກ່ອນ ພວກຂ້າພຣະອົງໂມທະນາພຣະເດດພຣະຄຸນຂອງພຣະອົງ ເພາະພຣະອົງໄດ້ຊົງໃຊ້ຣິດທານຸພາບອັນໃຫຍ່ຫລວງຂອງພຣະອົງ ຈຶ່ງໄດ້ຊົງຕັ້ງຕົ້ນສເວີຍຣາດແຜ່ນດິນໂລກ"*

**ເພງສັຣເສີນ 145:13** *"ທຸກໆສິ່ງທີ່ມີຊີວິດກໍມີຄວາມຫວັງຢ່າງລົ້ນເຫລືອຢູ່ໃນພຣະອົງ ແລະພຣະອົງຊົງປະທານອາຫານໃຫ້ຕາມທີ່ເຂົາຕ້ອງການ"*



### 40. ກ່ອນທີ່ພຣະເຢຊູຄຣິສຈະສະເດັດກັບຄືນສູ່ສະຫວັນ ພຣະອົງໄດ້ຊົງມອບຫມາຍວຽກງານຢ່າງໃດແດ່ໃຫ້ແກ່ພວກສິດ?

ພຣະອົງໄດ້ຊົງສັ່ງພວກເຂົາໃຫ້ອອກໄປທົ່ວແຜ່ນດິນໂລກ ເພື່ອທຳການປະກາດ, ສັ່ງສອນເຣື່ອງຂ່າວປະເສີດແກ່ຄົນທັງປວງ ເພື່ອເຂົາຈະໄດ້ເຊື່ອໃນພຣະເຢຊູຄຣິສ ແລະເຂົ້າມາຮັບເອົາຄວາມລອດພົ້ນຈາກພຣະອົງ.

**ມາຣະໂກ 16:14-16** *"ພາຍຫລັງ, ພຣະອົງຊົງປາກົດແກ່ສາວົກສິບເອັດຄົນນັ້ນ ເມື່ອເຂົານັ່ງຮັບປະທານອາຫານຢູ່ ພຣະອົງຊົງຕິຕຽນເຂົາ ເພາະເຂົາສົງໄສແລະມີໃຈແຂງກະດ້າງ ດ້ວຍເຫດທີ່ເຂົາບໍ່ໄດ້ເຊື່ອພວກຄົນທີ່ໄດ້ເຫັນພຣະອົງເມື່ອພຣະອົງຊົງເປັນຄືນມາແລ້ວຝ່າຍພຣະອົງຊົງສັ່ງພວກສາວົກວ່າ, "ທ່ານທັງຫລາຍຈົ່ງໄປທົ່ວໂລກ ປະກາດຂ່າວປະເສີດແກ່ມະນຸສໂລກທັງຫມົດຜູ້ທີ່ເຊື່ອ ແລະຮັບບັບຕິສະມາແລ້ວຈະໄດ້ພົ້ນ ແຕ່ຜູ້ທີ່ບໍ່ເຊື່ອຈະຖືກໂທດ"*

# ຄວາມລອດພົ້ນ

### 41. ຄວາມລອດພົ້ນ ມີຄວາມໝາຍຢ່າງໃດ?

ຄື ທຸກຄົນທີ່ຍອມຮັບເອົາພຣະເຢຊູຄຣິສເປັນພຣະຜູ້ຊ່ອຍໃຫ້ລອດຂອງຕົນ ຈະໄດ້ຮັບການຊົງອະພັຍຄວາມຜິດບາບທັງໝົດເສັ້ງແລະກໍຈະໄດ້ຜ່ານພົ້ນຈາກຄວາມຕາຍໄປສູ່ຊີວິດ ຊຶ່ງເປັນຊີວິດທີ່ນິຣັນດອນຈະຕາຍບໍ່ເປັນເລີຍ.

**1 ໂຢຮັນ 1:9** *"ຖ້າເຮົາທັງຫລາຍສາຣະພາບຜິດບາບຂອງພວກເຮົາ ພຣະອົງຊົງສັດຊື່ແລະທ່ຽງທັມ ຈະຊົງໂຜດຍົກບາບຂອງພວກເຮົາ ແລະຈະຊົງໂຜດຊໍາຣະລ້າງເຮົາທັງຫລາຍຈາກການອະທັມຫມົດສິ້ນ"*

**ໂຢຮັນ 5:24** *"ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຖ້າຜູ້ໃດຟັງຄໍາຂອງເຮົາແລະວາງໃຈໃນພຣະອົງຜູ້ຊົງໃຊ້ເຮົາມາ ຜູ້ນັ້ນກໍມີຊີວິດອັນຕລອດໄປເປັນນິດ ແລະບໍ່ເຂົ້າໃນການພິພາກສາແຕ່ໄດ້ຜ່ານພົ້ນຈາກຄວາມຕາຍໄປສູ່ຊີວິດແລ້ວ"*

## 42. ຖ້າເຮົາເຊື່ອພຣະເຢຊູຄຣິສແລ້ວ ເຮົາຈະໄດ້ຮັບຄວາມລອດແລະມີຊີວິດອັນຕລອດໄປເປັນນິດແທ້ບໍ?

ແນ່ນອນທີ່ສຸດ, ເພາະທາງທີ່ພຣະເຈົ້າໄດ້ຊົງປະທານຄວາມລອດພົ້ນໃຫ້ແກ່ພວກເຮົາທັງຫລາຍນັ້ນຄື: "ຈົ່ງເຊື່ອແລະວາງໃຈໃນອົງພຣະເຢຊູຄຣິສເຈົ້າ ແລະທ່ານກໍຈະໄດ້ຮັບຄວາມລອດພົ້ນ"

**ກິຈການ 4:12** *"ໃນຜູ້ອື່ນຄວາມລອດພົ້ນ ດ້ວຍວ່າບໍ່ມີນາມຊື່ອື່ນໃດທົ່ວໃຕ້ຟ້າ ທີ່ຊົງປະທານແກ່ມະນຸດ ເພື່ອໃຫ້ເຮົາທັງຫລາຍຕ້ອງໄດ້ພົ້ນ"*

**ກິຈການ16:31** *"ໂປໂລກັບຊີລາຕອບວ່າ, "ຈົ່ງເຊື່ອວາງໃຈໃນພຣະເຢຊູເຈົ້າແລ້ວທ່ານຈະໄດ້ພົ້ນ ທັງຄົວເຮືອນຂອງທ່ານດ້ວຍ"*

**ໂຣມ 10:9-13** *"ຄືວ່າຖ້າເຈົ້າຈະຮັບດ້ວຍປາກຂອງເຈົ້າວ່າ, "ພຣະເຢຊູຊົງເປັນອົງພຣະຜູ້ເປັນເຈົ້າ" ແລະເຊື່ອໃນຈິດໃຈວ່າພຣະເຈົ້າໄດ້ຊົງໂຜດບັນດານໃຫ້ພຣະອົງຊົງຄືນຂຶ້ນມາຈາກຕາຍແລ້ວເຈົ້າກໍຈະໄດ້ພົ້ນເຫດວ່າທີ່ມະນຸດໄດ້ເຊື່ອກໍເຊື່ອດ້ວຍໃຈຂອງຕົນ ຈຶ່ງໄດ້ຊົງຖືວ່າເປັນຄົນຊອບທັມ ແລະທີ່ໄດ້ຍອມຮັບກໍຍອມຮັບດ້ວຍປາກ ຈຶ່ງຖືກຊົງໂຜດໃຫ້ພົ້ນເພາະຂໍ້ພຣະທັມຄັມພີກ່າວໄວ້ວ່າ, "ບຸກຄົນໃດທີ່ເຊື່ອໃນພຣະອົງຈະບໍ່ໄດ້ຮັບຄວາມອັບອາຍ"ເຫດວ່າພວກຢິວແລະພວກຕ່າງຊາດນັ້ນ ພຣະເຈົ້າບໍ່ຊົງຖືວ່າຕ່າງກັນ ດ້ວຍວ່າອົງພຣະຜູ້ເປັນເຈົ້າອົງດຽວຊົງເປັນອົງພຣະຜູ້ເປັນເຈົ້າຂອງຄົນທັງປວງ ແລະຊົງໂຜດຢ່າງບໍຣິບູນແກ່ຄົນທັງປວງທີ່ທູນຂໍຕໍ່ພຣະອົງເພາະວ່າ, "ທຸກຄົນທີ່ຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າກໍຈະພົ້ນ"*



## 43. ເປັນຫຽັງຈຶ່ງງ່າຍດາຍເຊັ່ນນັ້ນ? ເຮົາບໍ່ຈໍາເປັນຈະສ້າງບຸນກຸສົນຫຽັງໝົດບໍ?

ຄວາມລອດພົ້ນເປັນຂອງປະທານທີ່ມາຈາກພຣະເຈົ້າຊຶ່ງໃຫ້ເຮົາລ້າໆ. ນີ້ເປັນຂອງປະທານທີ່ພຣະອົງຊົງມອບໃຫ້ແກ່ມະນຸດທຸກຄົນທີ່ເຊື່ອໃນພຣະເຢຊູຄຣິສເຈົ້າ ບໍ່ແມ່ນໄດ້ມາຍ້ອນເຮົາທໍາຄວາມດີ ຫຼືສ້າງບຸນກຸສົນອັນໃດອັນນຶ່ງ. ຄວາມລອດພົ້ນບໍ່ແມ່ນສິ່ງທີ່ເຮົາເຮັດເອງໄດ້ ແຕ່ເຮົາພົ້ນໄດ້ດ້ວຍພຣະຄຸນຂອງພຣະເຢຊູຄຣິສ ຊຶ່ງຈະເກີດຂຶ້ນໄດ້ໂດຍທາງຄວາມເຊື່ອ. ພຣະເຢຊູຄຣິສເອງກໍຍັງໄດ້ກ່າວວ່າ, "ເຮົາບອກທ່ານທັງຫຼາຍຕາມຄວາມຈິງວ່າ ຖ້າຜູ້ໃດຟັງຄໍາຂອງເຮົາແລະວາງໃຈໃນພຣະອົງຜູ້ຊົງໃຊ້ເຮົາມາ ຜູ້ນັ້ນກໍມີຊີວິດອັນຕລອດໄປເປັນນິດແລະບໍ່ເຂົ້າໃນການພິພາກສາ ແຕ່ຜ່ານພົ້ນຈາກຄວາມຕາຍໄປສູ່ຊີວິດແລ້ວ."

**ເອເຟໂຊ 2: 8-9** *"ດ້ວຍວ່າຊຶ່ງທ່ານທັງຫລາຍໄດ້ຖືກຊົງໂຜດໃຫ້ພົ້ນນັ້ນ ກໍຍ້ອນພຣະຄຸນດ້ວຍທາງຄວາມເຊື່ອ ສິ່ງເຫລົ່າ*

*ນີ້ບໍ່ໃຊ່ພວກທ່ານເຮັດເອົາເອງ ແຕ່ພຣະເຈົ້າຊົງປະທານ ໃຫ້ຄວາມພົ້ນນັ້ນບໍ່ໃຊ່ມີມາຍ້ອນການປະຕິບັດ ເພື່ອບໍ່ໃຫ້ຄົນນຶ່ງຄົນໃດອວດໄດ້"*

## 44. ເຮົາຕ້ອງເຊື່ອໃນພຣະເຢຊູຄຣິສຢ່າງໃດແດ່?

1. ເຊື່ອວ່າພຣະເຢຊູຄຣິສ ຄືພຣະບຸດຂອງພຣະເຈົ້າ ຊຶ່ງສະເດັດລົງມາຕາຍແທນຕົວທ່ານເອງໂດຍ ສະເພາະ.

**ຄາລາເຕັຽ 2:20** *"ເຮົາຈຶ່ງບໍ່ມີຊີວິດຢູ່ ແຕ່ແມ່ນພຣະຄຣິດເປັນຜູ້ຊົງມີຊີວິດຢູ່ໃນເຮົາ ຊີວິດທີ່ເຮົາມີຢູ່ໃນຮ່າງກາຍເວລານີ້ນັ້ນ ເຮົາກໍມີຢູ່ໂດຍທາງຄວາມເຊື່ອໃນພຣະບຸດຂອງພຣະອົງເຈົ້າຜູ້ຊົງຮັກເຮົາແລະຊົງສະພຣະອົງເອງແທນເຮົາ"*

2. ເຊື່ອແລະຍອມຮັບວ່າທ່ານເປັນຄົນຜິດຄົນບາບ ບໍ່ມີຜູ້ໃດຈະຊ່ອຍທ່ານໃຫ້ພົ້ນຈາກຄວາມຜິດບາບນີ້ໄດ້ ນອກຈາກທ່ານຈະຮັບເອົາຄວາມລອດຈາກພຣະອົງ.

**ໂຣມ 3: 10** *"ດັ່ງມີຄຳຂຽນໄວ້ໃນພຣະຄັມພີວ່າ, "ບໍ່ມີຄົນຊອບທັມຈັກຄົນນຶ່ງຄົນດຽວ"*

**ໂຣມ 3:23** *"ດ້ວຍວ່າທຸກຄົນໄດ້ເຮັດຜິດບາບ ແລະຂາດຈາກພຣະຣັສມີຂອງພຣະເຈົ້າ"*

**ໂຣມ 6: 23** *"ດ້ວຍວ່າຄ່າຈ້າງຂອງຄວາມຜິດບາບກໍຄືຄວາມຕາຍ ແຕ່ຂອງພຣະຣາຊທານອັນໂຜດມາແຕ່ພຣະເຈົ້າ ກໍຄືຊີວິດອັນຕລອດໄປເປັນນິດໃນພຣະຄຣິດ ຄືພຣະເຢຊູເຈົ້າຂອງພວກເຮົາ"*



3. ຕ້ອງສາລະພາບຄວາມຜິດບາບຂອງທ່ານຕໍ່ພຣະເຈົ້າດ້ວຍນ້ຳໃສໃຈຈິງ ແລະທູນຂໍໃຫ້ພຣະອົງຊົງຍົກໂທດຄວາມຜິດບາບນັ້ນແກ່ທ່ານ

**1ໂຢຮັນ 1:9** *"ຖ້າເຮົາທັງຫລາຍສາຣະພາບຜິດບາບຂອງພວກເຮົາ ພຣະອົງຊົງສັດຊື່ແລະທ່ຽງທັມ ຈະຊົງໂຜດຍົກບາບຂອງພວກເຮົາ ແລະຈະຊົງໂຜດຊຳຣະລ້າງເຮົາທັງຫລາຍຈາກການອະທັມຫມົດສິ້ນ"*

4. ຮັບເອົາພຣະເຢຊູຄຣິສເຈົ້າເປັນພຣະຜູ້ຊ່ອຍໃຫ້ລອດຂອງທ່ານດ້ວຍຄວາມເຊື່ອໝັ້ນໂດຍສຸຈຣິດໃຈ.

**ໂຣມ 10:13** *"ເພາະວ່າ, "ທຸກຄົນທີ່ຮ້ອງອອກພຣະນາມຂອງອົງພຣະຜູ້ເປັນເຈົ້າກໍຈະພົ້ນ"*

# <u>ກິຈການຂອງພຣະວິນຍານບໍຣິສຸດ</u>

## 45. ເມື່ອພຣະເຢຊູຄຣິສສະເດັດຂຶ້ນສູ່ສະຫວັນແລ້ວ ພຣະອົງໄດ້ມີໂຄງການຊ່ອຍຜູ້ທີ່ເຊື່ອໃນພຣະອົງແບບໃດ?

ພຣະອົງໄດ້ໂຜດໃຫ້ພຣະວິນຍານສະເດັດເຂົ້າມາໃນໂລກນີ້ ເພື່ອຈະເປັນຜູ້ຊ່ອຍສຳລັບຜູ້ທີ່ສແວງຫາຄວາມລອດພົ້ນນັ້ນ

**ໂຢຮັນ 16:7-14** *"ຢ່າງໃດກໍຕາມ ເຮົາກໍບອກຄວາມຈິງຕໍ່ທ່ານທັງຫລາຍວ່າ ການທີ່ເຮົາຈາກໄປນັ້ນເປັນປໂຍດແກ່ພວກທ່ານ ເພາະຖ້າເຮົາບໍ່ໄປ ອົງພຣະຜູ້ຊ່ອຍນັ້ນຈະບໍ່ໄດ້ສະເດັດມາຫາພວກທ່ານ ແຕ່ຖ້າເຮົາໄປແລ້ວ ເຮົາກໍຈະໃຊ້ພຣະອົງນັ້ນມາ*

*ຫາພວກທ່ານເມື່ອພຣະອົງສະເດັດມາແລ້ວ ພຣະອົງນັ້ນແຫລະ, ຈະຊົງບັນດົນໃຫ້ໂລກຮູ້ແຈ້ງໃນເຣື່ອງຄວາມຜິດບາບ ຄວາມຊອບທັມ ແລະການພິພາກສາໃນເຣື່ອງຄວາມຜິດບາບນັ້ນ ຄື ເພາະເຂົາບໍ່ວາງໃຈເຊື່ອໃນເຮົາໃນເຣື່ອງຄວາມຊອບທັມນັ້ນ ຄື ເພາະເຮົາໄປຫາພຣະບິດາແລະພວກທ່ານຈະບໍ່ເຫັນເຮົາອີກສ່ວນເຣື່ອງການພິພາກສານັ້ນ ຄືເພາະຜູ້ປົກຄອງໂລກນີ້ໄດ້ຖືກພິພາກສາແລ້ວ"ເຮົາຍັງມີອີກຫລາຍສິ່ງທີ່ຈະບອກແກ່ທ່ານທັງຫລາຍ ແຕ່ດຽວນີ້ພວກທ່ານບໍ່ອາດຈະທົນໄດ້ແຕ່ເມື່ອພຣະອົງນັ້ນ ຄືພຣະວິນຍານແຫ່ງຄວາມຈິງຈະສະເດັດມາແລ້ວ ພຣະອົງຈະນຳທ່ານທັງຫລາຍໄປສູ່ຄວາມຈິງທັງຫມົດ ເພາະພຣະອົງຈະບໍ່ກ່າວແຕ່ລຳພັງຂອງພຣະອົງເອງ ແຕ່ພຣະອົງຊົງໄດ້ຍິນສິ່ງໃດກໍຈະຊົງກ່າວສິ່ງນັ້ນ ແລະຈະຊົງປະກາດໃຫ້ທ່ານທັງຫລາຍຮູ້ເຖິງສິ່ງເຫລົ່ານີ້ທີ່ຈະເກີດຂຶ້ນ ພຣະອົງຈະຊົງໃຫ້ເຮົາໄດ້ຮັບກຽດ ເພາະວ່າພຣະອົງຈະຊົງເອົາສິ່ງທີ່ເປັນຂອງເຮົາມາປະກາດແກ່ທ່ານທັງຫລາຍ"*

## 46. ພຣະວິນຍານບໍຣິສຸດຄືໃຜ?

ພຣະຄຣິສຕະທັມຄຳພີໄດ້ເອີ້ນພຣະວິນຍານບໍຣິສຸດວ່າ "ຜູ້ຊ່ອຍອີກຜູ້ນຶ່ງ" "ພຣະວິນຍານແຫ່ງຄວາມຈິງ" ຊຶ່ງພຣະເຢຊູຄຣິສເອງໄດ້ເປັນຜູ້ທີ່ໃຫ້ສັນຍາວ່າ ຈະສົ່ງລົງມາ ເພື່ອເປັນຜູ້ຊ່ອຍທຸກຄົນທີ່ເຊື່ອໃນພຣະອົງ. ພຣະວິນຍານບໍຣິສຸດໄດ້ສະເດັດລົງມາໃນວັນເພັນເຕຄອສ. **ກິຈການ 1:1-39**

**ໂຢຮັນ 14:16-17** *"ຝ່າຍເຮົາຈະທູນຂໍພຣະບິດາ ແລະພຣະອົງຈະຊົງປະທານຜູ້ຊ່ອຍອີກຜູ້ນຶ່ງໃຫ້ແກ່ພວກທ່ານ ເພື່ອຈະຢູ່ກັບພວກທ່ານຕລອດໄປເປັນນິດຄືພຣະວິນຍານແຫ່ງຄວາມຈິງ ຊຶ່ງໂລກບໍ່ອາດຈະຮັບໄດ້ເພາະໂລກບໍ່ເຫັນແລະບໍ່ຮູ້ຈັກພຣະອົງ ແຕ່ທ່ານທັງຫລາຍຮູ້ຈັກພຣະອົງ ເພາະພຣະອົງຊົງສະຖິດຢູ່ກັບພວກທ່ານ ແລະຈະປະທັບຢູ່ໃນພວກທ່ານ"*



## 47. ພຣະວິນຍານບໍຣິສຸດມີໜ້າທີ່ຢ່າງໃດ?

ພຣະອົງມີຫນ້າທີ່ໃນການເຕືອນສະຕິພວກເຮົາ ໃຫ້ຮູ້ຈັກສຳນຶກຜິດແລະຊອບ, ເປັນຜູ້ຊົງນຳພາໃຫ້ເຮົາຫັນຫນ້າສູ່ຄວາມຈິງສເມີ ແລະຊົງທຳໃຫ້ເຮົາບັງເກີດໃໝ່.

**ໂຢຮັນ 16:8-11** *"ເມື່ອພຣະອົງສະເດັດມາແລ້ວ ພຣະອົງນັ້ນແຫລະ, ຈະຊົງບັນດົນໃຫ້ໂລກຮູ້ແຈ້ງໃນເຣື່ອງຄວາມຜິດບາບ ຄວາມຊອບທັມ ແລະການພິພາກສາໃນເຣື່ອງຄວາມຜິດບາບນັ້ນ ຄືເພາະເຂົາບໍ່ວາງໃຈເຊື່ອໃນເຮົາໃນເຣື່ອງຄວາມຊອບທັມນັ້ນ ຄື ເພາະເຮົາໄປຫາພຣະບິດາແລະພວກທ່ານຈະບໍ່ເຫັນເຮົາອີກສ່ວນເຣື່ອງການພິພາກສານັ້ນ ຄືເພາະຜູ້ປົກຄອງໂລກນີ້ໄດ້ຖືກພິພາກສາແລ້ວ"*

**ໂຢຮັນ 3:1-8** *"ມີຊາຍຄົນນຶ່ງໃນພວກຟາຣີຊາຍຊື່ ນີໂກເດມເປັນເຈົ້ານາຍຂອງພວກຢິວຜູ້ນີ້ໄດ້ມາຫາພຣະເຢຊູໃນເວລາກາງຄືນທູນພຣະອົງວ່າ, "ພຣະອາຈານເອີຍ, ພວກຂ້ານ້ອຍຊາບຢູ່ວ່າທ່ານເປັນຄຣູທີ່ມາຈາກພຣະເຈົ້າ ເພາະບໍ່ມີຜູ້ໃດອາດເຮັດຫມາຍສຳຄັນທີ່ທ່ານເຮັດຢູ່ນັ້ນ ເວັ້ນແຕ່ພຣະເຈົ້າຊົງສະຖິດຢູ່ນຳ" ພຣະເຢຊູຊົງຕອບວ່າ, "ເຮົາບອກທ່ານຕາມຄວາມຈິງວ່າ ຖ້າຜູ້ໃດບໍ່ບັງເກີດມາໃຫມ່ ຜູ້ນັ້ນຈະເຫັນຣາຊແຜ່ນດິນຂອງພຣະເຈົ້າບໍ່ໄດ້" ນີໂກເດມທູນພຣະອົງວ່າ, "ຄົນເຖົ້າແລ້ວຈະບັງເກີດໄດ້ຢ່າງໃດ*

*ຈະເຂົ້າໃນທ້ອງແມ່ຂອງຕົນເທື່ອທີ່ສອງແລ້ວເກີດມາໄດ້ຫລື" ພຣະເຢຊູຊົງຕອບວ່າ, "ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຖ້າຜູ້ໃດບໍ່ໄດ້ບັງເກີດມາຈາກນ້ຳແລະຈາກພຣະວິນຍານ ຜູ້ນັ້ນຈະເຂົ້າໃນຣາຊແຜ່ນດິນຂອງພຣະເຈົ້າບໍ່ໄດ້ຊຶ່ງບັງເກີດຈາກເນື້ອກາຍກໍເປັນເນື້ອກາຍ ແລະຊຶ່ງບັງເກີດມາຈາກພຣະວິນຍານກໍເປັນວິນຍານ ຢ່າປລາດໃຈທີ່ເຮົາບອກທ່ານວ່າ ທ່ານທັງຫລາຍຈຳເປັນຕ້ອງບັງເກີດມາໃຫມ່ລົມຢາກພັດໄປທິດໃດກໍພັດໄປທິດນັ້ນ ແລະທ່ານໄດ້ຍິນສຽງມັນ ແຕ່ທ່ານບໍ່ຮູ້ວ່າມັນມາແຕ່ໃສຫລືໄປໃສ ທຸກຄົນທີ່ບັງເກີດຈາກພຣະວິນຍານກໍເປັນດັ່ງນັ້ນແຫລະ"*

## 48. ການບັງເກີດໃໝ່ຈາກພຣະວິນຍານມີຄວາມໝາຍຢ່າງໃດ?

ຫມາຍຄວາມວ່າ ເມື່ອເຮົາກັບໃຈໃໝ່ ໂດຍການຍອມຮັບເອົາພຣະເຢຊູຄຣິສເປັນພຣະຜູ້ຊ່ອຍໃຫ້ລອດແລ້ວພຣະວິນຍານບໍຣິສຸດກໍຈະສະເດັດເຂົ້າສູ່ຈິດໃຈຂອງເຮົາ ສ້າງຊີວິດໃໝ່ໃຫ້ເຮົາຊຶ່ງໝາຍຄວາມວ່າ ເຮົາໄດ້ກາຍເປັນຄົນໃໝ່ແລ້ວໃນຊີວິດນີ້. ນີ້ບໍ່ໄດ້ໝາຍຄວາມວ່າເຮົາຕາຍແລ້ວເກີດມາໃໝ່ ຫຼືການວຽນວ້າຍຕາຍເກີດອີກ.

**2 ໂກຣິນໂທ 5:17** *"ເຫດສັນນັ້ນຖ້າຜູ້ໃດຢູ່ໃນພຣະຄຣິດ ຜູ້ນັ້ນກໍເປັນຄົນທີ່ຖືກຊົງສ້າງຂຶ້ນໃຫມ່ແລ້ວ ຖານະເກົ່າເຫລົ່ານັ້ນກໍລ່ວງໄປແລ້ວ ເບິ່ງແມ່, ກາຍເປັນສິ່ງໃຫມ່ທັງນັ້ນ"*



## 49. ພຣະວິນຍານບໍຣິສຸດຊົງນຳຄົນທັງຫຼາຍໃຫ້ກັບໃຈໃໝ່ໄດ້ດ້ວຍວິທີໃດ?

ໂດຍຊົງໂຜດໃຫ້ເຮົາຮູ້ສຶກ ເສັຽໃຈ ເສົ້າໃຈຢ່າງແທ້ຈິງ, ໃນຄວາມຜິດບາບທັງຫຼາຍຂອງເຮົາ ແລະເກີດຄວາມປາຖນາທີ່ຈະຢາກປະຖິ້ມຄວາມຜິດບາບນັ້ນເສັຽ ເພື່ອກັບເຂົ້າຫາພຣະເຈົ້າແລະນະມັສການພຣະອົງພຽງຜູ້ດຽວ.

**1 ເທຊະໂລນິກ 1:9** *"ດ້ວຍວ່າຄົນເຫລົ່ານັ້ນເອງກໍໄດ້ລາຍງານເຖິງເຣື່ອງພວກເຮົາວ່າ ເຮົາໄດ້ເຂົ້າມາຫາເຈົ້າດ້ວຍຢ່າງໃດ ແລະພວກເຈົ້າໄດ້ອວ່າຍຫນີຈາກພຣະທຽມມາຫາພຣະເຈົ້າດ້ວຍຢ່າງໃດ ເພື່ອຮັບໃຊ້ພຣະເຈົ້າຜູ້ຊົງພຣະຊົນຢູ່ແລະຜູ້ທ່ຽງທັມ"*

## 50. ເມື່ອພຣະວິນຍານບໍຣິສຸດເຂົ້າສະຖິດໃນຈິດໃຈຂອງໃຜແລ້ວ ເຂົາຈະມີການປ່ຽນແປງຢ່າງໃດແດ່?

ຊີວິດຂອງເຂົາທັງໝົດຈະປ່ຽນແປງໄປໝົດສິ້ນ, ໂດຍຣິດເດດຂອງພຣະວິນຍານບໍຣິສຸດ ຊຶ່ງເຂົ້າມາສະຖິດພາຍໃນເຂົາເຂົາຈະກາຍເປັນຄົນທີ່ຖືກສ້າງຂຶ້ນໃໝ່ ພ້ອມກັນນັ້ນຊີວິດຂອງເຂົາກໍຈະປະກອບໄປດ້ວຍຄວາມສງົບສຸກແລະໄດ້ມີຄວາມປິຕິຍິນດີແບບໃໝ່. ສິ່ງທີ່ເຄີຍກຽດຊັງຈະກັບກາຍມາເປັນການຮັກສິ່ງທີ່ກຽດຊັງນັ້ນ. ຈະກາຍເປັນຄົນທີ່ກຽດຊັງຄວາມຜິດບາບ, ທຸກສິ່ງຢ່າງຈະກັບກາຍເປັນອັນໃໝ່ທັງໝົດ.

**2 ໂກຣິນໂທ 5:1717** *"ເຫດສັນນັ້ນຖ້າຜູ້ໃດຢູ່ໃນພຣະຄຣິດ ຜູ້ນັ້ນກໍເປັນຄົນທີ່ຖືກຊົງສ້າງຂຶ້ນໃຫມ່ແລ້ວ ຖານະເກົ່າເຫລົ່ານັ້ນກໍລ່ວງໄປແລ້ວ ເບິ່ງແມ່, ກາຍເປັນສິ່ງໃຫມ່ທັງນັ້ນ"*

## 51. ພຣະວິນຍານບໍຣິສຸດ ຈະຊົງທຳໃຫ້ເຮົາມີໄຊຊະນະເໜືອຄວາມຜິດບາບແທ້ບໍ?

ແນ່ນອນແລ້ວ ໂດຍອາສັຍກຳລັງຂອງເຮົາເອງ ເຮົາກໍບໍ່ສາມາດເອົາຊະນະຄວາມຜິດບາບໄດ້ ແຕ່ຖ້າກຫາກເຮົາຍິນຍອມໃຫ້ພຣະວິນຍານບໍຣິສຸດມາຄອບຄອງຈິດໃຈຂອງເຮົາ ແລະເຮົາເອງກໍຍອມເຊື່ອຟັງພຣະອົງ ພຣະອົງກໍຈະຊ່ອຍເຮົາໃຫ້ຫຼຸດພົ້ນຈາກຄວາມຜິດບາບ ແລະພຣະອົງກໍຈະຊົງປະທານກຳລັງແກ່ພວກເຮົາໃຫ້ມີໄຊຊະນະໃນການດຳຣົງຊີວິດແບບໃໝ່.

**ໂຣມ 7:18-24** *"ເພາະເຮົາຮູ້ວ່າໃນຕົວເຮົາກໍມີຢູ່ ແຕ່ທີ່ຈະເຮັດການດີນັ້ນເຮົາບໍ່ໄດ້ເຮັດດ້ວຍວ່າການດີຊຶ່ງເຮົາປາຖນານັ້ນເຮົາບໍ່ໄດ້ເຮັດ ແຕ່ການຊົ່ວທີ່ເຮົາບໍ່ປາຖນາເຮັດ ເຮົາກໍຍັງເຮັດຢູ່ຖ້າແມ່ນເຮົາຍັງເຮັດສິ່ງທີ່ເຮົາບໍ່ປາຖນາຈະເຮັດນັ້ນ ກໍບໍ່ແມ່ນຕົວເຮົາເປັນຜູ້ເຮັດ ແຕ່ແມ່ນຄວາມຜິດບາບທີ່ອາໄສຢູ່ໃນຕົວເຮົານັ້ນເປັນຜູ້ເຮັດດັ່ງນັ້ນເຮົາຈຶ່ງເຫັນວ່າເປັນກົດທຳມະດາຢ່າງນຶ່ງຄືເມື່ອໃດເຮົາຕັ້ງໃຈຈະເຮັດການດີຄວາມຊົ່ວກໍມາຕົ້ນເຮົາເພາະວ່າສ່ວນເລິກໃນໃຈຂອງເຮົານັ້ນ ກໍປິຕິຍິນດີໃນພຣະບັນຍັດຂອງພຣະເຈົ້າແຕ່ເຮົາເຫັນກົດອີກຢ່າງນຶ່ງມີຢູ່ໃນອະວັຍວະຂອງເຮົາຊຶ່ງຕໍ່ສູ້ກັບກົດແຫ່ງຈິດໃຈຂອງເຮົາ ແລະຜູກເຮົາໄວ້ໃຕ້ບັງຄັບກົດແຫ່ງຄວາມຜິດບາບຊຶ່ງຢູ່ໃນອະວັຍວະຂອງເຮົາ. ໂອ, ເຮົານີ້ຊ່າງເປັນຄົນທຸກຍາກເຂັນໃຈແທ້ຫນໍ ໃຜແດ່ຈະຊ່ອຍເຮົາໃຫ້ພົ້ນຈາກຮ່າງກາຍທີ່ຕ້ອງຕາຍນີ້"*

**ໂຣມ8:1-2** *"ບັດນີ້ການລົງໂທດຈຶ່ງບໍ່ແມ່ແກ່ຄົນທັງຫລາຍທີ່ຢູ່ໃນພຣະເຢຊູຄຣິດເພາະວ່າກົດຂອງພຣະວິນຍານອັນ*



*ເຮັດໃຫ້ມີຊີວິດໃນພຣະເຢຊູຄຣິດນັ້ນ ໄດ້ເຮັດໃຫ້ເຮົາພົ້ນຈາກກົດຂອງຄວາມຜິດບາບແລະຄວາມຕາຍ"*

## 52. ເຮົາຈະຮັບເອົາພຣະວິນຍານໄດ້ຢ່າງໃດ?

ພຣະເຈົ້າຊົງປະທານພຣະວິນຍານບໍຣິສຸດໃຫ້ແກ່ທຸກຄົນທີ່ມີຄວາມເຊື່ອໂດຍສຸຈຣິດໃຈ, ເຮົາຈະຕ້ອງທູນຂໍຕໍ່ພຣະເຈົ້າໃນພຣະນາມແຫ່ງພຣະມະຫາເຢຊູຄຣິສຢ່າງຈິງໃຈ. ຕ້ອງຕັ້ງໜ້າໃນການເຂົ້າເຝົ້າພຣະເຈົ້າຢ່າງສມ່ຳສເມີ. ຕ້ອງມີຈິດໃຈທີ່ຍອມຮັບແລະອ່ອນນ້ອມຖ່ອມຕົວຕໍ່ພຣະຜູ້ເປັນເຈົ້າ ແລ້ວທູນຂໍພຣະ ເຈົ້າໃນນາມຂອງພຣະເຢຊູຄຣິສເຈົ້າ ເພື່ອພຣະອົງຈະຊົງປະທານພຣະວິນຍານມາສະຖິດກັບເຮົາ. ພຣະຄຳພີໄດ້ກ່າວໄວ້ວ່າ "ທຸກຄົນທີ່ເຊື່ອຟັງພຣະອົງພຣະອົງກໍຈະຊົງໂຜດປະທານໃຫ້ໄດ້ຮັບພຣະວິນຍານບໍຣິສຸດ"

**ກິຈການ 2:38** *"ຝ່າຍເປໂຕຈຶ່ງກ່າວແກ່ເຂົາວ່າ, "ຈົ່ງຖິ້ມໃຈເກົ່າເອົາໃຈໃຫມ່ ແລະຮັບບັບຕິສະມາໃນພຣະນາມຂອງອົງພຣະເຢຊູຄຣິດທຸກຄົນ ເພື່ອການຊົງຍົກບາບໂທດຂອງພວກທ່ານແລ້ວພວກທ່ານຈະໄດ້ຮັບຂອງພຣະຣາຊທານ ຄືພຣະວິນຍານບໍຣິສຸດ"*

**ລູກາ 11:9-13** *"ຝ່າຍເຮົາ, ເຮົາບອກທ່ານທັງຫລາຍວ່າຈົ່ງຫມັ່ນຂໍແລ້ວຈະຊົງປະທານໃຫ້ ຈົ່ງຫມັ່ນຊອກແລ້ວຈະພົບຈົ່ງຫມັ່ນເຄາະແລ້ວຈະຊົງໄຂໃຫ້ເພາະວ່າທຸກຄົນທີ່ຫມັ່ນຂໍກໍໄດ້ຮັບ ທຸກຄົນທີ່ຫມັ່ນຊອກຫາກໍໄດ້ພົບ ແລະທຸກຄົນທີ່ຫມັ່ນເຄາະກໍຊົງໄຂໃຫ້ ຜູ້ໃດໃນພວກທ່ານທີ່ເປັນພໍ່ ຖ້າລູກຂໍປາຈະບໍ່ເອົາງູຕ່າງປາໃຫ້ແກ່ລູກຕີ້ຖ້າຂໍໄຂ່ຈະບໍ່ໄດ້ເອົາແມງງອດໃຫ້ຕີ້ເຫດສັນ*

*ນັ້ນຖ້າທ່ານທັງຫລາຍເອງຜູ້ເປັນຄົນຊົ່ວ ຍັງຮູ້ຈັກເອົາຂອງດີໃຫ້ແກ່ລູກຂອງຕົນ ຫລາຍກວ່ານັ້ນອີກຈັກເທົ່າໃດ ພຣະບິດາຜູ້ຊົງສະຖິດຢູ່ໃນສວັນຈະຊົງປະທານພຣະວິນຍານບໍຣິສຸດແກ່ຜູ້ທີ່ຂໍຈາກພຣະອົງ"*

**ກິຈການ 5:32** *"ເຮົາທັງຫລາຍຈຶ່ງເປັນພຍານເຖິງເຣື່ອງເຫລົ່ານີ້ ແລະພຣະວິນຍານບໍຣິສຸດຊຶ່ງພຣະເຈົ້າໄດ້ຊົງປະທານໃຫ້ທຸກຄົນທີ່ເຊື່ອຟັງພຣະອົງນັ້ນ ກໍຊົງເປັນພຍານເຫມືອນກັນ"*

## 53. ພຣະເຈົ້າ (ພຣະບິດາ), ພຣະເຢຊູຄຣິສ (ພຣະບຸດ), ແລະພຣະວິນຍານບໍຣິສຸດເປັນອົງດຽວກັນບໍ?

ພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ ໄດ້ຣວມກັນເປັນພຣະເຈົ້າອົງດຽວ, ຊຶ່ງຈະແຍກຈາກກັນບໍ່ໄດ້ເລີຍ.  ພຣະອົງຊົງປາກົດແກ່ມະນຸດໃນແບບລັກສະນະທີ່ແຕກຕ່າງກັນຊຶ່ງເຮົາເອີ້ນວ່າ "ຕຣີເອກະນຸພາບ" (ໂຢຮັນ 1)

**1 ຕີໂມທຽວ 2:5** *"ດ້ວຍເຫດວ່າມີພຣະເຈົ້າອົງດຽວ ແລະມີຜູ້ກາງແຕ່ຜູ້ດຽວລະຫວ່າງພຣະເຈົ້າກັບມະນຸດ ຄືພຣະເຢຊູຄຣິດຜູ້ຊົງສະພາບເປັນມະນຸດ"*

**ມັດທາຍ 28:19** *"ເຫດສັນນັ້ນພວກທ່ານຈົ່ງໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສະມາໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ"*

**ຢຮ 10:30** *"ເຮົາກັບພຣະບິດາກໍເປັນອັນນຶ່ງອັນດຽວກັນ"*



# ການອະທິຖານ

## 54. ຜູ້ທີ່ເຊື່ອໃນພຣະເຢຊູຄຣິສ ຈະຕ້ອງມີການປະຕິບັດຕົນແບບໃດ? ໃນການດຳເນີນຊີວິດໃໝ່?

ສິ່ງທີ່ສຳຄັນທີ່ສຸດ ກໍຄື: ການອະທິຖານ ແລະການອ່ານພຣະຄຣິສຕະທັມຄຳພີທຸກວັນ. ນີ້ເປັນການປະຕິບັດທີ່ຈຳເປັນທີ່ສຸດຂອງທຸກຄົນທີ່ມີຄວາມເຊື່ອໃນອົງພຣະເຢຊູຄຣິສ. ຖ້າເຂົາຫາກປາຖນາທີ່ຈະໃຫ້ການດຳເນີນຊີວິດແບບໃໝ່ຈະເຣີນຂຶ້ນ ແລະໄດ້ຮັບໄຊຊະນະຢ່າງງົດງາມ.

**ເພງສັຣເສີນ 119:11** *"ຂ້າພຣະອົງໄດ້ສະສົມພຣະດຳຣັດຂອງພຣະອົງໄວ້ໃນໃຈຂອງຂ້າພຣະອົງ ເພື່ອຂ້າພຣະອົງຈະບໍ່ທຳບາບຕໍ່ພຣະອົງ"*

**ເອເຟໂຊ 6:11-18** *"ຈົ່ງສວມຍຸທພັນຄົບຊຸດຊຶ່ງມາຈາກພຣະເຈົ້າ ເພື່ອທ່ານທັງຫລາຍຈະສາມາດຢືນຕໍ່ສູ້ກັບກົນອຸບາຍຂອງພະຍາມານໄດ້ ເພາະວ່າເຮົາທັງຫລາຍບໍ່ໄດ້ຕໍ່ສູ້ກັບມະນຸດທຳມະດາ ແຕ່ຕໍ່ສູ້ກັບຜູ້ປົກຄອງ ຜູ້ມີອຳນາດ ເຈົ້າໂລກທີ່ຢູ່ໃນໂມຫະຄວາມມືດແຫ່ງໂລກນີ້ ແລະຕໍ່ສູ້ກັບກຳລັງວິນຍານຝ່າຍຄວາມຊົ່ວຮ້າຍໃນອາກາດສະຖານ ເຫດສັນນັ້ນ, ຈົ່ງຮັບເອົາຍຸທພັນຄົບຊຸດຊຶ່ງມາຈາກພຣະເຈົ້າ ເພື່ອທ່ານທັງຫລາຍຈະສາມາດຕໍ່ຕ້ານໃນວັນຊົ່ວຮ້າຍນັ້ນ ແລະເມື່ອເຮັດແລ້ວຈະຢູ່ຢ່າງຫມັ້ນຄົງໄດ້ ເຫດສັນນັ້ນ, ທ່ານທັງຫລາຍຈົ່ງຢືນຫມັ້ນ ເອົາຄວາມຈິງຄາດແອວໄວ້ເອົາຄວາມຊອບທັມເປັນເຄື່ອງປ້ອງການເອິກໄວ້ ແລະເອົາຄວາມພັ່ງພ້ອມຝ່າຍຂ່າວປະເສີດເຣື່ອງສັນຕິສຸກມາສຸບໃສ່*

*ຄົນ ແລະພ້ອມກັບສິ່ງທັງຫມົດນີ້, ຈົ່ງຍົກເອົາຄວາມເຊື່ອເປັນເຂນ ດ້ວຍເຂນນັ້ນທ່ານທັງຫລາຍຈະສາມາດດັບລູກສອນໄຟທັງຫມົດຂອງຜູ້ຮ້າຍນັ້ນໃຫ້ມອດເສັຽ ຈົ່ງເອົາຄວາມພົ້ນເປັນເຄື່ອງຄຽນປ້ອງຫົວໄວ້ ແລະຈົ່ງຖືພຣະແສງຂອງພຣະວິນຍານ ຄືພຣະທັມຂອງພຣະເຈົ້າ ຈົ່ງອ້ອນວອນແລະໄຫວ້ວອນທຸກຢ່າງ ຈົ່ງອ້ອນວອນໂດຍພຣະວິນຍານທຸກເວລາ ແລະຈົ່ງເຝົ້າລະວັງໃນການນັ້ນດ້ວຍຄວາມພຽນທຸກຢ່າງ ຈົ່ງອ້ອນວອນເພື່ອໄພ່ພົນທັງປວງຂອງພຣະເຈົ້າ"*

## 55. ເຮົາຈະອະທິຖານຕໍ່ໃຜ?

*ເຮົາຄວນຈະຂໍຕໍ່ພຣະບິດາ ໃນພຣະນາມແຫ່ງພຣະເຢຊູຄຣິສ ໂດຍຂໍໃຫ້ພຣະວິນຍານບໍຣິສຸດຊົງເປັນຜູ້ນຳພາເຮົາ.

**ໂຢຮັນ 14:13** *"ເມື່ອເຮົາໄປຈັດແຈງບ່ອນໄວ້ສຳລັບພວກທ່ານແລ້ວ ເຮົາຈະກັບມາອີກຮັບທ່ານໄປຢູ່ກັບເຮົາ ເພື່ອວ່າເຮົາຢູ່ທີ່ໃດພວກທ່ານຈະຢູ່ທີ່ນັ້ນເຫມືອນກັນ"*

**ເອເຟໂຊ 3:14** *"ເພາະເຫດນີ້, ຂ້າພະເຈົ້າຈຶ່ງຄຸເຂົ່າລົງຕໍ່ພຣະພັກພຣະບິດາ"*

**ໂຢຮັນ 14:13-14** *"ສິ່ງໃດທີ່ທ່ານທັງຫລາຍຈະຂໍໃນນາມຂອງເຮົາ ເຮົາກໍຈະເຮັດສິ່ງນັ້ນເພື່ອວ່າພຣະບິດາຈະຊົງໄດ້ຮັບກຽດຕິຍົດດ້ວຍພຣະບຸດຖ້າທ່ານທັງຫລາຍຂໍສິ່ງໃດກັບເຮົາໃນນາມຂອງເຮົາ ຝ່າຍເຮົາກໍຈະເຮັດສິ່ງນັ້ນ"*



## 56. ການອະທິຖານ ຄືຫຍັງ?

ຄືການນະມັສການ, ການສັນທະນາ, ແລະການສັຣເສີນໂມທະນາຂອບພຣະຄຸນໃນຄວາມຮັກ ແລະຄວາມກະຣຸນາອັນຍິ່ງໃຫຍ່ຂອງພຣະເຈົ້າທີ່ມີຕໍ່ເຮົາ, ສ່ວນການສາລະພາບຄວາມຜິດບາບຂອງເຮົາທີ່ມີຢູ່ ແລະການທູນຂໍສິ່ງທີ່ເຮົາເອງ ແລະຜູ້ອື່ນຕ້ອງການນັ້ນກໍຄວນຮ່ວມຢູ່ດ້ວຍ.

**ຟີລິປອຍ 4:6-7** *"ຢ່າທຸກຮ້ອນໃຈດ້ວຍສິ່ງໃດເລີຍ ແຕ່ຈົ່ງທູນເຣື່ອງຄວາມປາຖນາຂອງພວກເຈົ້າທຸກຢ່າງຕໍ່ພຣະເຈົ້າ ດ້ວຍການໄຫວ້ວອນ ແລະການອ້ອນວອນຂໍ ພ້ອມກັບການຂອບພຣະຄຸນແລ້ວສັນຕິສຸກອັນມາແຕ່ພຣະເຈົ້າຊຶ່ງເກີນຄວາມເຂົ້າໃຈ ຈະເຝົ້າຮັກສາຈິດໃຈແລະຄວາມຄິດຂອງເຈົ້າທັງຫລາຍໄວ້ໃນພຣະເຢຊູຄຣິດ"*

**ເພງສັຣເສີນ 95:6** *"ມາເຖີດ ໃຫ້ເຮົານະມັສການແລະຂາບລົງ ໃຫ້ເຮົາຄຸເຂົ່າລົງຕໍ່ພຣະຜູ້ເປັນເຈົ້າຜູ້ຊົງສ້າງພວກເຮົາ"*

## 57. ເຮົາຄວນອະທິຖານເວລາໃດ ແລະຢູ່ໃສ?

ເຮົາສາມາດທີ່ຈະອະທິຖານໄດ້ທຸກໆເວລາ ບໍ່ວ່າເວລາໃດ ແລະເຮົາກໍສາມາດທຸກຫົນທຸກແຫ່ງ ໂດຍບໍ່ຈຳກັດວ່າຈະຕ້ອງອະທິຖານບ່ອນນັ້ນບ່ອນນີ້ ເພາະພຣະເຈົ້າຊົງສະຖິດຢູ່ທົ່ວທຸກຫົນທຸກແຫ່ງ ແລະຊົງຄອຍສະດັບຮັບຟັງສຽງຮ້ອງທູນຂໍຂອງລູກໆຂອງພຣະອົງຕລອດເວລາ.

**1 ຕີໂມທຽວ 2:8** *"ເຫດສັນນັ້ນເຮົາປະສົງຢາກໃຫ້ຜູ້ຊາຍທັງຫລາຍໄຫວ້ວອນໃນທຸກແຫ່ງ ດ້ວຍຍົກມືບໍຣິສຸດ ໂດຍບໍ່ມີຄວາມຄຽດ ແລະການຜິດຖຽງກັນ"*

**ມັດທາຍ 6:6** *"ແຕ່ຝ່າຍທ່ານ, ເມື່ອຈະອ້ອນວອນຈົ່ງເຂົ້າໄປໃນຫ້ອງ ດັບອັດປະຕູແລ້ວຈົ່ງອ້ອນວອນພຣະບິດາຂອງທ່ານຜູ້ຊົງສະຖິດໃນທີ່ລັບລີ້ ແລ້ວພຣະບິດາຂອງທ່ານຜູ້ຊົງເຫັນໃນທີ່ລັບລີ້ ຈະຊົງໂຜດປະທານບໍາເຫນັດແກ່ທ່ານ"*

**ເອເຟໂຊ 6:18** *"ຈົ່ງອ້ອນວອນແລະໄຫວ້ວອນທຸກຢ່າງ ຈົ່ງອ້ອນວອນໂດຍພຣະວິນຍານທຸກເວລາ ແລະຈົ່ງເຝົ້າຣະວັງໃນການນັ້ນດ້ວຍຄວາມພຽນທຸກຢ່າງ ຈົ່ງອ້ອນວອນເພື່ອໄພ່ພົນທັງປວງຂອງພຣະເຈົ້າ"*

## 58. ຖ້າເຮົາຂໍສິ່ງໃດ ພຣະເຈົ້າຈະຊົງປະທານໃຫ້ທຸກສິ່ງຫລື?

ພຣະເຢຊູຄຣິສເອງຊົງໄດ້ກ່າວໄວ້ວ່າ "ສິ່ງໃດທີ່ທ່ານທັງຫຼາຍຈະທູນຂໍໃນນາມຂອງເຮົາ ເຮົາຈະກະທໍາສິ່ງນັ້ນ ເພື່ອວ່າພຣະບິດາຈະຊົງໄດ້ຮັບກຽດອັນຍິ່ງໃຫຍ່ທາງພຣະບຸດ" "ຖ້າເຮົາທູນຂໍສິ່ງໃດທີ່ເປັນພຣະປະສົງຂອງພຣະອົງ ພຣະອົງກໍຈະຊົງໂຜດຟັງເຮົາ" "ເຮົາຈະຂໍສິ່ງໃດໆກໍໄດ້ສິ່ງນັ້ນໆຈາກພຣະອົງ ເພາະເຮົາປະພຶດຕາມພຣະບັນຍັດຂອງພຣະອົງ ແລະປະຕິບັດເປັນທີ່ຊອບພຣະທັຍຂອງພຣະອົງ"

**ໂຢຮັນ 14:1-3** *"ຢ່າໃຫ້ໃຈຂອງທ່ານທັງຫລາຍວຸ້ນວາຍໄປຈົ່ງວາງໃຈໃນພຣະເຈົ້າແລະໄວ້ວາງໃຈໃນເຮົາເຫມືອນກັນໃນຜາສາດພຣະບິດາຂອງເຮົາມີທີ່ຢູ່ຫລາຍບ່ອນ ຖ້າບໍ່ມີເຮົາຄົງໄດ້ບອກພວກທ່ານແລ້ວ ເພາະເຮົາໄປຈັດແຈງບ່ອນໄວ້ສໍາລັບທ່ານທັງຫລາຍເມື່ອເຮົາໄປຈັດແຈງບ່ອນໄວ້ສໍາລັບພວກທ່ານແລ້ວ*



*ເຮົາຈະກັບມາອີກຮັບທ່ານໄປຢູ່ກັບເຮົາ ເພື່ອວ່າເຮົາຢູ່ທີ່ໃດພວກທ່ານຈະຢູ່ທີ່ນັ້ນເຫມືອນກັນ"*

**ໂຢຮັນ5:14-15** *"ພາຍຫລັງນັ້ນພຣະເຢຊູໄດ້ຊົງພົບຄົນນັ້ນໃນບໍຣິເວນພຣະວິຫານ ແລ້ວຊົງບອກວ່າ, "ນີ້ແຫລະ, ເຈົ້າດີພຍາດແລ້ວ ຢ່າເຮັດບາບຕໍ່ໄປ ຢ້ານວ່າເຫດຮ້າຍກວ່ານັ້ນຈະເກີດກັບເຈົ້າອີກ"ຊາຍຜູ້ນັ້ນກໍໄດ້ໄປບອກພວກຢິວວ່າ ຜູ້ທີ່ໄດ້ເຮັດໃຫ້ຕົວດີພຍາດນັ້ນຄືພຣະເຢຊູ"*

**1ໂ ຢຮັນ 3:22** *"ແລະພວກເຮົາຂໍສິ່ງໃດ ເຮົາກໍໄດ້ສິ່ງນັ້ນຈາກພຣະອົງ ເພາະວ່າພວກເຮົາຖືຮັກສາຂໍ້ບັນຍັດຂອງພຣະອົງແລະປະຕິບັດຕາມຊອບພຣະທັຍພຣະອົງ"*

ການອະທິຖານທູນຂໍຈາກພຣະເຈົ້າ ພວກເຮົາຕ້ອງນອບນ້ອມຖ່ອມຕົວຂອງພວກເຮົາລົງ, ແລະຕ້ອງທູນຂໍກັບພຣະອົງດ້ວຍຄວາມຈິງໃຈ.

# ພິທີສິນຕ່າງໆ

## 59. ຜູ້ທີ່ເປັນສາວົກຂອງພຣະເຢຊູຄຣິສ ຈະຕ້ອງເຂົ້າສູ່ພິທີສໍາຄັນຫຍັງແດ່?

ຄຣິສະຕຽນທຸກຄົນ ຈະມີການເຂົ້າຮ່ວມພິທີສິນຕ່າງໆຢູ່ສອງຢ່າງຄື: ສິນບັບຕິສມາ, ແລະສິນລະນຶກ (ສິນມະຫາສນິດ)

**ມັດທາຍ 28:19** *"ເຫດສັນນັ້ນພວກທ່ານຈົ່ງໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສະມາໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ"*

**1 ໂກຣິນໂທ 11:23-26** *"ດ້ວຍວ່າເຣື່ອງຊຶ່ງເຮົາໄດ້ມອບໄວ້ໃຫ້ແກ່ເຈົ້າທັງຫລາຍນັ້ນ ເຮົາໄດ້ຮັບຈາກອົງພຣະຜູ້ເປັນເຈົ້າ ຄືໃນຄືນທີ່ຢູດາໄດ້ທໍຣະຍົດຕໍ່ພຣະອົງເຈົ້າເຢຊູນັ້ນ ພຣະອົງໄດ້ຊົງຈັບເຂົ້າຈີ່ມາແລະເມື່ອຂອບພຣະຄຸນແລ້ວຊົງຫັກເຂົ້າຈີ່ນັ້ນ ໂດຍຊົງກ່າວວ່າ, "ນີ້ແຫລະ, ຄືກາຍຂອງເຮົາຊຶ່ງໃຫ້ສຳລັບພວກເຈົ້າຈົ່ງເຮັດຢ່າງນີ້ໃຫ້ເປັນທີ່ລະນຶກເຖິງເຮົາ"ເມື່ອຮັບປະທານເຂົ້າແລງແລ້ວ ພຣະອົງໄດ້ຊົງຈັບເອົາຈອກດ້ວຍອາການຢ່າງດຽວກັນ ໂດຍຊົງກ່າວວ່າ, "ຈອກນີ້ຄືຄຳສັນຍາໃຫມ່ໂດຍເລືອດຂອງເຮົາ ເມື່ອເຈົ້າດື່ມຈາກຈອກນີ້ເວລາໃດ ຈົ່ງດື່ມເປັນທີ່ລະນຶກເຖິງເຮົາ"ເພາະວ່າ ເມື່ອເຈົ້າທັງຫລາຍກິນເຂົ້າຈີ່ນີ້ ແລະດື່ມຈາກຈອກນີ້ເວລາໃດ ເຈົ້າກໍປະກາດການວາຍພຣະຊົນຂອງອົງພຣະຜູ້ເປັນເຈົ້າ ຈົນກວ່າພຣະອົງຈະສະເດັດມາ"*

## 60. ບັບຕິສມາ ແມ່ນຫຍັງ?

ບັບຕິສມາແມ່ນພິທີສິນ ຊຶ່ງເປັນພິທີຊຳຣະດ້ວຍນ້ຳໃນພຣະນາມແຫ່ງພຣະບິດາ, ພຣະບຸດ, ແລະພຣະວິນຍານບໍຣິສຸດ. ອັນເປັນເຄື່ອງຫມາຍວ່າຜູ້ທີ່ຮັບນັ້ນໄດ້ເຂົ້າສ່ວນໃນພຣະເຢຊູຄຣິສທັງໃນຄວາມຕາຍຂອງພຣະອົງ, ໄດ້ຖືກຝັງໄວ້ກັບພຣະອົງ, ແລະໄດ້ຟື້ນຄືນມາດ້ວຍກັນກັບພຣະອົງ. ຜູ້ໃດໄດ້ຮັບສິນບັບຕິສມາແລ້ວ ຍອມສະແດງວ່າຜູ້ນັ້ນໄດ້ມີຄວາມຕັ້ງໃຈທີ່ແນ່ວແນ່ໃນການທີ່ຈະດຳຣົງຊີວິດໃໝ່.

**ໂຣມ 6:3-4** *"ເຈົ້າທັງຫລາຍບໍ່ຮູ້ຫລືວ່າ ພວກເຮົາທຸກຄົນທີ່ໄດ້ຮັບບັບຕິສະມາເຂົ້າໃນພຣະເຢຊູຄຣິດ ກໍໄດ້ຮັບບັບຕິສະມາເຂົ້າໃນຄວາມຕາຍຂອງພຣະອົງເຫດສັນນັ້ນພວກເຮົາຈຶ່ງໄດ້ຖືກຝັງໄວ້ກັບພຣະອົງ ໂດຍການຮັບບັບຕິສະມາເຂົ້າສ່ວນໃນການສິ້ນພຣະຊົນນັ້ນ ເພື່ອວ່າພຣະຄຣິດໄດ້ຖືກຊົງບັນດານໃຫ້ຄືນພຣະຊົນໂດຍຣິດເດດອັນຮຸ່ງເຮືອງຂອງພຣະບິດາສັນໃດ ເຮົາທັງຫລາຍກໍຈະໄດ້ດຳເນີນຕາມຊີວິດໃຫມ່ເຫມືອນກັນສັນນັ້ນ"*



## 61. ໃຜແດ່ຈະສາມາດຮັບບັບຕິສມາໄດ້?

ທຸກຄົນທີ່ກັບໃຈໃໝ່ ແລະມີຄວາມເຊື່ອໃນພຣະເຢຊູຄຣິສຢ່າງແທ້ຈິງ. ຜູ້ນັ້ນຈະຕ້ອງຍອມຮັບເອົາພຣະເຢຊູຄຣິສເປັນພຣະຜູ້ຊ່ອຍໃຫ້ລອດຂອງຕົນ ແລະພ້ອມທັງໄດ້ຮັບການເຫັນຊອບຈາກໝູ່ຄຣິສະຕຽນປະຈຳຄຣິສຕະຈັກນັ້ນໆ. ການຍອມຮັບນີ້ຈະຕ້ອງ ເປັນການຍອມຮັບຢູ່ຕໍ່ໜ້າພີ່ນ້ອງຄຣິສະຕຽນ ແລະພີ່ນ້ອງເຫຼົ່ານັ້ນກໍຈະເປັນພິຍານໃນການກັບໃຈຂອງຕົນ.

**ກິຈການ 2:38** *"ຝ່າຍເປໂຕຈຶ່ງກ່າວແກ່ເຂົາວ່າ, "ຈົ່ງຖິ້ມໃຈເກົ່າເອົາໃຈໃຫມ່ ແລະຮັບບັບຕິສະມາໃນພຣະນາມຂອງອົງພຣະເຢຊູຄຣິດທຸກຄົນ ເພື່ອການຊົງຍົກບາບໂທດຂອງພວກທ່ານແລ້ວພວກທ່ານຈະໄດ້ຮັບຂອງພຣະຣາຊທານ ຄືພຣະວິນຍານບໍຣິສຸດ"*

## 62. ສິນລະນຶກ ຄືຫຍັງ?

ເປັນພິທີສິນ ທີ່ພຣະເຢຊູຄຣິສໄດ້ເປັນຜູ້ຊົງບັນຍັດໄວ້ກ່ອນໜ້າທີ່ພຣະອົງຈະຖືກຕອກຄຶງໄວ້ທີ່ໄມ້ກາງແຂນ. ເມື່ອພຣະອົງຊົງຈັບເຂົາຈີ່ຂຶ້ນມາແລ້ວ ຊົງກ່າວວ່າ, "ນີ້ຄືກາຍຂອງເຮົາ ຊຶ່ງໄດ້ປະທານສຳລັບທ່ານທັງຫລາຍ ຈົ່ງເຮັດດັ່ງນີ້ໃຫ້ເປັນທີ່ລະນຶກເຖິງເຮົາ"

**ລູກາ 22:20** *"ເມື່ອຮັບປະທານເຂົ້າແລງແລ້ວ ຈຶ່ງຊົງຈັບເອົາຈອກມາຢ່າງດຽວກັນ ໂດຍຊົງກ່າວວ່າ, "ຈອກນີ້ເປັນຄໍາສັນຍາໃຫມ່ໃນເລືອດຂອງເຮົາ ທີ່ຖອກອອກສໍາລັບທ່ານທັງຫລາຍ"*

## 63. ຜູ້ໃດແດ່ທີ່ມີສິດຮັບສິນລະນຶກນີ້ໄດ້?

ທຸກຄົນທີ່ບັງເກີດໃໝ່ ແລະໄດ້ຮັບສິນບັບຕິສມາແລ້ວເທົ່ານັ້ນ ຈຶ່ງມີສິດທີ່ຈະຮັບສິນລະນຶກຮ່ວມກັບຄຣິສະຕຽນຄົນອື່ນໆໄດ້.

**ກິຈການ 2:41-42** *"ຝ່າຍຄົນທັງຫລາຍທີ່ໄດ້ເຊື່ອຮັບຟັງຖ້ອຍຄໍາຂອງເປໂຕກໍໄດ້ຮັບບັບຕິສະມາໃນວັນນັ້ນມີຄົນຕື່ມເຂົ້າເປັນລູກສິດປະມານສາມພັນຄົນແລະເຂົາໄດ້ຫມັ້ນຄົງຢູ່ໃນຄໍາສອນຂອງພວກອັຄສາວົກ, ໃນການຮ່ວມໃຈກັນ, ໃນການຫັກເຂົ້າຈີ່ ແລະໃນການໄຫວ້ວອນ"*

## 64. ກ່ອນຈະຮັບສິນລະນຶກ ຄວນມີການຕຽມຈິດຕຽມໃຈຫຼືບໍ?

ແນ່ນອນທີ່ສຸດ ກ່ອນອື່ນໝົດລູກໆຂອງພຣະເຈົ້າທຸກຄົນຄວນຈະຕ້ອງພິຈາຣະນາເບິ່ງຈິດໃຈຂອງຕົນເອງເສັຽກ່ອນ. ຖ້າຮູ້ສຶກວ່າຊີວິດຂອງຕົນຍັງມີຄວາມຜິດບາບຢູ່ກໍຄວນຈະຍອມສາລະພາບແລະຕັ້ງໃຈປະຖິ້ມຄວາມຜິດບາບດັ່ງກ່າວນັ້ນເສັຽ ທັງນີ້ກໍເພື່ອຕົນເອງຈະເປັນຄົນບໍຣິສຸດ ແລະສາມາດຮ່ວມໂຕະກັບພຣະເຈົ້າໄດ້. ການກິນ ແລະການດື່ມທີ່ບໍ່ສົມຄວນໃນການຮັບສິນລະນຶກນີ້ຈະເປັນການໃຫ້ໂທດແກ່ຕົນເອງເທົ່ານັ້ນ.



# <u>ຄຣິສຕະຈັກ</u>

## 65. ຄຣິສຕະຈັກຂອງພຣະເຢຊູຄຣິສຄືຫຍັງ?

ຄຣິສຕະຈັກປະກອບດ້ວຍຜູ້ທີ່ເຊື່ອໃນພຣະເຢຊູຄຣິສທັງໝົດບໍ່ວ່າຊາດໃດພາສາໃດກໍຕາມ ເປັນຜູ້ທີ່ພຣະອົງໄດ້ຊົງຊ່ອຍໃຫ້ໄດ້ຮັບຄວາມລອດພົ້ນ ແລະກໍເປັນຜູ້ທີ່ພຣະອົງຊົງສະຖິດຢູ່ດ້ວຍ.

**1 ໂກຣິນໂທ 12:13-14** *"ເພາະວ່າເຖິງແມ່ນພວກເຮົາຈະເປັນຊາດຢິວ ຫລືຄົນຕ່າງຊາດກໍດີ ເປັນຂ້ອຍຂ້າ ຫລືເປັນອິສຣະກໍດີ ເຮົາທັງຫລາຍໄດ້ຮັບບັບຕິສະມາໂດຍພຣະວິນຍານອົງດຽວຈຶ່ງເຂົ້າເປັນກາຍອັນດຽວກັນ ແລະພຣະວິນຍານອົງດຽວກໍຊົມຊວ່ານຢູ່ເພາະວ່າຮ່າງກາຍນັ້ນບໍ່ໄດ້ປະກອບດ້ວຍອະວັຍວະອັນດຽວ ແຕ່ໄດ້ປະກອບດ້ວຍອະວັຍວະຫລາຍອັນ"*

## 66. ພຣະເຢຊູຄຣິສຊົງກ່ຽວຂ້ອງກັບຄຣິສຕະຈັກແບບໃດ?

ພຣະເຢຊູຄຣິສ ໄດ້ເປັນຜູ້ເສັຽສະລະຊີວິດຂອງພຣະອົງເອງໃຫ້ແກ່ຄຣິສຕະຈັກ ຊຶ່ງເຮົາເອີ້ນກັນໃນແງ່ນຶ່ງວ່າ ຄຣິສຕະຈັກ ຄືພຣະກາຍຂອງພຣະເຢຊູຄຣິສ ໂດຍພຣະອົງເອງຊົງເປັນສີສະ. ສາວົກແຕ່ລະຄົນເປັນອະວັຍວະສ່ວນນຶ່ງຂອງພຣະອົງ ແລະໄດ້ຮັບເອົາຊີວິດຂອງພຣະອົງໄວ້ໃນຕົນເອງ.

**ໂກໂລຊາຍ 1:18-24** *"ພຣະອົງຊົງເປັນສີສະຂອງກາຍ ຄືຄຣິສຕະຈັກ ພຣະອົງຊົງເປັນປະຖົມ ເປັນຜູ້ແຣກທີ່ຖືກຊົງບັນດານໃຫ້ຄືນມາຈາກຕາຍ ເພື່ອພຣະອົງຈະຊົງເປັນເອກໃນສັພສິ່ງທັງ*

*ປວງເພາະວ່າ ພຣະບິດາຊົງພໍພຣະທັຍ ທີ່ຈະໃຫ້ສະພາບຂອງພຣະເຈົ້າສະຖິດຢູ່ໃນພຣະບຸດຢ່າງເຕັມບໍຣິບູນ ແລະໂດຍພຣະບຸດນັ້ນຈະໄດ້ຊົງໃຫ້ສິ່ງສາຣະພັດກັບຄືນດີກັບພຣະເຈົ້າ ບໍ່ວ່າສິ່ງນັ້ນຈະຢູ່ໃນແຜ່ນດິນໂລກ ຫລືໃນສວັນ ພຣະອົງໄດ້ຊົງບັນດານໃຫ້ເກີດສັນຕິພາບດ້ວຍພຣະໂລຫິດ ຊຶ່ງໄຫລທີ່ໄມ້ກາງແຂນຂອງພຣະອົງ ແລະເຈົ້າທັງຫລາຍ ຊຶ່ງເມື່ອກ່ອນນັ້ນບໍ່ແມ່ນພົລເມືອງຂອງພຣະເຈົ້າ ແຕ່ເປັນສັດຕຣູທາງດ້ານຈິດໃຈດ້ວຍການຊົ່ວຮ້າຍຕ່າງໆ ບັດນີ້ ພຣະອົງຊົງໂຜດໃຫ້ກັບຄືນດີກັບພຣະອົງ ໂດຍການສິ້ນພຣະຊົນແຫ່ງພຣະກາຍ ຄືເນື້ອຫນັງຂອງພຣະອົງ ເພື່ອຈະໄດ້ຊົງຖວາຍພວກເຈົ້າຕໍ່ພຣະພັກພຣະເຈົ້າ ໃຫ້ເປັນຄົນບໍຣິສຸດທີ່ບໍ່ມີຕໍາຫນິຕິຕຽນໄດ້ແຕ່ເຈົ້າທັງຫລາຍຕ້ອງຕັ້ງຫມັ້ນຢູ່ໃນຄວາມເຊື່ອ ຊຶ່ງໄດ້ວາງຮາກລົງຢ່າງແຫນ້ນຫນາຖາວອນແລ້ວແລະຢ່າໄດ້ຫນີຈາກຄວາມໄວ້ໃຈໃນຂ່າວປະເສີດທີ່ພວກເຈົ້າໄດ້ຍິນແລ້ວ ແລະໄດ້ປະກາດແລ້ວແກ່ມະນຸດທຸກຄົນທີ່ຢູ່ທົ່ວໃຕ້ຟ້າຊຶ່ງເຮົາ ໂປໂລ ເປັນຜູ້ຮັບໃຊ້ໃນການປະກາດຂ່າວປະເສີດນັ້ນບັດນີ້ ເຮົາມີຄວາມຍິນດີໃນການທີ່ໄດ້ຮັບຄວາມທຸກເພື່ອເຈົ້າທັງຫລາຍ ສ່ວນການຊົງທົນທຸກຂອງພຣະຄຣິດທີ່ຍັງຂາດຢູ່ນັ້ນ ເຮົາກໍຮັບທົນຈົນສໍາເຣັດໃນເນື້ອກາຍຂອງເຮົາ ເພາະເຫັນແກ່ພຣະກາຍຂອງພຣະອົງ ຄືຄຣິສຕະຈັກ"*

## 67. ຄຣິສຕະຈັກມີໜ້າທີ່ຢ່າງໃດ?

ມີໜ້າທີ່ປະກາດຂ່າວປະເສີດເຣື່ອງພຣະຄຸນຂອງພຣະເຈົ້າແກ່ຄົນທັງຫຼາຍ. ໃຫ້ການໜຸນໃຈ ແລະອົບຣົມສັ່ງສອນຄົນທັງຫຼາຍ ເພື່ອໃຫ້ເຂົາເຫຼົ່ານັ້ນໄດ້ຮັບເອົາພຣະຄຣິສເປັນພຣະຜູ້ຊ່ອຍ



ໃຫ້ລອດຂອງເຂົາ ແລະຮວບຮວມເຫຼົ່າສາວົກທັງຫຼາຍເຂົ້າມາຮ່ວມປະຊຸມ, ນະມັສການ, ອະທິຖານຕໍ່ພຣະເຈົ້າ ແລະມີການສາມັກຄີທັມຮ່ວມກັນ ເພື່ອຈະໄດ້ສໍາແດງພຣະຣັສມີຂອງພຣະເຈົ້າໃຫ້ປາກົດອອກໄປ ໃນຖ້າມກາງໂລກອັນມືດມົນນີ້.

**ມັດທາຍ28:19** *"ເຫດສັນນັ້ນພວກທ່ານຈົ່ງໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສະມາໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດ"*

**ກິຈການ 2:41-47** *"ຝ່າຍຄົນທັງຫລາຍທີ່ໄດ້ເຊື່ອຮັບຟັງຖ້ອຍຄໍາຂອງເປໂຕກໍໄດ້ຮັບບັບຕິສະມາໃນວັນນັ້ນມີຄົນຕື່ມເຂົ້າເປັນລູກສິດປະມານສາມພັນຄົນແລະເຂົາໄດ້ຫມັ້ນຄົງຢູ່ໃນຄໍາສອນຂອງພວກອັຄສາວົກ, ໃນການຮ່ວມໃຈກັນ, ໃນການຫັກເຂົ້າຈີ່ ແລະໃນການໄຫວ້ວອນ ທຸກຄົນເກີດມີຄວາມຢ້ານຢໍານັບຖືສ່ວນພວກອັຄສາວົກກໍໄດ້ເຮັດການອັດສະຈັນແລະຫມາຍສໍາຄັນຫລາຍປະການ ບັນດາຜູ້ທີ່ເຊື່ອຖືນັ້ນກໍໄດ້ຢູ່ຮ່ວມກັນ ແລະຊັບສິ່ງຂອງຂອງເຂົາເຫລົ່ານັ້ນເຂົາກໍຖືເປັນຂອງສ່ວນຮວມ ແລະເຂົາໄດ້ຂາຍທີ່ດິນແລະຊັບສິ່ງຂອງ ມາແຈກຢາຍໃຫ້ຄົນທັງປວງຕາມທີ່ທຸກຄົນຕ້ອງການ ເຂົາໄດ້ຫມັ່ນຮ່ວມປະຊຸມໃນບໍຣິເວນພຣະວິຫານທຸກວັນ ແລະຫັກເຂົ້າຈີ່ ຕາມເຮືອນຂອງເຂົາ ຮ່ວມຮັບປະທານອາຫານດ້ວຍຄວາມຊື່ນຊົມຍິນດີແລະໃຈສັດຊື່ ທັງໄດ້ສັຣເສີນພຣະເຈົ້າ ແລະພົລເມືອງທັງຫມົດກໍຊອບໃຈນໍາ ຝ່າຍອົງພຣະຜູ້ເປັນເຈົ້າໄດ້ຊົງໂຜດໃຫ້ຄົນທັງຫລາຍຊຶ່ງກໍາລັງຈະລອດພົ້ນນັ້ນມາເຂົ້າກັບພວກສິດທຸກໆວັນ"*

## 68. ບັນດາສາວົກຂອງພຣະອົງ ຄວນຈະນະມັສການ ພຣະເຈົ້າໃນເວລາໃດ ແລະຢູ່ໃສ?

ມັນເປັນທຳນຽມແລະປະເພນີທີ່ຊາວຄຣິສະຕຽນທັງຫຼາຍຈະຮ່ວມປະຊຸມນະມັສການໃນວັນອາທິດ ບໍ່ວ່າບ່ອນໃດກໍຕາມທີ່ມີເຫຼົ່າສາວົກຂອງພຣະເຢຊູຄຣິສຢູ່ ຈະຕ້ອງມີການປະຊຸມນະມັສການພຣະເຈົ້າທັນທີ. ມີຫຼາຍບ່ອນກໍໄດ້ມີກນຈັດກອງປະຊຸມຢູ່ຕາມບ້ານເຮືອນຂອງຄຣິສະຕຽນຄົນໃດຄົນນຶ່ງ ການປະຊຸມອາດເລີ້ມຈາກບ້ານເຮືອນ ແລະຖ້າຫາກສະມາຊິກເພີ້ມຂຶ້ນກໍອາດຊອກບ່ອນເຫມາະສົມ ຊຶ່ງເຮົາເອີ້ນວ່າ "ໂບດ ຫຼື ວິຫານ" ນັ້ນເອງ. ພຣະເຢຊູຄຣິສເອງຊົງກ່າວວ່າ, "ມີສອງສາມຄົນປະຊຸມກັນຢູ່ທີ່ໃດໃນນາມຂອງເຮົາ ເຮົາກໍຈະຢູ່ຖ້າມກາງພວກເຂົາໃນທີ່ນັ້ນ"

**ມັດທາຍ 18:19-20** *"ເຮົາບອກແກ່ພວກທ່ານອີກວ່າ ຖ້າໃນພວກທ່ານທີ່ຢູ່ໃນໂລກສອງຄົນຈະຮ່ວມການຂໍສິ່ງນຶ່ງສິ່ງໃດ ພຣະບິດາຂອງເຮົາຜູ້ຊົງສະຖິດຢູ່ໃນສວັນກໍຈະຊົງກະທຳໃຫ້ດ້ວຍວ່າມີສອງຫລືສາມຄົນປະຊຸມກັນໃນນາມຂອງເຮົາຢູ່ບ່ອນໃດເຮົາກໍຢູ່ຖ້າມກາງເຂົາບ່ອນນັ້ນແຫລະ"*

**ກິຈການ 12:12** *"ເມື່ອເປໂຕຄິດດັ່ງນີ້ແລ້ວກໍໄປເຖິງເຮືອນຂອງມາຣິອາແມ່ຂອງໂຢຮັນ ຜູ້ມີຊື່ອີກວ່າ ມາຣະໂກ ທີ່ນັ້ນມີຫລາຍຄົນໄດ້ຊຸມນຸມກັນອ້ອນວອນຢູ່"*

**1 ໂກຣິນໂທ 16:19** *"ຄຣິສຕະຈັກທັງຫລາຍໃນແຂວງອາເຊັຽ ກໍຝາກຄວາມຄິດເຖິງມາຍັງເຈົ້າທັງຫລາຍ ອາກີລາແລະປີຊະກີລາພ້ອມກັບຄຣິສຕະຈັກທີ່ຢູ່ໃນເຮືອນຂອງເຂົານັ້ນ ກໍຝາກຄວາມຄິດເຖິງໃນອົງພຣະຜູ້ເປັນເຈົ້າມາຍັງພວກເຈົ້າຢ່າງເຕັມທີ"*



## 69. ຜູ້ທີ່ເຊື່ອໃນພຣະເຢຊູຄຣິສທຸກຄົນຈະສາມາດເຂົ້າ ເປັນສະມາຊິກຂອງຄຣິສຕະຈັກໄດ້ຫຼືບໍ?

ແນ່ນອນ ຜູ້ທີ່ກັບໃຈໃໝ່ ແລະໄດ້ຮັບສິນບັບຕິສມາແລ້ວ ກໍສາມາດເຂົ້າເປັນສະມາຊິກຂອງຄຣິສຕະຈັກປະຈຳທ້ອງຖິ່ນຂອງຕົນເອງໄດ້, ແລະການທີ່ຈະເປັນສະມາຊິກຂອງຄຣິສຕະຈັກນຶ່ງໆ ກໍຂຶ້ນກັບຄວາມຕ້ອງການ ແລະການຕັດສິນໃຈສ່ວນບຸກຄົນຂອງຜູ້ທີ່ເຊື່ອໃນພຣະເຈົ້າ (ທີ່ສເນີມານີ້ເພາະບາງທ້ອງຖິ່ນກໍມີຫຼາຍ ຄຣິສຕະຈັກ)

**ກິຈການ 2:41** *"ຝ່າຍຄົນທັງຫລາຍທີ່ໄດ້ເຊື່ອຮັບຟັງຖ້ອຍຄຳຂອງເປໂຕກໍໄດ້ຮັບບັບຕິສະມາໃນວັນນັ້ນມີຄົນຕື່ມເຂົ້າເປັນລູກສິດປະມານສາມພັນຄົນ"*

## 70. ສະມາຊິກຄຣິສຕະຈັກ ມີສິດພິເສດ ແລະມີການ ຮັບຜິດຊອບຫຍັງແດ່?

ສິດພິເສດນັ້ນຄືການໄດ້ເຂົ້າຮ່ວມນະມັສການພຣະເຈົ້າຮ່ວມກັບຄົນອື່ນໆ, ສາມາດຮ່ວມສະມາຄົມເປັນຄອບຄົວອັນດຽວກັນຮ່ວມສຸກ ຮ່ວມທຸກ ຊຶ່ງກັນແລະກັນ ຊ່ອຍເຫຼືອຊຶ່ງກັນແລະກັນຕາມສົມຄວນ. ສ່ວນໜ້າທີ່ຮັບຜິດຊອບນັ້ນຄື: ອ່ານຄຳພີ ອະທິຖານ ໄປນະມັສການ ເປັນພະຍານ ແລະການຖວາຍ

**1 ໂຢຮັນ 1:7** *"ແຕ່ຖ້າເຮົາທັງຫລາຍດຳເນີນຊີວິດຢູ່ໃນຄວາມສວ່າງເຫມືອນຢ່າງພຣະອົງຊົງສະຖິດຢູ່ໃນຄວາມສວ່າງພວກເຮົາກໍຮ່ວມສາມັກຄີທັມເຊິ່ງກັນແລະກັນ ແລະພຣະໂລຫິດຂອງພຣະເຢຊູພຣະບຸດຂອງພຣະອົງ ກໍຊຳຣະລ້າງເຮົາທັງຫລາຍຈາກຜິດບາບຫມົດສິ້ນ"*

**1 ເປໂຕ 2:12** *"ຈົ່ງດຳເນີນຊີວິດອັນດີທ່າມກາງຄົນຕ່າງຊາດ ເພື່ອໃນກໍຣະນີທີ່ເຂົາຕິຕຽນນິນທາພວກທ່ານວ່າເປັນຄົນເຮັດຊົ່ວນັ້ນ ເຂົາກໍຈະສັຣເສີນພຣະເຈົ້າໃນວັນທີພຣະອົງສະເດັດມາ ເພາະເຂົາໄດ້ແລເຫັນການດີທີ່ພວກທ່ານປະຕິບັດນັ້ນ"*

**ມັດທາຍ 28:19-20** *"ເຫດສັນນັ້ນພວກທ່ານຈົ່ງໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິສະມາໃນພຣະນາມແຫ່ງພຣະບິດາ ພຣະບຸດ ແລະພຣະວິນຍານບໍຣິສຸດສັ່ງສອນເຂົາໃຫ້ຖືຮັກສາສາຣະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ ນີ້ແຫລະ, ເຮົາຢູ່ກັບທ່ານທັງຫລາຍທຸກໆ ວັນຈົນຫມົດກັບ"*

# ພຣະເຢຊູຄຣິສຈະສະເດັດກັບມາອີກ

## 71. ແມ່ນຫຽັງຄືຄວາມຫວັງຂອງຄຣິສຕະຈັກ?

ກ່ອນທີ່ພຣະເຢຊູຄຣິສຈະສະເດັດຂຶ້ນສູ່ສະຫວັນ ພຣະອົງຊົງສັນຍາວ່າຈະກັບຄືນມາອີກ ເພື່ອຮັບເອົາເຮົາຊຶ່ງເປັນຄຣິສຕະຈັກຂອງພຣະອົງໄປຢູ່ກັບພຣະອົງ.

**ໂຢຮັນ 14** *"ຢ່າໃຫ້ໃຈຂອງທ່ານທັງຫລາຍວຸ້ນວາຍໄປ ຈົ່ງວາງໃຈໃນພຣະເຈົ້າແລະໄວ້ວາງໃຈໃນເຮົາເຫມືອນກັນ ໃນຜາສາດພຣະບິດາຂອງເຮົາມີທີ່ຢູ່ຫລາຍບ່ອນ ຖ້າບໍ່ມີເຮົາຄົງໄດ້ບອກພວກທ່ານແລ້ວ ເພາະເຮົາໄປຈັດແຈງບ່ອນໄວ້ສຳລັບທ່ານທັງຫລາຍ ເມື່ອເຮົາໄປຈັດແຈງບ່ອນໄວ້ສຳລັບພວກທ່ານແລ້ວ*



*ເຮົາຈະກັບມາອີກຮັບທ່ານໄປຢູ່ກັບເຮົາ ເພື່ອວ່າເຮົາຢູ່ທີ່ໃດພວກທ່ານຈະຢູ່ທີ່ນັ້ນເຫມືອນກັນແລະທ່ານຮູ້ຈັກທາງທີ່ເຮົາຈະໄປນັ້ນ" ໂທມາທູນພຣະອົງວ່າ, "ນາຍເຈົ້າເອີຍ, ພວກຂ້ານ້ອຍບໍ່ຮູ້ວ່າທ່ານຈະໄປໃສ ພວກຂ້ານ້ອຍຈະຮູ້ຈັກທາງນັ້ນດ້ວຍຢ່າງໃດ" ພຣະເຢຊູຊົງຕອບເຂົາວ່າ, "ເຮົານີ້ແຫລະ, ເປັນທາງນັ້ນ ເປັນຄວາມຈິງ ແລະເປັນຊີວິດ ບໍ່ມີຜູ້ໃດມາເຖິງພຣະບິດາໄດ້ນອກຈາກຈະມາທາງເຮົາ ຖ້າທ່ານທັງຫລາຍຮູ້ຈັກເຮົາແລ້ວ ທ່ານກໍຄົງຮູ້ຈັກພຣະບິດາຂອງເຮົາເຫມືອນກັນ ຕັ້ງແຕ່ນີ້ໄປທ່ານທັງຫລາຍກໍຮູ້ຈັກພຣະອົງແລະໄດ້ເຫັນພຣະອົງ" ຟີລິບທູນພຣະອົງວ່າ, "ນາຍເຈົ້າເອີຍ, ຂໍສະແດງ ພຣະບິດາໃຫ້ຂ້ານ້ອຍທັງຫລາຍໄດ້ເຫັນ ພວກຂ້ານ້ອຍກໍຈະພໍໃຈແລ້ວ" ພຣະເຢຊູຊົງຕອບວ່າ, "ຟີລິບເອີຍ, ເຮົາໄດ້ຢູ່ກັບພວກທ່ານເຫິງມາເຖິງພຽງນີ້ ແລະພວກທ່ານຍັງບໍ່ຮູ້ຈັກເຮົາອີກຫລື ຜູ້ທີ່ໄດ້ເຫັນເຮົາກໍໄດ້ເຫັນພຣະບິດາ ເປັນສັນໃດທ່ານຈຶ່ງກ່າວວ່າ "ຂໍສະແດງ ພຣະບິດາໃຫ້ພວກຂ້ານ້ອຍເຫັນ" ທ່ານບໍ່ເຊື່ອຫລືວ່າເຮົານີ້ຢູ່ໃນພຣະບິດາແລະພຣະບິດາຊົງຢູ່ໃນເຮົາ ຖ້ອຍຄຳທີ່ເຮົາກ່າວແກ່ທ່ານທັງຫລາຍນັ້ນເຮົາບໍ່ໄດ້ກ່າວໂດຍລຳພັງເຮົາເອງ ແຕ່ພຣະບິດາຜູ້ຊົງສະຖິດຢູ່ໃນເຮົາໄດ້ຊົງກະທຳພຣະຣາຊກິຈຂອງພຣະອົງ ຈົ່ງເຊື່ອເຮົາວ່າເຮົາຢູ່ໃນພຣະບິດາ ແລະພຣະບິດາຊົງຢູ່ໃນເຮົາ ຖ້າບໍ່ດັ່ງນັ້ນກໍຈົ່ງເຊື່ອເພາະກິຈການເຫລົ່ານັ້ນ "ເຮົາບອກທ່ານທັງຫລາຍຕາມຄວາມຈິງວ່າ ຜູ້ທີ່ເຊື່ອໃນເຮົາກໍຈະເຮັດກິຈການທີ່ເຮົາເຮັດຢູ່ນັ້ນເຫມືອນກັນ ແລະຜູ້ນັ້ນຈະເຮັດການໃຫຍ່ກວ່ານັ້ນອີກ ເພາະວ່າຝ່າຍເຮົາໄປເຖິງພຣະບິດາສິ່ງໃດ ທີ່ທ່ານທັງຫລາຍຈະຂໍໃນນາມຂອງເຮົາ ເຮົາກໍຈະເຮັດສິ່ງນັ້ນເພື່ອວ່າພຣະບິດາຈະຊົງຮັບກຽດ*

*ຕໍ່ຍົດດ້ວຍພຣະບຸດ ຖ້າທ່ານທັງຫລາຍຂໍສິ່ງໃດກັບເຮົາໃນນາມຂອງເຮົາ ຝ່າຍເຮົາກໍຈະເຮັດສິ່ງນັ້ນ"*

***ຊົງສັນຍາຈະປະທານພຣະວິນຍານບໍຣິສຸດ***

*ຖ້າທ່ານທັງຫລາຍຮັກເຮົາ ທ່ານກໍຈະຖືຮັກສາຂໍ້ບັນຍັດຂອງເຮົາ ຝ່າຍເຮົາຈະທູນຂໍພຣະບິດາ ແລະພຣະອົງຈະຊົງປະທານຜູ້ຊ່ອຍອີກຜູ້ນຶ່ງໃຫ້ແກ່ພວກທ່ານ ເພື່ອຈະຢູ່ກັບພວກທ່ານຕລອດໄປເປັນນິດ ຄືພຣະວິນຍານແຫ່ງຄວາມຈິງ ຊຶ່ງໂລກບໍ່ອາດຈະຮັບໄດ້ ເພາະໂລກບໍ່ເຫັນແລະບໍ່ຮູ້ຈັກພຣະອົງ ແຕ່ທ່ານທັງຫລາຍຮູ້ຈັກພຣະອົງ ເພາະພຣະອົງຊົງສະຖິດຢູ່ກັບພວກທ່ານ ແລະຈະປະທັບຢູ່ໃນພວກທ່ານ "ເຮົາຈະບໍ່ປະຖິ້ມທ່ານທັງຫລາຍໄວ້ໃຫ້ເປັນກໍາພ້າ ເຮົາຈະມາຫາພວກທ່ານອີກຫນ້ອຍນຶ່ງໂລກຈະບໍ່ເຫັນເຮົາ ແຕ່ພວກທ່ານຈະເຫັນເຮົາ ເພາະເຮົາເປັນຢູ່ທ່ານທັງຫລາຍກໍຈະເປັນຢູ່ເຫມືອນກັນ ໃນວັນນັ້ນທ່ານຈະຮູ້ວ່າເຮົາຢູ່ໃນພຣະບິດາຂອງເຮົາ ແລະພວກທ່ານຢູ່ໃນເຮົາ ແລະເຮົາຢູ່ໃນພວກທ່ານ ຜູ້ທີ່ມີຂໍ້ບັນຍັດຂອງເຮົາແລະຖືຂໍ້ບັນຍັດນັ້ນ ຜູ້ນັ້ນແຫລະ, ເປັນຜູ້ທີ່ຮັກເຮົາ ແລ້ວຜູ້ທີ່ຮັກເຮົາພຣະບິດາຂອງເຮົາຈະຊົງຮັກຜູ້ນັ້ນ ແລະຝ່າຍເຮົາຈະຮັກຜູ້ນັ້ນ ພ້ອມທັງຈະສະແດງຕົວເຮົາໃຫ້ແກ່ຜູ້ນັ້ນ" ຢູດາ (ບໍ່ແມ່ນອິສະກາຣີອົດ) ທູນພຣະອົງວ່າ, "ນາຍເຈົ້າເອີຍ, ເປັນດ້ວຍເຫດໃດທ່ານຈຶ່ງສະແດງຕົວໃຫ້ປາກົດແກ່ພວກຂ້ານ້ອຍແຕ່ບໍ່ໃຫ້ປາກົດແກ່ໂລກ" ພຣະເຢຊູຊົງຕອບວ່າ, "ຖ້າຜູ້ໃດຮັກເຮົາຜູ້ນັ້ນຈະຖືຮັກສາພຣະທັມຂອງເຮົາ ແລະພຣະບິດາຂອງເຮົາຈະຊົງຮັກຜູ້ນັ້ນ ແລ້ວເຮົາທັງສອງຈະມາຫາ ຜູ້ນັ້ນແລະຈະຕັ້ງຢູ່ກັບຜູ້ນັ້ນ ຜູ້ທີ່ບໍ່ຮັກເຮົາກໍບໍ່ຖືຮັກສາຖ້ອຍຄໍາທັງຫລາຍຂອງເຮົາ ພຣະທັມທີ່ທ່ານທັງຫລາຍໄດ້ຍິນນັ້ນບໍ່ແມ່ນຂອງເຮົາ ແຕ່ແມ່ນ*



*ຂອງພຣະບິດາຜູ້ຊົງໃຊ້ເຮົາມາ "ຂໍ້ຄວາມເຫລົ່ານີ້ເຮົາໄດ້ກ່າວຕໍ່ທ່ານທັງຫລາຍ ເມື່ອເຮົາຍັງຢູ່ກັບພວກທ່ານ ແຕ່ພຣະຜູ້ຊ່ອຍຄືພຣະວິນຍານບໍຣິສຸດ ທີ່ພຣະບິດາຈະຊົງໃຊ້ມາໃນນາມຂອງເຮົາ ອົງນັ້ນແຫລະ, ຈະຊົງສອນທ່ານທັງຫລາຍທຸກໆສິ່ງ ແລະຈະເຕືອນພວກທ່ານໃຫ້ລະນຶກເຖິງທຸກສິ່ງທີ່ເຮົານີ້ໄດ້ກ່າວແກ່ພວກທ່ານແລ້ວນັ້ນ ເຮົາມອບຄວາມສງົບສຸກໄວ້ກັບທ່ານທັງຫລາຍ ຝ່າຍເຮົາໃຫ້ແກ່ພວກທ່ານບໍ່ເຫມືອນໂລກໃຫ້ນັ້ນ ຢ່າໃຫ້ໃຈຂອງພວກທ່ານວຸ້ນວາຍໄປແລະຢ່າຊູ່ຢ້ານ ທ່ານທັງຫລາຍໄດ້ຍິນເຮົາກ່າວແກ່ພວກທ່ານແລ້ວວ່າ "ເຮົາຈະຈາກໄປແລະຈະກັບມາຫາພວກທ່ານ" ຖ້າພວກ ທ່ານຮັກເຮົາ ພວກທ່ານກໍຈະຊົມຊື່ນຍິນດີທີ່ເຮົາໄປຫາພຣະບິດາ ເພາະພຣະບິດາຊົງເປັນໃຫຍ່ກວ່າເຮົາ ບັດນີ້ເຮົາໄດ້ບອກທ່ານທັງຫລາຍກ່ອນເຫດການນັ້ນຈະເກີດຂຶ້ນ ເພື່ອວ່າເມື່ອເຫດການນັ້ນເກີດຂຶ້ນແລ້ວພວກທ່ານຈະໄດ້ເຊື່ອ ຕັ້ງແຕ່ນີ້ໄປເຮົາຈະບໍ່ສົນທະນາຫລາຍຄໍາກັບພວກທ່ານ ເພາະວ່າຜູ້ປົກຄອງໂລກຈະມາ ແລະຜູ້ນັ້ນບໍ່ມີສິດອັນໃດກ່ຽວກັບເຮົາແຕ່ເຮົາໄດ້ເຮັດຕາມທີ່ພຣະບິດາໄດ້ຊົງບັນຊາ ເພື່ອໂລກຈະໄດ້ຮູ້ວ່າເຮົາຮັກພຣະບິດາ ຈົ່ງລຸກຂຶ້ນ, ເຮົາທັງຫລາຍພາກັນຈາກທີ່ນັ້ນໄປເທາະ"*

**ກິຈການ 1:11** *"ສອງຄົນນັ້ນຈຶ່ງກ່າວວ່າ, "ຊາວຄາລີເລເອີຍ, ເປັນຫຍັງພວກທ່ານຈຶ່ງຢືນເບິ່ງທ້ອງຟ້າ ພຣະເຢຊູອົງນີ້ຊຶ່ງຊົງຮັບໄປຈາກພວກທ່ານຂຶ້ນເມືອສວັນແລ້ວ ຈະສະເດັດມາອີກເຫມືອນຢ່າງທີ່ພວກທ່ານໄດ້ເຫັນພຣະອົງຂຶ້ນເມືອຍັງສວັນນັ້ນ"*

## 72. ເມື່ອພຣະອົງສະເດັດມາ ພຣະອົງຈະຊົງເຮັດຫຍັງແດ່?

ຈະຊົງຕັ້ງອານາຈັກຂອງພຣະອົງຂຶ້ນ ຈະຊົງຄອບຄອງຢູ່ສືບໄປເປັນນິດ. ການພິພາກສາໂລກຈະເກີດຂຶ້ນ ທຸກຄົນທີ່ເຊື່ອແລະໄດ້ຖືກໄຖ່ແລ້ວໃນພຣະອົງກໍຈະໄດ້ພົ້ນ, ທຸກຄົນທີ່ບໍ່ເຊື່ອກໍຖືກຖິ້ມລົງໃນບຶງໄຟນະຣົກ.

**ພຣະນິມິດ 20:11-15** *"ແລ້ວຂ້າພະເຈົ້າໄດ້ເຫັນພຣະຣາຊບັນລັງໃຫຍ່ສີຂາວ ແລະເຫັນພຣະອົງຜູ້ຊົງປະທັບເທິງບັນລັງນັ້ນ ເມື່ອພຣະອົງຊົງປາກົດແຜ່ນດິນໂລກແລະທ້ອງຟ້າກໍຜ່າຍຫນີ ແລະບ່ອນຢູ່ສຳລັບແຜ່ນດິນໂລກແລະທ້ອງຟ້ານັ້ນກໍບໍ່ເຫັນອີກ ຂ້າພະເຈົ້າໄດ້ເຫັນບັນດາຜູ້ທີ່ຕາຍແລ້ວ ທັງຜູ້ໃຫຍ່ແລະຜູ້ນ້ອຍຢືນຢູ່ຕໍ່ຫນ້າພຣະຣາຊບັນລັງນັ້ນ ແລະຫນັງສືຕ່າງໆກໍໄຂອອກ ມີຫນັງສືອີກເຫລັ້ມນຶ່ງກໍໄຂອອກ ຄືທະບຽນແຫ່ງຊີວິດ ແລະຄົນທັງຫລາຍທີ່ຕາຍແລ້ວກໍຖືກຊົງພິພາກສາ ຕາມການປະຕິບັດຂອງເຂົາທີ່ຂຽນໄວ້ໃນຫນັງສືເຫລົ່ານັ້ນ ທະເລສົ່ງຄົນທັງຫລາຍທີ່ຕາຍໃນທະເລຄືນ ຄວາມຕາຍແລະແດນມໍຣະນາກໍສົ່ງຄົນທັງຫລາຍທີ່ຢູ່ໃນແດນນັ້ນຄືນ ເຂົາທັງປວງກໍຖືກຊົງພິພາກສາຕາມການປະຕິບັດຂອງຕົນທຸກຄົນ ຄວາມຕາຍແລະແດນມໍຣະນາກໍຖືກຖິ້ມລົງໃນບຶງໄຟ ບຶງໄຟນີ້ແຫລະ, ເປັນຄວາມຕາຍຄັ້ງທີ່ສອງ ຖ້າຜູ້ໃດບໍ່ມີຊື່ຈົດໄວ້ໃນທະບຽນແຫ່ງຊີວິດ"*

**ພຣະນິມິດ11:15** *"ເມື່ອເທວະດາຕົນທີ່ເຈັດໄດ້ເປົ່າແກຂຶ້ນແລ້ວ ມີຫລາຍສຽງໃນສວັນກ່າວດັງຂຶ້ນວ່າ, "ຣາຊອານາຈັກແຫ່ງພິພົບນີ້ ໄດ້ກາຍເປັນກຳມະສິດແຫ່ງອົງພຣະຜູ້ເປັນເຈົ້າຂອງເຮົາທັງຫລາຍ ແລະເປັນຂອງພຣະຄຣິດຂອງພຣະອົງ ພຣະອົງຈະຊົງສເວີຍຣາດຕລອດໄປເປັນນິດ"*



**ພຣະນິມິດ19:6** *"ແລ້ວຂ້າພະເຈົ້າໄດ້ຍິນເຫມືອນສຽງຄົນຈຳນວນຫລວງຫລາຍ ເຫມືອນສຽງນ້ຳຫລາຍ ແລະເຫມືອນສຽງຟ້າຮ້ອງສຽງແຮງກ້າວ່າ, "ອາເລລູຢາ ເພາະວ່າອົງພຣະຜູ້ເປັນເຈົ້າ ພຣະເຈົ້າຂອງພວກເຮົາ ຜູ້ຊົງຣິດທານຸພາບອັນສູງສຸດໄດ້ຊົງຂຶ້ນສເວີຍຣາຊແລ້ວ"*

## *"ແນ່ນອນ ເຮົາຈະມາໄວໆນີ້."*

ອາແມນ ພຣະເຢຊູຄຣິສເຈົ້າເຊີນສະເດັດມາເທີນ.

**ພຣະນິມິດ 22:20** *"ພຣະອົງຜູ້ຊົງເປັນພຍານໃນເຫດການເຫລົ່ານີ້ຊົງກ່າວວ່າ, "ແນ່ນອນ ເຮົາຈະມາໃນໄວໆນີ້"*

## *ດ້ວຍຄວາມປາຖນາດີ*

## *ຈາກ: ສຈ. ດຣ. ເຈມສ໌ ອຸດົມ*